# ຖະແຫຼງການໂດຍສາດສະດາຈານ ຟີລິບ ອາລສະຕອນ, ຜູ້ລາຍງານພິເສດຂອງສະຫະປະຊາຊາດ ວ່າດ້ວຍ ຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸດ ຈາກການມາຢ້ຽມຢາມ ສປປ ລາວ ຂອງທ່ານ ໃນລະຫວ່າງວັນທີ 17-28 ມີນາ 2019

ທີ່ນະຄອນຫຼວງວຽງຈັນ, 28 ມີນາ 2019

## 1. ພາກສະເໜີ

ໃນເອກະສານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີຄວາມຄືບໜ້າຫຼາຍໃນດ້ານການຫຼຸດຜ່ອນຄວາມທຸກຍາກ ໃນໄລຍະທົດສະວັດທີ່ຜ່ານໆມາ. ແລະພາຍຫຼັງໄລຍະເວລາຫຼາຍກວ່າ ຊາວປີ ໃນການພະຍາຍາມທີ່ຈະຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດ "ດ້ອຍພັດທະນາ", ແລະ ຮັກສາໄດ້ການຂະຫຍາຍຕົວທາງດ້ານ GDP ໃນລະດັບ 6.5 ເປີເຊັນ ນັບແຕ່ປີ 2005,[1]ປະເທດວາງຄາດໝາຍໃຫ້ຫຼຸດພົ້ນໃນປີ 2024.[2]ການຂະຫຍາຍຕົວທີ່ກ້າວໜ້ານີ້ ບັນລຸໄດ້ສ່ວນຫຼາຍແມ່ນຜ່ານ ການຊຸກຍູ້ການລົງທຶນຕ່າງປະເທດ, ໂດຍສະເພາະໃນການຂຸດຄົ້ນບໍ່ແຮ່, ໄຟຟ້າພະລັງນໍ້າ ແລະ ກະສິກໍາ.

ເຖິງແນວໃດກໍ່ຕາມ, ເບື້ອງຫຼັງຂອງຄວາມສໍາເລັດທີ່ພົ້ນເດັ່ນຄືດັ່ງກ່າວ ຍັງມີຄວາມເປັນຈິງທີ່ສະຫຼັບສັບຊ້ອນ ແລະ ທີ່ເປັນບັນຫາ ຢູ່ຫຼາຍ. ແຕກຕ່າງຈາກຫຼາຍປະເທດອື່ນໆ, ການຂະຫຍາຍຕົວທາງດ້ານເສດຖະກິດທີ່ໄວວາ ຂອງ ສສປ ລາວ ບໍ່ໄດ້ນໍາໄປສູ່ ການຫຼຸດຜ່ອນຄວາມທຸກຍາກໃນລະດັບທີ່ເທົ່າທຽມກັນ. ຈຸດສຸມຂອງລັດຖະບານທີ່ມີລັກສະນະແບບເບິ່ງແຕ່ດ້ານດຽວ ທີ່ສຸມໃສ່ໂຄງການກໍ່ສ້າງໂຄງລ່າງພື້ນຖານຂະໜາດໃຫຍ່ (ເຊັ່ນ: ເຂື່ອນໄຟຟ້າ ແລະ ເສັ້ນທາງລົດໄຟ), ການຄອບຄອງທີ່ດິນ, ການຂຸດຄົ້ນຊັບພະຍາກອນທໍາມະຊາດ ແລະ ການລົງທຶນຕ່າງປະເທດ ໄດ້ສ້າງວຽກເຮັດງານທໍາຈໍານວນໜ້ອຍຫຼາຍໃຫ້ແກ່ປະຊາຊົນລາວ, ແຕ່ສ້າງພັນທະທີ່ຕ້ອງຈ່າຍແທນຄືນໜີ້ສິນກ້ອນໃຫຍ່ຫຼວງທີ່ສຸດ ແລະ ກະຈ້າຍຜົນປະໂຫຍດຢ່າງບໍ່ເທົ່າທຽມກັນ ເອື້ອໃຫ້ແຕ່ ກຸ່ມຄົນຊັ້ນສູງທີ່ຮັ່ງມີຢູ່ແລ້ວ. ຜູ້ທີ່ດໍາລົງຊີວິດຢູ່ພາຍໃຕ້ຄວາມທຸກຍາກ, ຊົນເຜົ່າສ່ວນນ້ອຍ ແລະ ປະຊາຊົນທີ່ຢູ່ເຂດຊົນນະບົດ ໄດ້ຜົນເຫັນຜົນປະໂຫຍດພຽງເລັກນ້ອຍ ຈາກຄວາມຮຸ່ງເຮືອງທາງດ້ານເສດຖະກິດ.

ເອກະສານທາງການສະບັບທີ່ຈັດພິມໃນຫວ່າງມໍ່ໆນີ້ ສັງຮວມແນວໂນ້ມເຫຼົ່ານີ້ໄດ້ຢ່າງສົມບູນແບບຄື:

> "ໃນຂະນະທີ່ບັນຫາຜູ້ປະກອບການທຸລະກິດ ແລະ ນັກທຸລະກິດທີ່ມີເສັ້ນມີເຄືອຂ່າຍທີ່ດີ ສາມາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍທາງດ້ານເສດຖະກິດໃນປັດຈຸບັນ, ເຊິ່ງສ້າງໃຫ້ມີກຸ່ມຄົນຊັ້ນສູງຈໍານວນໜ້ອຍໜຶ່ງທີ່ຮັ່ງມີຫຼາຍ ແລະ ກຸ່ມີຄົນຊົນຊັ້ນປານກາງທີ່ມີຖານະດີ, ແຕ່ປະຊາຊົນທີ່ທຸກຍາກຈໍານວນຫຼາຍ ສູນເສຍທີ່ດິນ ແລະ ສູນເສຍການເຂົ້າເຖິງຊັບພະຍາກອນທໍາມະຊາດທີ່ສໍາຄັນຕໍ່ການດໍາລົງຊີວິດຂອງເຂົາເຈົ້າ, ເຊິ່ງສົ່ງຜົນໃຫ້ມີຄວາມແຕກໂຕນດ້ານຖານະເພີ່ມຂຶ້ນໃນທົ່ວປະເທດ. ຕົວຈິງແລ້ວ ການສືບຕໍ່ຫັນປ່ຽນດິນຈາກທີ່ເປັນກໍາມະສິດສ່ວນຕົວຂອງຄົວເຮືອນ ໄປໃຫ້ບັນດາບໍລິສັດແມ່ນປັດໄຈຜັກດັນຕົ້ນຕໍ ໃຫ້ມີຮູບແບບຄວາມທຸກຍາກແບບໃໝ່ໃນເຂດຊົນນະບົດ, ສ້າງໃຫ້ມີກຸ່ມຄົນທຸກຍາກກຸ່ມໃໝ່ທີ່ໄຮ້ທີ່ດິນເກີດຂຶ້ນ."[3]

---

[1]ບົດລາຍງານຂອງທະນາຄານໂລກ, "GDP growth (annual %) Lao PDR," https://data.worldbank.org/indicator/NY.GDP.MKTP.KD.ZG?locations=LA.

[2]ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), "Lao PDR's eligibility for graduation from LDC status confirmed," March 2018,www.la.undp.org/content/lao_pdr/en/home/presscenter/pressreleases/2018/3/19/lao-pdr_s-eligibility-for-graduation-from-least-developed-countr/.

[3]ສູນສະຖິຕິແຫ່ງຊາດao Statistics Bureau, Centre for Development and Environment, and University of Bern, "Social Economic Atlas of the Lao PDR: Patterns and Trends from 2005-2015," 2018, p. 116.

ເນື່ອງຈາກວ່າ ການລັກລອບຕັດໄມ້ແບບຜິດກົດໝາຍຫຼຸດລົງ ແລະ ບໍ່ແຮ່ຂະໜາດໃຫຍ່ສອງແຫ່ງຂອງປະເທດ ຈະປິດລົງໃນປີ 2021,[4] ເສດຖະກິດຈະໄດ້ອາໄສອຸດສາຫະກຳປຸງແຕ່ງ ແລະ ການບໍລິການຫຼາຍຂຶ້ນກວ່າເກົ່າ, ແຕ່ກໍ່ເປັນທີ່ຮັບຮູ້ກັນໃນວົງກວ້າງວ່າ ກຳລັງແຮງງານທີ່ມີທັກສະທີ່ຈຳເປັນ ສຳລັບ ການຂ້າມຜ່ານຄືດັ່ງກ່າວນັ້ນ ແມ່ນຍັງຂາດເຂີນຫຼາຍ. ສິ່ງນີ້ສະທ້ອນໃຫ້ເຫັນເຖິງ ຄວາມລົ້ມເຫຼວໃນການລົງທຶນຢ່າງພຽງພໍໃສ່ ດ້ານສາທາລະນະສຸກ, ການສຶກສາ, ຄວາມຢູ່ດີກິນດີຂອງເດັກນ້ອຍ, ເຂດຊົນນະບົດ ແລະ ການລຶບລ້າງຄວາມທຸກຍາກ.

ຍິ່ງໄກຈາກການໃຫ້ຄຳຕອບດ້ານຄວາມທຸກຍາກ, ຍຸດທະສາດດ້ານການພັດທະນາເສດຖະກິດ ຂອງ ສປປ ລາວ ສ່ວນຫຼາຍ ທຳລາຍຊີວິດການເປັນຢູ່, ສ້າງ ຫຼື ເພີ່ມຄວາມອ່ອນແອ ແລະ ນຳໄປສູ່ຄວາມທຸກຍາກເພີ່ມຂຶ້ນ ໃຫ້ແກ່ຫຼາຍກຸ່ມ. ກົງກັນຂ້າມ ບາງວິທີການໃນການລຶບລ້າງຄວາມທຸກຍາກ ສ້າງຄວາມລຳອຽງດ້ານສິດທິມະນຸດຂອງຜູ້ທຸກຍາກ ແລະ ປະຊາຊົນຜູ້ດ້ອຍໂອກາດ. ໃນຂະນະດຽວກັນ, ປະເທດບໍ່ໄດ້ພັດທະນາລະບົບປົກປ້ອງທາງສັງຄົມທີ່ເຂັ້ມແຂງ ເພື່ອສະໜັບສະໜູນຄົນຈຳນວນຫຼາຍທີ່ຖືກ ການຂ້າມຜ່ານຂອງເສດຖະກິດປະຖິ້ມຢູ່ທາງຫຼັງ. ດ້ວຍການເນັ້ນໃສ່ ການເຕົ້າໂຮມການຂະຫຍາຍຕົວທາງດ້ານເສດຖະກິດ ຫຼາຍກວ່າການຫຼຸດຜ່ອນຄວາມທຸກຍາກ, ການປົກປ້ອງທາງສັງຄົມ, ການສ້າງວຽກເຮັດງານທຳ ແລະ ຄວາມຍືດຍຸ່ນທາງດ້ານ ເສດຖະກິດ-ສັງຄົມ, ລັດຖະບານສາມາດບັນລຸໄດ້ໂຕເລກ GDP ທີ່ໜ້າປະທັບໃຈ ແຕ່ໃນເວລາດຽວກັນ ກໍ່ລົ້ມເຫຼວບໍ່ສາມາດ ເຮັດໃຫ້ມີການປ່ຽນແປງທີ່ມີຄວາມໝາຍ ໃນຊີວິດການເປັນຢູ່ຂອງຄົນຈຳນວນຫຼວງຫຼາຍທີ່ຍັງຢູ່ໃນຄວາມທຸກຍາກ.

ອຸປະສັກດ້ານໂຄງສ້າງທີ່ຢັ່ງຮາກເລິກ ກີດຂວາງບໍ່ໃຫ້ປະຊາຊົນທີ່ຢູ່ຄວາມທຸກຍາກບໍ່ສາມາດຮຽກຮ້ອງສິດທິມະນຸດຂອງເຂົາເຈົ້າ ໄດ້ຢ່າງເຕັມສ່ວນ. ແມ່ຍິງທຸກຍາກ ທີ່ຕ້ອງຟັນຝ່າຄວາມເຊື່ອ ແລະ ສະຖາບັນທີ່ມີລັກສະນະ ແບບບິດາສິດທິລາດ(patriarchal), ຍັງຖືກປິດກັ້ນ ຈາກຂະບວນການຕັດສິນໃຈຕ່າງໆ ເປັນປະຈຳ ລວມທັງການຕັດສິນໃຈທີ່ມີຜົນກະທົບຫຼາຍຕໍ່ຊີວິດຂອງເຂົາເຈົ້າ ແລະ ຍັງມີຄວາມເສຍປຽບຫຼາຍ ໃນດ້ານການສຶກສາ, ການເຂົ້າເຖິງການເຮັດວຽກໃນຂະແໜງການທີ່ເປັນທາງການ ແລະ ຕຳແໜ່ງອຳນາດການປົກຄອງ. ຊົນເຜົ່າສ່ວນນ້ອຍ ແລະ ຄົນດັ່ງເດີມ ສືບຕໍ່ພົບກັບຄວາມທຸກຍາກ ໃນອັດຕາສ່ວນທີ່ສູງກວ່າ ເຜົ່າ ລາວ-ໄຕ ທີ່ເປັນກຸ່ມຄົນສ່ວນໃຫຍ່. ປະຊາຊົນໃນເຂດຊົນນະບົດ ຖືກປະຖິ້ມໄວ້ເບື້ອງຫຼັງໂດຍຄວາມຄືບໜ້າທາງດ້ານເສດຖະກິດ ແລະ ກວມເອົາເຖິງ 90 ເປີເຊັນຂອງກຸ່ມຄົນຜູ້ທຸກຍາກ.[5]ໃນການໄປຢ້ຽມຢາມຂອງຂ້າພະເຈົ້າໄປຍັງວຽງຈັນ, ອັດຕະປື, ຈຳປາສັກ, ຊຽງຂວາງ ແລະ ຫົວພັນ, ຂ້າພະເຈົ້າຕ້ອງພົບກັບຄວາມປະຫຼາດໃຈ ຈາກຄວາມຮ້າຍແຮງຂອງສິ່ງທ້າທາຍເຫຼົ່ານີ້.

ບໍ່ມີບ່ອນໃດທີ່ເຫັນໄດ້ເດັ່ນຊັດກວ່າຢູ່ອັດຕະປືອີກແລ້ວ, ບ່ອນທີ່ຂ້າພະເຈົ້າໄປຢ້ຽມຢາມແຄ້ມພັກເຊົາຊົ່ວຄາວຂອງຜູ້ລອດຊີວິດຈາກເຫດການເພພັງຂອງເຂື່ອນເຊປຽນ-ເຊນ້ຳນ້ອຍໃນປີ 2018 - ຫາດຍາວ, ຕະເມາະຢອດ ແລະ ດົງບາມ - ເຊັ່ນດຽວກັນກັບ ບ້ານທີ່ຖືກທຳລາຍຈາກການເພພັງດັ່ງກ່າວອີກບ້ານໜຶ່ງ ຄື: ບ້ານໃໝ່. ຂ້າພະເຈົ້າໄດ້ເຫັນ ເຖິງຄວາມເຂັ້ມແຂງ ແລະ ຄວາມກ້າຫານ ຂອງຜູ້ທີ່ຖືກຜົນກະທົບຈາກໄພພິບັດດັ່ງກ່າວ ແລະ ເຫັນດ້ວຍຕົນເອງ ເຖິງເງື່ອນໄຂການດຳລົງຊີວິດທີ່ເຮັດໃຫ້ໝົດກຳລັງໃຈທີ່ປະຊາຊົນຈະຕ້ອງສືບຕໍ່ທົນຕໍ່ໄປອີກຢ່າງໜ້ອຍ 3 ປີ ແລະ ອາດເປັນໄປໄດ້ວ່າຈະດົນກວ່ານັ້ນ. ທີ່ເມືອງຫົວເມືອງ ຂອງ ແຂວງຫົວພັນ, ຂ້າພະເຈົ້າໄດ້ໄປຢ້ຽມຢາມບ້ານ ຜານາງ, ຜາກະຕ່າຍ ແລະ ບ້ານ ມອນ ແລະ ໄດ້ພົບກັບຊຸມຊົນ ຜູ້ທີ່ມີຄວາມ ຈຳເປັນດ້ານພື້ນຖານແທ້ໆເຊັ່ນ: ໄຟຟ້າ ສຳລັບບ້ານ, ມີຄວາມຈຳເປັນດ້ານນ້ຳ ແລະ ເສັ້ນທາງເຂົ້າເຖິງທີ່ຢູ່ໃນສະພາບທີ່ທຽວໄດ້ ໃນລະດູຝົນ. ຂ້າພເຈົ້າໄດ້ພົບກັບພະນັກງານສາທາລະນະສຸກ, ຊາວກະສິກອນ, ຊ່າງຕໍ່າຫູກ, ຄູສອນ, ຄະນະພັດທະນາການສຶກສາ ຂັ້ນບ້ານ, ຕາງໜ້າສະຫະພັນແມ່ຍິງ ແລະ ຄະນະບ້ານ ເພີ່ມຕື່ມໃສ່ກັບພະນັກງານລັດຢູ່ຂັ້ນເມືອງ, ແຂວງ ແລະ ຂັ້ນສູນກາງ.

---

[4]ການປະຊຸມກັບກະຊວງພະລັງງານແລະບໍ່ແຮ່, ເດືອນມີນາວັນທີ27, 2019.

[5]ບົດລາຍງານຂອງທະນາຄານໂລກ, “Poverty Profile in Lao PDR,” 2014, http://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf p. 9.

ທາງດ້ານສະພາບການຢູ່ອັດຕະປື, ແຕ່ກໍ່ໂດຍທົ່ວໄປແລ້ວ ກໍ່ກ່ຽວກັບວິທີການໂດຍລວມຂອງລັດຖະບານ ເຫັນໄດ້ວ່າ ມີສິ່ງໜຶ່ງທີ່ພົ້ນເດັ່ນ. ນັ້ນແມ່ນຄວາມແຕກຕ່າງຢ່າງຂາດຂັ້ນລະຫວ່າງ ທິດສະດີ ແລະ ຕົວຈິງ. ກ່ຽວກັບອັດຕະປື, ພະນັກງານລະດັບອາວຸໂສຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ພັນລະນາສະພາບເງື່ອນໄຂຢ່າງລະອຽດ ແລະ ພັນລະນາອອກມາເປັນທາງບວກຫຼາຍ ເຊິ່ງ ເປັນເງື່ອນໄຂໃນການຊີ້ນຳວຽກງານການຍົກຍ້າຍຈັດສັນ ແລະ ຮັບປະກັນໃຫ້ມີໂອກາດດ້ານການດຳລົງຊີວິດທີ່ດີຂຶ້ນ. ໃນພາກ ຕົວຈິງ, ຂ້າພະເຈົ້າເຫັນ ແລະ ໄດ້ຍິນສິ່ງທີ່ບໍ່ຄ້າຍຄືກັບຄຳພັນລະນານັ້ນເລີຍ. ໂດຍທົ່ວໄປແລ້ວ, ລັດຖະບານສ້າງໄດ້ບັນດາລະບຽບ ກົດໝາຍຕ່າງໆໄດ້ຫຼາຍສະບັບທີ່ດີທີ່ໜ້າປະທັບໃຈຫຼາຍ ແລະ ໄດ້ຮັບຮອງເອົາຖະແຫຼງການດ້ານນະໂຍບາຍຕ່າງໆທີ່ລະອຽດ, ເຊິ່ງສ່ວນຫຼາຍ ກໍ່ແມ່ນຮ່ວມກັບຄູ່ຮ່ວມງານຕ່າງປະເທດ. ແຕ່ວ່າ ສ່ວນຫຼາຍຍັງຂາດການຈັດຕັ້ງປະຕິບັດທີ່ມີຄວາມໝາຍ. ມີການຕັ້ງໂຄຕ້າ ແຕ່ບໍ່ມີການບັງຄັບໃຊ້, ມີການຕັ້ງເງື່ອນໄຂຄວບຄູ່ມາ ແຕ່ບໍ່ມີການຕິດຕາມກວດກາ, ມີການປະກາດໃຊ້ວິທີການ ໃໝ່ໆ ແຕ່ການເຮັດວຽກກໍ່ສືບຕໍ່ດຳເນີນໄປແບບເດີມໆຄືເກົ່າ.

ຄວາມບໍ່ເຊື່ອມຕໍ່ນີ້ ສ່ວນຫຼາຍແມ່ນເນື່ອງມາຈາກ ການທີ່ພັກຍັງຄົງຢືນຢັນໜັກແໜ້ນວ່າ ຕ້ອງຍັງຄົງເປັນຜູ້ຄວບຄຸມທາງສຽງຂອງມວນຊົນ, ການຂາດຄວາມໂປ່ງໃສທີ່ຍັງຄົງເປັນໄປຢ່າງຕໍ່ເນື່ອງໃນຫຼາຍຂົງເຂດ, ຄວາມລັງເລ ທີ່ຈະອະນຸຍາດໃຫ້ມີການວິຈານ, ຂາດກົນໄກການຮ້ອງຮຽນທີ່ມີຄວາມໝາຍ, ຄວາມຈຳກັດຂອງລະບົບຕຸລາການສຳລັບ ປະເດັນ ໃດກໍ່ຕາມທີ່ກ່ຽວຂ້ອງກັບສິດທິມະນຸດ, ການຄຸ້ມຄອງຢ່າງຮອບດ້ານຂອງລັດຖະບານຕໍ່ສື່ມວນຊົນ, ລະບຽບການທີ່ເຄັ່ງຄັດ ຕໍ່ທຸກອົງການຈັດຕັ້ງພາກປະຊາສັງຄົມເອກະລາດທີ່ມີທ່າແຮງ ແລະ ຄວາມຈຳກັດຂອງລະບົບຕຸລາການ ສຳລັບສິ່ງໃດກໍ່ຕາມທີ່ກ່ຽວຂ້ອງກັບສິດທິຂອງປະຊາຊົນ, ການຄຸ້ມຄອງສື່ຢ່າງຮອບດ້ານຂອງລັດ, ລະບຽບການທີ່ເຄັ່ງຄັດຕໍ່ອົງການຈັດຕັ້ງພາກປະຊາສັງຄົມທີ່ເປັນເອກະລາດ ແລະ ມີການຍຶດຕິດ ຢ່າງໜຽວແໜ້ນກັບການຊ່ວຍເຫຼືອຂອງຕ່າງປະເທດ.ໝາກຜົນກໍ່ຄືວ່າ ຄວາມພະຍາຍາມທີ່ຈະສົ່ງເສີມໃຫ້ມີການປຶກສາຫາລືທີ່ມີຄວາມໝາຍ, ເພື່ອຊຸກຍູ້ການມີສ່ວນຮ່ວມເຂົ້າໃນ ການຕັດສິນໃຈ, ເພື່ອເກັບກຳເອົາລາຍການຄຳແນະນຳ ແລະ ການວິຈານທີ່ຈິງໃຈ ຫຼື ເພື່ອສະເໜີວິທີການທີ່ເປັນທາງເລືອກອື່ນໆ ທັງໝົດເຫຼົ່ານີ້ ແມ່ນເຮັດໄດ້ຍາກຫຼາຍ ຫຼື ບໍ່ກໍ່ເປັນໄປບໍ່ໄດ້.

ຄວາມຫຍຸ້ງຍາກຂອງອົງການຈັດຕັ້ງພາກປະຊາສັງຄົມ ບາງເທື່ອແມ່ນການສະແດງອອກໃຫ້ເຫັນເຖິງບັນຫານີ້ ໄດ້ຢ່າງຊັດເຈນ. ລັດຖະບານ ມີເອທີປິດຂັ້ນທີ່ມີປະສິດທິຜົນຫຼາຍ ສຳລັບປິດຂັ້ນການສົນທະນາ ແລະ ປິດຂັ້ນຄວາມຮັບຜິດຊອບທີ່ກ້າວໜ້າ. ກຸ່ມຕ່າງໆທັງໝົດຂອງລາວ ຮຽກຮ້ອງໃຫ້ຕ້ອງໄດ້ຈົດທະບຽນ ເປັນ “ສະມາຄົມທີ່ບໍ່ຫວັງຜົນກຳໄລ (non-profit associations)” (ຫຼື ເອີ້ນຫຍໍ້ວ່າ NPAs) ແລະ ຄຽງຄູ່ກັບອົງການທີ່ບໍ່ແມ່ນລັດຖະບານສາກົນ (INGOs) ແມ່ນຢູ່ພາຍໃຕ້ລະບຽບການທີ່ເຄັ່ງຄັດ ແລະ ມີການຕິດຕາມກວດກາຢ່າງຮອບດ້ານ. ນອກນັ້ນ, ກໍ່ມີກໍລະນີທີ່ໂດ່ງດັງ ຂອງ ການຂົ່ມຂູ່, ການຈັບກຸມ ແລະ ການຫາຍສາບສູນຂອງ ບຸກຄົນຜູ້ທີ່ພະຍາຍາມຜັກດັນຕໍ່ຕ້ານພຽງເລັກຕໍ່ກັບກົງຈັກລວມ(envelope) ເຊິ່ງເປັນການສົ່ງຂໍ້ຄວາມທີ່ເຢືອກເຢັນ ແລະ ທີ່ມີປະສິດທິຜົນສູງໄປຍັງຜູ້ຄົນຜູ້ທີ່ຕ້ອງການປະກອບສ່ວນເຂົ້າໃນການແກ້ໄຂບັນຫາທີ່ສຳຄັນ ແລະ ທີ່ສະຫຼັບສັບຊ້ອນຂອງມວນຊົນ. ຈຸດສຸມທີ່ເບິ່ງແຕ່ດ້ານດຽວ ຕໍ່ກັບການຮັກສາອຳນາດ ແລະ ການຄວບຄຸມທາງສຽງຂອງມວນຊົນ ໄດ້ເກືອດຫ້າມການສົນທະນາທີ່ສຳຄັນ ແລະ ເປັນການປຸ້ນສະດົມການອອກສຽງທີ່ມີຄວາມໝາຍຈາກປະຊາຊົນລາວ ບໍ່ໃຫ້ໄດ້ເຂົ້າຮ່ວມໃນການແກ້ໄຂບັນຫາທີ່ແຜ່ລາມໃນສັງຄົມ. ເຖິງແມ່ນວ່າ ບັນຫາເຫຼົ່ານີ້ເບິ່ງຄືວ່າຈະຈາງຫາຍອອກໄປນອກວົງລັດສະໝີຂອງອົງການຈັດຕັ້ງຫຼັກໆວ່າດ້ວຍສິດທິມະນຸດ ແລະ ສື່ມວນຊົນທົ່ວໄປ, ບັນດາອົງການສະຫະປະຊາຊາດ ທີ່ຮັບຜິດຊອບດ້ານສົນທິສັນຍາ ກໍ່ໄດ້ອ້າງອີງຢ່າງຈະແຈ້ງໃສ່ບັນຫາເຫຼົ່ານີ້ ແຕ່ມາຮອດປັດຈຸບັນ ກໍ່ປັດສະຈາກຜົນສະທ້ອນທີ່ສຳຄັນໃດໆ.

ຄູ່ຮ່ວມພັດທະນາຕ່າງໆ ຂອງ ສປປ ລາວ, ລວມທັງອົງການການເງິນສາກົນ ແລະ ແຜນງານຕ່າງໆ ຂອງ ສະຫະປະຊາຊາດ, ບັນດາກອງທຶນ ແລະ ອົງການຈັດຕັ້ງຕ່າງໆ ເຊັ່ນດຽວກັນກັບ ຄູ່ຮ່ວມພັດທະນາຮ່ວມມືສອງຝ່າຍຕ່າງໆ ກໍ່ຫັນເຫອອກຈາກບັນຫາ ສ່ວນຫຼາຍເຫຼົ່ານີ້ຢ່າງລະມັດລະວັງ. ຫຼັງຈາກມີໂຄງການທົດລອງມາແລ້ວນັບບໍ່ຖ້ວນ, ທຶນຊ່ວຍເຫຼືອພັດທະນາທີ່ເປັນທາງການ ຫຼາຍຕື້ໂດລາ ແລະ ແຜນງານການຊ່ວຍເຫຼືອດ້ານວິຊາການຈຳນວນຫຼວງຫຼາຍ, ແຕ່ຜົນກະທົບຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ

ຜົນກະທົບຕໍ່ການນັບຖືສິດທິມະນຸດ ກໍ່ປະກົດວ່າເປັນທີ່ໜ້າຜິດຫວັງທີ່ສຸດ. ຄູ່ສົນທະນາຫຼາຍຄົນແນະນໍາຂ້າພະເຈົ້າວ່າ ສະຫະປະຊາຊາດ ໃນ ສປປ ລາວ ສ່ວນຫຼາຍແລ້ວລົ້ມເຫຼວໃນການທີ່ຈະ ເປັນກະບອກສຽງໃຫ້ແກ່ຜູ້ອ່ອນແອ ຍັງບໍ່ເວົ້າເຖິງວ່າຈະເປັນກະບອກສຽງ ສໍາລັບດ້ານສິດທິມະນຸດ ແລະ ອົງການຍັງສົ່ງເສີມພາບພົດຜົນສໍາເລັດຂອງປະເທດແບບເບິ່ງໂລກໃນແງ່ດີເກີນໄປ ເຊິ່ງໃນຂະນະດຽວກັນ ກໍ່ຫຼີກລ່ຽງບັນຫາສ່ວນຫຼາຍ ທີ່ອົງການເອງ ແລະ ລັດຖະບານເຫັນວ່າເປັນ "ບັນຫາອ່ອນໄຫວ." ນະໂຍບາຍທີ່ອົງການສະຫະ ປະຊາຊາດເຊີດຊູ ຄື "ສິດທິມາກ່ອນ (Rights Up Front)" ແຕ່ເບິ່ງຄືວ່າເປັນນະໂຍບາຍ "ສິດທິແມ່ນເອົາອອກຫ່າງໄປຈາກສາຍຕາ (Rights out of Sight)" ຫຼາຍກວ່າ ໃນ ສປປ ລາວ.

ໂດຍລວມແລ້ວ, ຄູ່ຮ່ວມພັດທະນາ ຈໍາເປັນຕ້ອງລະມັດລະວັງໃນການນໍາໃຊ້ວິທີການຕ່າງໆ ໂດຍໃຫ້ບຸລິມະສິດແກ່ ສາຍພົວພັນດ້ານການທູດທີ່ຄ່ອງໂຕ ເໜືອກວ່າການສະໜອງການວິເຄາະ ແລະ ການສະໜັບສະໜູນທີ່ມີຄວາມໝາຍໃນຂົງເຂດທີ່ເຫັນໄດ້ຈະແຈ້ງວ່າ ພຶດທະຍາ (ຄວາມຮອບຮູ້) ແມ່ນໃຊ້ການບໍ່ໄດ້. ໃນສະຖານະການສ່ວນຫຼາຍ, ຄວາມລົ້ມເຫຼວໃນການສະໜອງຄໍາເຫັນຕິຊົມທີ່ກ້າວໜ້າ ແລະ ການເຂົ້າ ໄປມີສ່ວນຮ່ວມຮ່ວມໃນການສົນທະນາທີ່ຈິງໃຈນັ້ນ ເປັນການທີ່ບໍ່ຊ່ວຍປະຊາຊົນລາວ ແລະ ລັດຖະບານລາວ. ມັນສາມາດນໍາໄປ ສູ່ຄວາມລົ້ມເຫຼວຂອງວິໄສທັດ, ຈຸດສຸມໃສ່ມາດຖານທີ່ຜິດ, ການວາງຄວາມເພິ່ງພໍໃຈຢ່າງຜິດບ່ອນໃສ່ການປັບປຸງພຽງເລັກນ້ອຍ ແລະ ການຕັດແຍກປະຊາຊົນລາວຢ່າງມີປະສິດທິຜົນ ອອກຈາກດ້ານທີ່ສໍາຄັນຂອງການສົນທະນາດ້ານການພັດທະນາໂດຍລວມ.

ມັນບໍ່ຈໍາເປັນຕ້ອງເປັນໄປໃນວິທີທາງນີ້. ສປປ ລາວ ຮັ່ງມີທາງດ້ານຊັບພະຍາກອນທໍາມະຊາດ ແລະ ມີປະຊາຊົນທີ່ຫຼາກຫຼາຍ, ທີ່ໜຸ່ມນ້ອຍ. ຂ້າພະເຈົ້າໄດ້ພົບກັບຄົນລາວ ທີ່ເຮັດວຽກສ້າງຜົນງານທີ່ໜ້າປະທັບໃຈ, ທີ່ຕ້ອງພົບຄວາມຍາກລໍາບາກ ໃນການພະຍາຍາມດໍາເນີນງານໃນເວທີທາງສັງຄົມທີ່ຈໍາກັດ ຫຼື ສະໜອງການບໍລິການດ້ານສາທາລະນະສຸກ ແລະ ດ້ານການສຶກສາ ໃນເຂດຊົນນະບົດຫ່າງໄກສອກຫຼີກ ດ້ວຍຊັບພະຍາກອນທີ່ຈໍາກັດ ແລະ ການຈ່າຍເງິນເດືອນທີ່ບໍ່ແນ່ນອນ. ຂ້າພະເຈົ້າຍັງໄດ້ພົບກັບພະນັກງານລັດຈໍານວນຫຼາຍ ຜູ້ທີ່ເຫັນໄດ້ຢ່າງຊັດເຈນວ່າເປັນຜູ້ອຸທິດຕົນ ແລະ ກະຕືລືລົ້ນທີ່ຈະຊອກຫາວິທີທາງທີ່ມີປະສິດທິຜົນ ແລະ ໃນຊຸມປີມໍ່ໆມານີ້ ລັດຖະບານກໍ່ໄດ້ເຂົ້າຮ່ວມໃນວິທີທາງທີ່ກ້າວໜ້າກວ່າເກົ່າ ກັບລະບົບສິດທິມະນຸດຂອງ ສະຫະ ປະຊາຊາດ. ຖ້າລັດຖະບານ ສາມາດຊຸກຍູ້ໃຫ້ມີການຮັບຮອງເອົານະໂຍບາຍວ່າດ້ວຍຄວາມໂປ່ງໃສ, ການມີສ່ວນຮ່ວມທີ່ມີ ຄວາມໝາຍ ແລະ ການປຶກສາຫາລືທີ່ຈິງໃຈຂອງມວນຊົນ, ກໍ່ຈະສາມາດບັນລຸໄດ້ຫຼາຍ ໃນດ້ານການສົ່ງເສີມການພັດທະນາ ແບບຍືນຍົງ ແລະ ການລຶບລ້າງຄວາມທຸກຍາກ.

## 2. ລະດັບຄວາມທຸກຍາກໃນ ສປປ ລາວ

ສປປ ລາວ ໄດ້ມີຄວາມຄືບໜ້າທີ່ໜ້າປະທັບໃຈ ໃນການຫຼຸດຈໍານວນປະຊາຊົນຜູ້ທີ່ຢູ່ໃນຄວາມທຸກຍາກ, ພາຍໃຕ້ທັງມາດຕະການດ້ານຄວາມທຸກຍາກຂອງສາກົນ ແລະ ຂອງປະເທດ. ອີງຕາມທະນາຄານໂລກ, ເປີເຊັນຂອງຜູ້ທີ່ດໍາລົງຊີວິດຢູ່ພາຍໃຕ້ເງື່ອນໄຂ ຕໍ່າກວ່າ 1.90 ໂດລາຕໍ່ມື້ນັ້ນ ຫຼຸດລົງຈາກ 52.4 ເປີເຊັນ ໃນປີ 1997 ມາເປັນ 22.7 ເປີເຊັນ ໃນປີ 2012.[6]ແຕ່ຄວາມຄືບໜ້ານີ້ ບໍ່ສະເໝີພາບ, ເຊິ່ງຍັງມີ 40 ເປີເຊັນຂອງປະຊາຊົນທີ່ຢູ່ເຂດຊົນນະບົດ ຍັງຢູ່ໃນສະພາບຄວາມທຸກຍາກ, ເມື່ອທຽບກັບມີພຽງ 10 ເປີເຊັນຢູ່ເຂດຕົວເມືອງ.[7]ແລະ ກໍ່ມີຫຼັກຖານອ້າງອີງວ່າ ຕົວເລກທາງການ ເສີມແຕ່ງໃຫ້ເພດານດ້ານຄວາມຄືບໜ້າຂອງສັງຄົມ ຍ້ອນວ່າບັນດາຜູ້ທີ່ອອກມາຈາກປະເພດກຸ່ມທຸກຍາກທີ່ຈັດແບ່ງເປັນທາງການນັ້ນ ສ່ວນຫຼາຍຍັງຄົງຢູ່ໃນລະດັບທີ່ໃກ້ຄຽງກັບເສັ້ນຄວາມທຸກຍາກ ຫຼື ບໍ່ກໍ່ກັບເຂົ້າໄປສູ່ພາຍໃຕ້ເສັ້ນຄວາມທຸກຍາກຄືນອີກ. ໃນປີ 2013, 80 ເປີເຊັນຂອງປະຊາກອນ ຢູ່ພາຍໃຕ້

[6]ບົດລາຍງານຂອງທະນາຄານໂລກ (World Bank), "Poverty and Equity Data Portal: Lao PDR," http://povertydata.worldbank.org/poverty/country/LAO.
[7]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 33.

ລະດັບທີ່ໜ້ອຍກວ່າ 2.50 ໂດລາຕໍ່ວັນ, ແລະ ປະມານເຄິ່ງໜຶ່ງຂອງຈຳນວນທີ່ຢູ່ໃນຄວາມທຸກຍາກ ໃນປີ 2012/13 ໄດ້ຕົກເຂົ້າ ໄປສູ່ສະພາບຄວາມທຸກຍາກອີກ ໃນໄລຍະ 5 ປີຜ່ານມາ. ຫຼາຍກວ່າ ສອງ ສ່ວນສາມ ໄດ້ຕົກຢູ່ໃນສະພາບທຸກຍາກ ໃນ 10 ປີກ່ອນໜ້າ.[8]ໃນຂະນະດຽວກັນ, ປະມານໜຶ່ງສ່ວນສີ່ ຂອງ ປະຊາກອນ ຍັງຄົງຢູ່ພາຍໃຕ້ເສັ້ນຄວາມທຸກຍາກທີ່ເປັນທາງການ ເຖິງແມ່ນວ່າຈະມີການຂະຫຍາຍຕົວຢ່າງໄວວາຂອງເສດຖະກິດ. ສປປ ລາວ ໄດ້ເຫັນອັດຕາສ່ວນການຫຼຸດຜ່ອນຄວາມທຸກຍາກ ທີ່ຕໍ່າກວ່າການຂະຫຍາຍຕົວດ້ານເສດຖະກິດ ກວ່າປະເທດອື່ນໆ ໃນຂົງເຂດພາກພື້ນນີ້,[9]ແລະ ຄວາມບໍ່ສະເໝີພາບ ຄາດຄະເນວ່າ ຈະເພີ່ມຂຶ້ນ.[10]

ນອກນັ້ນ ເພື່ອຫຼຸດຈຳນວນຜູ້ທີ່ຢູ່ລຸ່ມເສັ້ນຄວາມທຸກຍາກ, ສປປ ລາວ ໄດ້ມີຄວາມກ້າວໜ້າທີ່ສຳຄັນຫຼາຍຢ່າງ ໃນຂົງເຂດອື່ນໆ: ໃນລະຫວ່າປີ 2002/2003 ແລະ 2012/2013, ການເຂົ້າເຖິງໄຟຟ້າ ໄດ້ເພີ່ມຂຶ້ນສອງທົບ ແລະ ຈຳນວນຄົວເຮືອນທີ່ອາໄສຢູ່ເຮືອນກໍ່ດ້ວຍດິນຈີ່ ຫຼື ຄອນກຣີດ ແມ່ນເພີ່ມຂຶ້ນເກືອບສາມທົບ, ໃນຂະນະທີ່ອັດຕາສ່ວນຂອງຜູ້ທີ່ມີວິດຖ່າຍພັດຫຼຸດລົງເກືອບເຄິ່ງ. ອັດຕາການເຂົ້າຮຽນສຸດທິ ເພີ່ມຂຶ້ນ 23 ເປີເຊັນ, ບັນລຸໄດ້ 50 ເປີເຊັນໃນປີ 2012/13.[11]ລັດຖະບານໄດ້ສ້າງກອງທຶນຫຼຸດຜ່ອນຄວາມທຸກຍາກຂຶ້ນ, ສຸມໃສ່ພັດທະນາບ້ານທີ່ທຸກຍາກທີ່ສຸດ ແລະ ມີທຶນທີ່ເປັນພື້ນຖານ 186 ລ້ານໂດລາ ນັບແຕ່ປີ 2003 ເປັນຕົ້ນມາ, ເຊິ່ງໃນນັ້ນ 91 ເປີເຊັນ ແມ່ນທຶນຈາກຜູ້ໃຫ້ທຶນຕ່າງປະເທດ.[12]

ໂດຍທົ່ວໄປແລ້ວ, ມີການນັ້ນໃສ່ການເຮັດເພື່ອແລ້ວໄປແຕ່ລະໜ້າວຽກຊື່ໆ ແລະ ມີການປຸງແຕ່ງຕົວເລກຫຼາຍເກີນໄປ ແທນທີ່ຈະຮັບປະກັນໃຫ້ມີການປ່ຽນແປງທີ່ມີຄວາມໝາຍ ໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນລາວ. ໃນສິ່ງທີ່ໄດ້ພັນລະນາວ່າ ເປັນ "ການຕັດສິນໃຈດ້ານນະໂຍບາຍ ໂດຍຖະແຫຼງການທີ່ມີແຮງບັນດານໃຈ (policy-making by aspirational statement)" ນັ້ນ, ພະນັກງານລັດກໍ່ກະຕືລືລົ້ນທີ່ຈະຮ່ວມຮັບເອົາຄາດໝາຍທີ່ມີລັກສະນະທະເຍີທະຍານສູງ ແລະ ມີການສ້າງຄະນະກຳມະການໃໝ່ໆຂຶ້ນມາ, ແຕ່ສ່ວນໜ້ອຍ ທີ່ຈະສາມາດສະໜອງຫຼັກຖານຢັ້ງຢືນວ່າ ນະໂຍບາຍຂອງເຂົາເຈົ້ານັ້ນ ສ້າງປະໂຫຍດໃຫ້ແກ່ປະຊາຊົນ ໃນໂລກຂອງຄວາມເປັນຈິງ ຫຼື ສ້າງແຜນການຕ່າງໆ ສຳລັບບັນລຸຄາດໝາຍເຫຼົ່ານີ້. ໃນໜຶ່ງເມືອງ ທີ່ຂ້າພະເຈົ້າໄດ້ໄປຢ້ຽມຢາມ ເຊິ່ງໃນນັ້ນ 25 ເປີເຊັນຂອງ ຄົວເຮືອນ ຢູ່ໃນຄວາມທຸກຍາກ, ຮອງເຈົ້າເມືອງບອກຂ້າພະເຈົ້າວ່າ ຮອດປີ 2024 ເຂົາເຈົ້າວາງແຜນຫຼຸດຜ່ອນຄວາມທຸກຍາກລົງ ໃຫ້ໄດ້ 4 ເປີເຊັນ, ແຕ່ບອກວ່າເມືອງບໍ່ມີແຜນພິເສດໃດໆ ທີ່ຈະເລັ່ງລັດການຫຼຸດຜ່ອນຄວາມທຸກຍາກ ເພື່ອເຮັດໃຫ້ໄດ້ຕາມ ຄາດໝາຍຄືດັ່ງກ່າວ. ພະນັກງານຫຼາຍໆຄົນ ຜູ້ທີ່ຂ້າພະເຈົ້າໄດ້ລົມນຳ ເບິ່ງຄືວ່າບໍ່ສົນໃຈທີ່ຈະກວດສອບປະສິດທິຜົນຂອງ ນະໂຍບາຍຕ່າງໆເພື່ອແກ້ໄຂຄວາມທຸກຍາກ ແລະ ສ່ວນຫຼາຍ ບໍ່ສາມາດສະໜອງຕົວເລກພື້ນຖານກ່ຽວກັບງົບປະມານ ຂອງແຜນງານ, ຈຳນວນຄົນຜູ້ທີ່ນະໂຍບາຍໄດ້ໄປເຖິງເຂົາເຈົ້າ ຫຼື ບາດກ້າວສະເພາະໃດແດ່ ທີ່ສາມາດບັນລຸໄດ້ແລ້ວ. ລັດຖະບານບໍ່ໄດ້ສະໜອງຫຼັກຖານຢັ້ງຢືນເຖິງຄວາມພະຍາຍາມທີ່ມີຄວາມຄືບໜ້າ ໃນການປັບປຸງການເກັບລາຍຮັບ ຫຼື ການກະຕຸ້ນການປົກປ້ອງທາງສັງຄົມ ໃຫ້ແກ່ຂ້າພະເຈົ້າ ແລະ ກະຊວງການເງິນບອກຂ້າພະເຈົ້າວ່າ ບໍ່ໄດ້ພິຈາລະນາກ່ຽວກັບຄວາມບໍ່ສະເໝີພາບ ໃນວິທີ ການເກັບພາສີ ແລະ ໃນການວາງແຜນງົບປະມານ.[13]ລັດຖະມົນຕີທ່ານໜຶ່ງບອກຂ້າພະເຈົ້າວ່າ, "ສຳລັບຂ້າພະເຈົ້າແລ້ວ, ຄວາມທຸກຍາກແມ່ນເປັນທຳມະຊາດ, ເປັນການບີບຮັດຂອງທຳມະຊາດ, ບໍ່ແມ່ນໄພພິບັດທີ່ຄົນກໍ່ໃຫ້ເກີດຂຶ້ນ."

---

[8]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Poverty Policy Notes: Drivers of Poverty Reduction in Lao PDR," October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 9.

[9]ບົດລາຍງານຂອງທະນາຄານໂລກ (World Bank), "Poverty Profile in Lao PDR," 2014, http://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf p. 8.

[10]ບົດລາຍງານຂອງທະນາຄານໂລກ (World Bank), "Poverty and Equity Brief: Lao People's Democratic Republic," October 2018, https://databank.worldbank.org/data/download/poverty/33EF03BB-9722-4AE2-ABC7-AA2972D68AFE/Global_POVEQ_LAO.pdf.

[11]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Poverty Policy Notes: Drivers of Poverty Reduction in Lao PDR," October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 9.

[12]ການປະຊຸມກັບກອງທຶນຫຼຸດຜ່ອນຄວາມທຸກຍາກໃນເດືອນມີນາ, ວັນທີ 25, 2019.

[13]ການປະຊຸມກັບກະຊວງການເງິນໃນເດືອນມີນາ, ວັນທີ 25 25, 2019.

ມີຂໍ້ມູນຕົວເລກຈຳກັດຫຼາຍ ແລະ ຂາດຄວາມໂປ່ງໃສ ໃນດ້ານຂໍ້ມູນທີ່ມີ ຈຶ່ງເຮັດໃຫ້ຍາກທີ່ຈະປະເມີນ ສະພາບຄວາມທຸກຍາກ ປັດຈຸບັນ ໃນ ສປປ ລາວ ໄດ້ຢ່າງຖືກຕ້ອງ ແລະ ໝາຍເຖິງວ່າ ບັນດາແຜນງານ ແລະ ການຮັບມືຕ່າງໆ ແມ່ນໄດ້ຮັບການອອກແບບ ມາ ໂດຍອີງໃສ່ຂໍ້ມູນທີ່ອາດບໍ່ສະທ້ອນເຖິງສະຖານະການຕົວຈິງ. ຕົວເລກທີ່ມີຢູ່ທີ່ເປັນຕົວເລກໃໝ່ທີ່ສຸດ ແມ່ນຕົວເລກຈາກຫຼາຍປີ ກ່ອນເຊິ່ງຫຼ້າສະໄໝແລ້ວ ແລະ ກະຊວງການເງິນກໍ່ບອກຂ້າພະເຈົ້າວ່າ ເຂົາເຈົ້າສາມາດໃຫ້ຂໍ້ມູນການໃຊ້ຈ່າຍງົບປະມານ ຮອດແຕ່ປີ 2016.[14]ໃນຂະນະດຽວກັນ, ອົງການຈັດຕັ້ງທີ່ເປັນເອກະລາດ ກໍ່ໄດ້ຍົກໃຫ້ເຫັນເຖິງຄວາມເປັນຫວ່ງເປັນໄຍ ກ່ຽວກັບ ຄວາມໜ້າ ເຊື່ອຖື ຂອງ ຂໍ້ມູນທີ່ເປັນທາງການ, ໂດຍບອກວ່າ ມັນບໍ່ສອດຄ່ອງກັບສິ່ງຄົ້ນພົບຂອງເຂົາເຈົ້າ ແຕ່ລັດຖະບານ ບໍ່ສົນໃຈ ໃນການແກ້ ໄຂຄວາມແຕກຕ່າງຄືດັ່ງກ່າວ. ຂ້າພະເຈົ້າກໍ່ເຫັນດ້ວຍຕົນເອງ ໃນເມືອງໜຶ່ງ, ເຊິ່ງພະນັກງານບອກຂ້າພະເຈົ້າວ່າ 100 ເປີເຊັນ ຂອງ ຈຳນວນບ້ານ ມີໄຟຟ້າ ແຕ່ເມື່ອຂ້າພະເຈົ້າໄປຢ້ຽມຢາມບ້ານໜຶ່ງ ໃນເມືອງດັ່ງກ່າວ ບ້ານນັ້ນພັດບໍ່ມີໄຟຟ້າ. ນາຍບ້ານ ບອກຂ້າພະເຈົ້າ ວ່າ ທັງໝົດມີ 5 ບ້ານຢູ່ເຂດນັ້ນ ຍັງລໍຖ້າຕໍ່ໄຟຈາກຕາຂ່າຍສາຍສົ່ງໄຟຟ້າຢູ່.

### 3. ຄວາມລົ້ມເຫຼວຂອງການພັດທະນາເສດຖະກິດ ໃນການລຶບລ້າງຄວາມທຸກຍາກ

ສປປ ລາວ ໄດ້ນຳໃຊ້ວິທີການພັດທະນາເສດຖະກິດ ແລະ ລຶບລ້າງຄວາມທຸກຍາກ ແບບສັ່ງການຈາກເທິງລົງລຸ່ມ ເຊິ່ງວ່າທັງໝົດນີ້ ສ່ວນຫຼາຍແມ່ນບໍ່ໄດ້ຮັບຜົນ, ນຳໄປສູ່ການເພີ່ມຄວາມທຸກຍາກ ແລະ ໃຫ້ມີຄວາມສ່ຽງຕໍ່ສິດທິຂອງຜູ້ທຸກຍາກ ແລະ ຜູ້ດ້ອຍ ໂອກາດ. ການຫຼຸດພົ້ນຈາກການເປັນປະເທດດ້ອຍພັດທະນາ ແລະ ອັດຕາການເຕີບໂຕຂອງ GDP ໄດ້ຮັບການຖືເປັນ ບຸລິມະສິດ, ໃນຂະນະດຽວກັນພັດບໍ່ໄດ້ສະໜອງຄວາມໝັ້ນຄົງທາງດ້ານເສດຖະກິດ ແລະ ໂອກາດການຈ້າງງານ ໃຫ້ແກ່ປະຊາຊົນ ຜູ້ທຸກຍາກ. ບັນດາຍຸດທະສາດໃນການບັນລຸການຂະຫຍາຍໂຕທາງດ້ານເສດຖະກິດ, ເຊັ່ນ "ການຫັນເອົາທີ່ດິນເປັນທຶນ" ແລະ ໂຄງການທີ່ມີຄູ່ ຮ່ວມພັດທະນາສະໜັບສະໜູນ ໃນຂະແໜງໄຟຟ້າພະລັງນ້ຳ, ສ່ວນຫຼາຍມີຜົນກະທົບໃນທາງລົບຫຼາຍ ແລະ ໄດ້ເຮັດໃຫ້ປະຊາຊົນ ທຸກຍາກກວ່າເກົ່າ ດ້ວຍການຈຳກັດເຂົາເຈົ້າຈາກການເຂົ້າເຖິງທີ່ດິນ, ວິຖີການດຳລົງຊີວິດ ແລະ ຊັບພະຍາກອນ.

#### ປະເດັນດ້ານທີ່ດິນ

ທີ່ດິນ ແມ່ນປັດໄຈຫຼັກສຳລັບການດຳລົງຊີວິດຂອງປະຊາຊົນຜູ້ທຸກຍາກ, ແຕ່ວ່າ ການຄໍ້າປະກັນທາງດ້ານທີ່ດິນ ສ່ວນຫຼາຍ ແມ່ນມີ ໜ້ອຍ ແລະ ໄດ້ມີການຄອບຄອງທີ່ດິນຂະໜາດໃຫຍ່ ໃນທິດທາງທີ່ມີຜົນກະທົບແຕະຕ້ອງສິດທິຂອງປະຊາຊົນທີ່ຢູ່ ໃນສະພາບ ທຸກຍາກ. ໃນຂະນະທີ່ການຄາດຄະເນຈຳນວນ ມີຄວາມແຕກຕ່າງ, ແຕ່ປະມານ ສອງສ່ວນສາມ ຂອງ ປະຊາກອນ ຂອງປະເທດ ດຳ ລົງຊີວິດຢູ່ເຂດຊົນນະບົດ,[15]ແລະ ປະມານ 80 ເປີເຊັນຂອງປະຊາກອນ ໃນເຂດຊົນນະບົດ ຍັງຜະລິດກະສິກຳ ແບບພໍກຸ້ມກິນເທົ່າ ນັ້ນ.[16]ສຳລັບປະຊາຊົນເຫຼົ່ານີ້, ການເຂົ້າເຖິງທີ່ດິນ ແລະ ປ່າໄມ້ ແມ່ນສຳຄັນສຳລັບການປູກເຂົ້າ ແລະ ພືດຜັກ, ການເກັບຜັກທີ່ກິນ ໄດ້ ແລະ ພືດທີ່ເປັນຢາພື້ນເມືອງ, ການລ້ຽງສັດ ແລະ ການເຂົ້າເຖິງແມ່ນ້ຳ ເພື່ອຫາປາ ແລະ ໃຊ້ອາບ. ທີ່ດິນ ເປັນແຫຼ່ງຂອງວິຖີ ການດຳລົງຊີວິດ ແລະ ເປັນສິ່ງຮັບປະກັນເຖິງການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໃນສະພາບທີ່ ມີການຂາດສິນຄ້າ ພື້ນຖານ ແລະ ການບໍລິການພື້ນຖານ ຫຼື ການຂາດການປົກປ້ອງທາງສັງຄົມ ທີ່ເຫັນໄດ້ຢ່າງພົ້ນເດັ່ນນັ້ນ, ທີ່ດິນ ແມ່ນເຄືອຄ່າຍ ຄວາມປອດໄພອັນໜຶ່ງ.

---

[14]ປະຊຸມກັບກະຊວງການເງິນ, ເດືອນມີນາ, ວັນທີ25, 2019.

[15]ອີງຕາມບົດລາຍງານຂອງອົງການ FAO ຈາກປີ 2018, 67.1% ຂອງປະຊາກອນ ດຳລົງຊີວິດຢູ່ເຂດຊົນນະບົດ. ອົງການສະຫະປະຊາຊາດ ດ້ານອາຫານ ແລະ ກະສິກຳ (Food and Agriculture Organization of the United Nations), "ບົດລາຍງານການປະເມີນຈາກມຸມມອງດ້ານບົດບາດຍິງຊາຍຂອງປະເທດ ປະເມີນຂະແໜງກະສິກຳ ແລະ ຊົນນະບົດ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (Country Gender Assessment of Agriculture and the Rural Sector in Lao People's Democratic Republic)," 2018,http://www.fao.org/3/ca0154en/CA0154EN.pdf p. 6.

[16]ອົງການສະຫະປະຊາຊາດ ດ້ານອາຫານ ແລະ ກະສິກຳ (Food and Agriculture Organization of the United Nations), "Laos at a glance,"http://www.fao.org/laos/fao-in-laos/laos-at-a-glance/en/.

ແນວໃດກໍ່ຕາມ, ນະໂຍບາຍ “ຫັນທີ່ດິນເປັນທຶນ”[17] ໄດ້ເຮັດໃຫ້ປະເທດຖືກປົກຄຸມດ້ວຍ ການສຳປະທານຫຼາຍກວ່າ 1,750 ໂຄງການ, ກວມເອົາເນື້ອທີ່ດິນຂອງປະເທດຈຳນວນຫຼວງຫຼາຍ.[18] ມັນໄດ້ແບ່ງແຍກປະຊາຊົນຜູ້ທຸກຍາກອອກຈາກທີ່ດິນ ທີ່ເຂົາເຈົ້າເອື່ອຍອີງອາໄສໃສ່ເພື່ອການດຳລົງຊີວິດ. ພາຍໃຕ້ນະໂຍບາຍນີ້, ລັດຖະບານ ໄດ້ມອບສິດນຳໃຊ້ທີ່ດິນເປັນພື້ນທີ່ຈຳນວນຫຼວງຫຼາຍໃຫ້ແກ່ບັນດາບໍລິສັດ, ບາງຄັ້ງກໍ່ເປັນໄລຍະເວລາຍາວນານເປັນສັດຕະວັດກໍ່ມີ ແລະ ສ່ວນຫຼາຍແມ່ນໂດຍບໍ່ພິຈາລະນາເຖິງການນຳໃຊ້ທີ່ດິນໃນປັດຈຸບັນ ແຕ່ຢ່າງໃດ. ບັນດາຊຸມຊົນ ໄດ້ສູນເສຍທີ່ດິນປູກຝັງ ແລະ ທົ່ງຫຍ້າທີ່ມີຄຸນຄ່າ ແລະ ບາງຄັ້ງກໍ່ຖືກບັງຄັບໃຫ້ຍົກຍ້າຍຖິ່ນຖານ ທັງໝົດເລີຍ ເພື່ອຫຼີກທາງໃຫ້ແກ່ ການປູກພືດອຸດສາຫະກຳ, ໂຄງການໄຟຟ້າພະລັງນ້ຳ, ການຂຸດຄົ້ນບໍ່ແຮ່ ຫຼື ໃຫ້ແກ່ການນຳໃຊ້ ທີ່ດິນທີ່ອ້າງວ່າ “ແບບມີຜົນຜະລິດຫຼາຍກວ່າ”. ໃນຂະນະທີ່ມີການວິເຄາະວິໄຈແບບຮອບດ້ານກວມເອົາທົ່ວປະເທດທີ່ວິໄຈ ເຖິງຜົນສະທ້ອນທີ່ໄດ້ຮັບຈາກການສູນເສຍການເຂົ້າເຖິງທີ່ດິນ ນັ້ນ ຍັງມີຈຳກັດຫຼາຍ, ແຕ່ກໍ່ມີກໍລະນີສຶກສາທີ່ແມ້ນຍຳຫຼາຍໆບົດ ເຊິ່ງໃນນັ້ນ ບັນດາຊຸມຊົນລາຍງານເຖິງ ສະພາບທີ່ມີການຄ້ຳປະກັນສະບຽງອາຫານຫຼຸດລົງ, ການສູນເສຍວິຖີການດຳລົງຊີວິດ, ການຊົດເຊີຍທີ່ບໍ່ພຽງພໍ ຫຼື ບໍ່ມີການຊົດເຊີຍເລີຍ ສຳລັບຊັບພະຍາກອນທີ່ໄດ້ສູນເສຍ, ສະພາບທີ່ເຮັດໃຫ້ທຸກຍາກລົງຕື່ມ, ມີການ ເຂົ້າເຖິງນ້ຳທີ່ໜ້ອຍລົງ, ຂາດໂອກາດໃນການສ້າງວຽກເຮັດງານທຳທີ່ດີ ແລະ ມີຄວາມຈຳເປັນຕ້ອງກູ້ຢືມເປັນໜີ້ເປັນສິນ ເພື່ອຮັບມື ກັບການຂ້າມຜ່ານໄປສູ່ເສດຖະກິດທີ່ຕ້ອງອາໄສເງິນສົດເປັນພື້ນຖານ ເຊິ່ງເປັນສະພາບທີ່ຕ້ອງໄດ້ຊື້ອາຫານ ແລະ ນ້ຳດື່ມ.[19]

ການຂາດວິທີການທີ່ເປັນລະບົບ ແລະ ໂປ່ງໃສ ປະກອບສ່ວນເຮັດໃຫ້ປະຊາຊົນມີຄວາມທຸກຍາກເພີ່ມຂຶ້ນ ຜູ້ທີ່ເປັນປະຊາຊົນ ທີ່ໄດ້ຮັບຜົນສະທ້ອນຈາກການສູນເສຍທີ່ດິນ ແລະ ຈາກການຍົກຍ້າຍຈັດສັນ.[20] ອີງຕາມບົດລາຍງານຕ່າງໆ, ສ່ວນຫຼາຍ ການຊົດເຊີຍ ບໍ່ພຽງພໍກັບມູນຄ່າຂອງທີ່ດິນທີ່ສູນເສຍໄປ, ການຊົດເຊີຍມີການຫຼ້າຊ້າ, ໄປຈົນເກືອບຮອດເວລາທີ່ອາດຕ້ອງ ມີການຕັດສິນຊີ້ຂາດແລ້ວ ພາຍຫຼັງທີ່ສູນເສຍທີ່ດິນໄປ ແລະ ການຊົດເຊີຍຍັງມີການປ່ຽນແປງຂຶ້ນລົງເລື້ອຍໆ ແລະ ສຳລັບ ຜູ້ທີ່ມີເຄືອຂ່າຍສາຍພົວພັນ ຫຼື ຜູ້ທີ່ມີຊັບພະຍາກອນຫຼາຍກວ່າກໍ່ຈະໄດ້ຮັບຄ່າຊົດເຊີຍແບບເພິ່ງພໍໃຈແດ່.

ຕົວຢ່າງ, ຜູ້ລາຍງານພິເສດໄດ້ຮັບຂໍ້ມູນຂໍ້ກ່າວຫາ ກ່ຽວກັບ ບັນຫາການຊົດເຊີຍຢູ່ເຂດວັງວຽງ, ລວມທັງກ່ຽວຂ້ອງກັບ ການກໍ່ສ້າງເສັ້ນທາງລົດໄຟ ຈີນ-ລາວ, ເຊິ່ງເປັນໂຄງການເດັ່ນ ຂອງ ໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງ(the Belt and Road Initiative) ໃນ ສປປ ລາວ. ອີງຕາມຂໍ້ມູນທີ່ສະໜອງໃຫ້ມາ, ຄອບຄົວໜຶ່ງທີ່ຖືກບັງຄັບໃຫ້ອອກຈາກເຮືອນ, ປະຖິ້ມສວນ ແລະ ບັນດາຕົ້ນໄມ້ໃຫ້ໝາກ ສຸດທ້າຍແລ້ວ ຈຶ່ງໄດ້ຮັບການຊົດເຊີຍສຳລັບການສູນເສຍເຮືອນຂອງເຂົາເຈົ້ານັ້ນໃນອີກ 2 ປີ ຫຼັງຈາກເຫດເກີດດັ່ງກ່າວເກີດຂຶ້ນ, ແຕ່ກໍ່ຍັງບໍ່ທັນໄດ້ຮັບຄ່າ ຊົດເຊີຍສຳລັບການສູນເສຍທີ່ດິນ ຫຼື ຕົ້ນໄມ້ໃຫ້ໝາກເທື່ອ ເຊິ່ງກ່ອນທີ່ຈະມີການຍົກຍ້າຍ ບັນດາສວນໝາກໄມ້ນັ້ນເຄີຍສະໜອງລາຍຮັບໃຫ້ແກ່ຄອບຄົວເຖິງ 1,165 ໂດລາ ຕໍ່ປີ. ໄດ້ມີການເກັບກຳຂໍ້ມູນ ກໍລະນີຂອງກຸ່ມຜູ້ດ້ອຍໂອກາດໄດ້ຮັບຄ່າຊົດເຊີຍໃນອັດຕາທີ່ຕ່ຳກວ່າ ຜູ້ທີ່ມີຊັບພະຍາກອນຫຼາຍກວ່າ ຫຼື ຜູ້ທີ່ມີເຄືອຄ່າຍ ສາຍພົວພັນ ຢູ່ ວັງວຽງ ແລະ ເຊັ່ນດຽວກັນກັບເສັ້ນທາງສາຍດ່ວນ ວຽງຈັນ-ວັງວຽງ. ທາງເລືອກສຳລັບການຂໍຄວາມຊ່ວຍ ກໍ່ບໍ່ມີລັກສະນະຊຸກຍູ້ປານໃດ. ຕາມທີ່ທ່ານຮອງເຈົ້າແຂວງທ່ານໜຶ່ງໄດ້ອະທິບາຍວ່າ ຍັງບໍ່ມີໃຜໃນແຂວງຮ້ອງຟ້ອງຄະດີການຊົດເຊີຍຂຶ້ນສານ ແຕ່ກໍລະນີທີ່ມີບາງ

---

[17] ນະໂຍບາຍໃນເມື່ອກ່ອນໃນປະມານປີ2006, ທີ່ມີການໃຊ້ກັນໃນສື່ມວນຊົນຂອງລັດ; ນະໂຍບາຍດັ່ງກ່າວ ກໍ່ໄດ້ອ້າງອີງເຖິງຫຼາຍໆຄັ້ງ ຕະຫຼອດໄລຍະເວລາຜ່ານມາ ໃນເອກະສານ ທາງການເມືອງ ແລະ ໃນບົດກ່າວທີ່ເປັນທາງການ ແຕ່ບໍ່ເຄີຍໄດ້ເຮັດເປັນທາງການຈັກເທື່ອ. Kenny-Lazar, Miles, Dwyer, Michael, and Hett, Cornelia, “ຫັນທີ່ດິນເປັນທຶນ: ການປະເມີນທິດສະວັດຂອງນະໂຍບາຍ ໃນພາກປະຕິບັດຕົວຈິງ,”ພຶດສະພາ 2018,https://www.ohchr.org/Documents/Issues/EPoverty/Lao/MilesKenneyLazarAnnex6.pdf, p. 8.

[18] ອີງຕາມຕົວເລກທີ່ສະໜອງໃຫ້ໂດຍ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເດືອນ ມີນາ ວັນທີ 26, 2019, ມີການສຳປະທານ 1,758 ໂຄງການໃນ ສປປ ລາວ.

[19] ເບິ່ງບັນດາເອກະສານຕົວຢ່າງ: International Rivers, “Submission to the United Nations Special Rapporteur on Extreme Poverty and Human Rights,” https://www.ohchr.org/Documents/Issues/EPoverty/Lao/InternationalRivers.pdf, p. 2; Christophe Gironde and Gilda Senties Portilla, “From Lagging Behind to Losing Ground: Cambodian and Laotian Household Economy and Large-Scale Land Acquisitions, in Large-Scale Land Acquisitions: Focus on South-East Asia,” 2015 International Development Policy series No.6, Geneva: Graduate Institute Publications, Boston: Brill-Nijhoff, pp. 189-90.

[20] ເບິ່ງບັນດາເອກະສານຕົວຢ່າງ: Kenney-Lazar, Miles, “Land Concessions, Land Tenure, and Livelihood Change: Plantation Development in Attapeu Province, Southern Laos,” 2012, laolandissues.org/wp-content/uploads/2012/03/Kenney-Lazar-Land-Concessions-Attapeu1.pdf p. 35-36.

ຄອບຄົວ "ສ້າງບັນຫາ" ໃນເບື້ອງຕົ້ນນັ້ນ ແມ່ນຍ້ອນວ່າ ເຂົາເຈົ້າ "ບໍ່ເຂົ້າໃຈລະບຽບຫຼັກການຂອງການຊົດເຊີຍ;" ແຕ່ເມື່ອເຂົາເຈົ້າໄດ້ຮັບການສຶກສາອົບຮົມແລ້ວ ບັນຫາກໍ່ໄດ້ຮັບການແກ້ໄຂແລ້ວ.

ໃນເມື່ອວ່າທີ່ດິນມີຄວາມສຳຄັນຄືດັ່ງການ ແລະ ຜົນສະທ້ອນຂອງການສູນເສຍທີ່ດິນກໍ່ເຮັດໃຫ້ມີຄວາມທຸກຍາກເພີ່ມຂຶ້ນ ແຕ່ ຂອບຮ່າງດ້ານກົດໝາຍ ກໍ່ພັດບໍ່ເປັນທີ່ໜ້າເພິ່ງພໍໃຈ ແລະ ອາດຂີ້ຮ້າຍລົງກວ່າເກົ່າ ຂຶ້ນກັບວ່າ ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ ຈະອອກມາໃນຮູບແບບໃດໃນທີ່ສຸດ. ໃນ ສປປ ລາວ, ມີຫຼາຍແສນຄົນດຳລົງຊີວິດ ແລະ ທຳການຜະລິດໃນເຂດທີ່ຈັດສັນ ໃຫ້ເປັນ "ປ່າໄມ້" ໃນໄລຍະທົດສະວັດທີ່ມໍ່ໆມານີ້.[21] ຄົນຈຳນວນຫຼາຍເຮັດໄຮ່,[22]ເຊິ່ງເປັນຮູບແບບດັ່ງເດີມຂອງການນຳໃຊ້ທີ່ດິນ ແລະ ຂອງການຜະລິດ ເຊິ່ງໃນຂັ້ນການຕອນຜະລິດນັ້ນຮຽກຮ້ອງໃຫ້ມີການກຳຈັດພືດທຳມະຊາດ ແລະ ມີຮອບວຽນຂອງການປູກຝັງ ແລະການປະດິນໄວ້ ເປັນປ່າເລົ່າເປັນໄລຍະໆ.[23]ຄົນສ່ວນຫຼາຍອາໄສເນື້ອທີ່ດິນລວມໝູ່ ຫຼາຍກວ່າດິນສ່ວນບຸກຄົນ ເພື່ອລ້ຽງສັດ, ເພື່ອເກັບເຄື່ອງປ່າ ແລະ ເພື່ອປູກຝັງ. ກົດໝາຍສະບັບປັດຈຸບັນ ຍັງບໍ່ສາມາດປົກປ້ອງສິດຄອບຄົວທີ່ດິນຂອງກຸ່ມເຫຼົ່ານີ້ໄດ້ຢ່າງພຽງພໍເທື່ອ. ຕົວຢ່າງ: ມີບັນດາບົດລາຍງານໄດ້ຍົກໃຫ້ເຫັນເຖິງ ຄວາມພະຍາຍາມ 2 ຄັ້ງໃນປີ 2012 ທີ່ຈະຂໍໃຫ້ມີ ການພິຈາລະນາ ເພື່ອອອກໃບຕາດິນລວມໝູ່, ແຕ່ລັດຖະບານຂັ້ນສູນກາງ ຢັ້ງຢືນວ່າ ປະເດັນດັ່ງກ່າວນັ້ນ ມີພຽງແຕ່ 2 ກໍລະນີ ທີ່ລັດຮັບຮູ້ ແລະ ບອກວ່າການອອກໃບຕາດິນລວມໝູ່ ໃດໆ ແມ່ນຍັງໂຈະກ່ອນ ຈົນກວ່າຈະມີການຮັບຮອງເອົາກົດໝາຍທີ່ດິນສະບັບໃໝ່.[24]ເຊັ່ນດຽວກັນ ອົງການຈັດຕັ້ງພາກສັງຄົມ ໄດ້ຍົກປະເດັນຄວາມເປັນຫວ່ງເປັນໄຍຂອື່ນກ່ຽວກັບ ກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບທີ່ຫາກໍ່ຖືກຮັບຮອງ,ເຊິ່ງໃນກົດໝາຍດັ່ງກ່າວນັ້ນ ແມ່ນເປັນການໃຫ້ສິດອຳນາດທີ່ກວ້າງຂວາງໃນການຍົກຍ້າຍປະຊາຊົນອອກ ເພື່ອຮອງຮັບເອົາບັນດາໂຄງການ ດ້ານການຄ້າຂອງເອກະຊົນຕ່າງໆເຂົ້າມາ. ອົງການຈັດຕັ້ງພາກສັງຄົມ ແລະ ຄູ່ຮ່ວມພັດທະນາ ກໍ່ໄດ້ວິຈານວ່າ ຮ່າງກົດໝາຍທີ່ດິນ (ສະບັບປັດຈຸບັນນີ້) ແມ່ນມີຄວາມລົ້ມເຫຼວ ໃນການປົກປ້ອງສິດການຄອບຄອງທີ່ດິນຂອງຜູ້ທີ່ອາໄສຢູ່ໃນເຂດປ່າໄມ້, ສິດຂອງແມ່ຍິງ, ຂອງຜູ້ທີ່ເຮັດໄຮ່ ແລະ ຜູ້ທີ່ອາໄສທີ່ດິນລວມໝູ່ ເພື່ອການດຳລົງຊີວິດ.

ລັດຖະບານຄວນໄດ້ຮັບການຍົກຍ້ອງ ທີ່ໄດ້ດຳເນີນບາດກ້າວຕ່າງໆໃນການພິຈາລະນາຄົ້ນຄວ້າວິທີການຂອງຕົນຄືນ ດັ່ງທີ່ເຫັນໄດ້ວ່າມີ ຫຼັກຖານຢັ້ງຢືນວ່າມີການພັດທະນາຄືດັ່ງກ່າວ ເຊັ່ນ: ການປະກາດສັ່ງຢຸດຕິໃນປີ 2012 ໃຫ້ໂຈະໂຄງການບໍ່ແຮ່, ປູກຢາງພາລາ ແລະ ໄມ້ຢູຄາລິບຕັສ (ໄມ້ວິກ).[25]ໃນປີ 2017, ພັກປະຊາຊົນປະຕິວັດລາວ ໄດ້ໃຫ້ຂໍ້ສັງເກດວ່າ ການຄຸ້ມຄອງທີ່ດິນໄດ້ສ້າງ ໃຫ້ມີບັນຫາທີ່ສະຫຼັບສັບຊ້ອນ ແລະ ມີການເວນຄືນທີ່ "ພາລະທີ່ໜັກໜ່ວງ" ແລະເປັນ "ບັນຫາທີ່ລະອຽດອ່ອນ ທີ່ສົ່ງຜົນ ສະທ້ອນຕໍ່

---

[21]Dwyer, M.B. and Ingalls, M., "REDD+ at the crossroads: Choices and tradeoffs for 2015 – 2020 in Laos," 2015,https://www.cifor.org/library/5536/ pp. 8-9.

[22]ບົດຄົ້ນຄວ້າໃນປີ 2013 ກ່ຽວກັບ ການເຮັດໄຮ່ ໃນພາກເໜືອຂອງ ສປປ ລາວ ຄາດຄະເນວ່າ ປະຊາຊົນຫຼາຍກວ່າ 550,000 ຄົນເຮັດໄຮ່. ອົງການສະຫະປະຊາຊາດ ເພື່ອອາຫານ ແລະ ກະສິກຳ (Food and Agriculture Organization of the United Nations), "Shifting Cultivation, Livelihood and Food Security: New and Old Challenges for Indigenous Peoples in Asia," 2015,http://www.fao.org/3/a-i4580e.pdf, p. 9.

[23]ອົງການສະຫະປະຊາຊາດ ເພື່ອອາຫານ ແລະ ກະສິກຳ (Food and Agriculture Organization of the United Nations), "Shifting Cultivation, Livelihood and Food Security: New and Old Challenges for Indigenous Peoples in Asia," 2015,http://www.fao.org/3/a-i4580e.pdf, p. 7. ອົງຕາມບົດລາຍງານດັ່ງກ່າວ, ການເຮັດໄຮ່ "ອາດເປັນໜຶ່ງໃນຮູບແບບການນຳໃຊ້ທີ່ດິນ ທີ່ມີຄົນເຂົ້າໃຈຜິດຫຼາຍທີ່ສຸດ ແລະ ດັ່ງນັ້ນຈຶ່ງຖືເປັນຮູບແບບການນຳໃຊ້ທີ່ດິນທີ່ມີການຖົກຖຽງກັນຫຼາຍທີ່ສຸດ," ແລະ ການປູກຝັງແບບນີ້ ໄດ້ຮັບການຢັ້ງຢືນ ໂດຍລັດຖະບານທີ່ປົກຄອງຫົວເມືອງຂຶ້ນ ແລະ ລັດຖະບານທີ່ປົກຄອງພາຍຫຼັງລະບອບຫົວເມືອງຂຶ້ນ ໃນອາຊີ ມາຫຼາຍກວ່າສັດຕະວັດໜຶ່ງມາແລ້ວ, ຜູ້ທີ່ພະຍາຍາມທີ່ຈະ ລຶບລ້າງການຖາງປ່າເຮັດໄຮ່ ແລະ ໄດ້ຍົກລະດັບການຕ້ານວິທີການປະຕິບັດນີ້ ໂດຍມີການວິຈານອັນດຽວກັນຕໍ່ກັບວິທີການນີ້ຢ່າງໜັກ ເຊິ່ງເປັນການວິຈານທີ່ເຂົາເຈົ້ານຳໃຊ້ຕ້ານ ຊົນເຜົ່າສ່ວນນ້ອຍ ໃນຂົງເຂດພາກພື້ນນີ້ວ່າ: ນີ້ແມ່ນວິທີການທີ່ຫຼ້າຫຼັງ ແລະ ກີດຂວາງຄວາມກ້າວໜ້າ. ການຢັ້ງຢືນທີ່ແຕກຕ່າງ, ຂໍ້ຖົກຖຽງຕ່າງໆວ່າ ການເຮັດໄຮ່ແບບເລື່ອນລອຍ ແມ່ນບໍ່ມີປະສິດທິພາບທາງດ້ານເສດຖະກິດ ແລະ ເປັນອັນຕະລາຍຕໍ່ລະບົບນິເວດ ແມ່ນໄດ້ຮັບການຢັ້ງຢືນແລ້ວວ່າບໍ່ຖືກຕ້ອງ ຫຼື ຜິດພາດຢ່າງສິ້ນເຊີງ. ລັດຖະບານ ສປປ ລາວ ຕັ້ງແຕ່ດົນ ມາແລ້ວ ມີນະໂຍບາຍພະຍາຍາມທີ່ຈະລຶບລ້າງການຖາງປ່າເຮັດໄຮ່, ເຖິງແມ່ນວ່າວິທີທາງທີ່ນຳໃຊ້ປະຕິບັດນະໂຍບາຍນີ້ ອາດເວົ້າໄດ້ວ່າກາຍເປັນລັກສະນະເບົາບາງລົງ ໃນຕະຫຼອດໄລຍະເວລາ ສອງທົດສະວັດທີ່ຜ່ານມາ. ບົດລາຍງານຂອງອົງການສະຫະປະຊາຊາດ ດ້ານອາຫານ ແລະ ກະສິກຳ (Food and Agriculture Organization of the United Nations), "Shifting Cultivation, Livelihood and Food Security: New and Old Challenges for Indigenous Peoples in Asia," 2015,http://www.fao.org/3/a-i4580e.pdf, pp. 8-9; Miles Kenney-Lazar, "Shifting Cultivation in Laos: Transitions in Policy and Perspective," https://www.ohchr.org/Documents/Issues/EPoverty/Lao/MilesKenneyLazarAnnex5.pdf p. 5.

[24]ການປະຊຸມກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເດືອນມີນາ, ວັນທີ 25 2019.

[25]Kenny-Lazar, Miles, Dwyer, Michael, and Hett, Cornelia, "Turning Land into Capital: Assessing A Decade of Policy in Practice," May 2018,https://www.ohchr.org/Documents/Issues/EPoverty/Lao/MilesKenneyLazarAnnex6.pdf, p. 10.

ຄວາມເປັນລະບຽບຮຽບຮ້ອຍ (ຄວາມສະຫງົບ) ຂອງ ມວນຊົນ."[26]ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ອະທິບາຍຕໍ່ຂ້າພະເຈົ້າວ່າ ຕາມຕິດຕາມຂອງກະຊວງແຜນການ ແລະ ການລົງທຶນ, ເຂົາເຈົ້າໄດ້ຢຸດຕິການອອກ ອະນຸຍາດສໍາປະທານ ເຊິ່ງໃນຂະນະດຽວກັນກໍ່ກໍາລັງມີການທົບທວນຄືນບັນດາໂຄງການຕ່າງໆ. ການປະເມີນຄືນນີ້ ຄວນຈະແມ່ນ ຫຼາຍກວ່າການຍົກເລີກບາງສັນຍາທີ່ປະຕິບັດບໍ່ໄດ້ເທົ່ານັ້ນ. ມັນເປັນໂອກາດໃຫ້ລັດຖະບານ ໄດ້ຮັບຮູ້ເຖິງຄວາມສໍາຄັນຂອງທີ່ດິນ ຕໍ່ປະຊາຊົນ ແລະ ຫາທາງປົກປ້ອງສິດຄອບຄອງຂອງເຂົາເຈົ້າ ເຊິ່ງເປັນວິທີທາງໃນການບັນລຸການຫຼຸດຜ່ອນຄວາມທຸກຍາກ. ໃນເມື່ອວ່າທີ່ດິນມີຄວາມສໍາຄັນພື້ນຖານຄືດັ່ງກ່າວ ຕໍ່ປະຊາຊົນຜູ້ທຸກຍາກຈໍານວນຫຼາຍໃນ ສປປ ລາວ, ເພື່ອຫຼີກລ່ຽງບໍ່ໃຫ້ເພີ່ມ ຄວາມທຸກຍາກອີກຕໍ່ໄປ, ການຄຸ້ມຄອງທີ່ດິນບໍ່ຄວນຈະມີການດໍາເນີນແບບມີການຄວບຄຸມຢ່າງບໍ່ສະເໝີພາບໂດຍລັດຖະບານ ເທົ່ານັ້ນ ແຕ່ຄວນຈະໃຫ້ມີລັກສະນະແບບມີສ່ວນຮ່ວມຢ່າງແທ້ຈິງ, ສະທ້ອນເຖິງວ່າມີການປົກປ້ອງ ແລະ ສະໜອງການປົກປ້ອງ ສໍາລັບການນໍາໃຊ້ທີ່ດິນໃນປັດຈຸບັນ ແລະ ມີຈັດຕັ້ງປະຕິບັດໃນລັກສະນະທີ່ໂປ່ງໃສ ເປັນປົກກະຕິ ໂດຍໃຫ້ມີການເຂົ້າເຖິງ ການປົວແປງຕ່າງໆ.

**ຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ**

ການຈັດສັນທີ່ບໍ່ຖືກຕ້ອງ ແລະ ການສູນເສຍການເຂົ້າເຖິງທີ່ດິນ ແມ່ນໜຶ່ງໃນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ທີ່ຮ້າຍແຮງທີ່ໄດ້ເກີດຂຶ້ນເປັນຜົນເນື່ອງມາຈາກການສະແຫວງຫາການຂະຫຍາຍໂຕທາງດ້ານເສດຖະກິດ ຂອງ ສປປ ລາວ. ຍັງມີຜົນກະທົບອື່ນໆ ທີ່ສະເພາະຈະຈົງໃສ່ໂຄງການສ້າງໂຄງລ່າງພື້ນຖານ ແລະ ໂຄງການ "ໃຫຍ່ໆ" ອື່ນໆ, ລວມທາງໂຄງການ ໄຟຟ້າພະລັງນໍ້າ ແລະ ໂຄງການລິເລີ່ມໜຶ່ງແລວທາງ ແລະ ໜຶ່ງເສັ້ນທາງ (Belt and Road initiative) ອື່ນໆ, ເຊັ່ນ: ໂຄງການສ້າງທາງລົດໄຟ ຈີນ-ລາວ. ມີຜົນກະທົບ ດ້ານສິ່ງແວດລ້ອມທີ່ຮ້າຍແຮງຕ່າງໆ, ເຊິ່ງສົ່ງຜົນຕໍ່ການດໍາລົງຊີວິດ, ການເຂົ້າເຖິງນໍ້າ ແລະ ການຄໍ້າປະກັນສະບຽງອາຫານ ຂອງ ປະຊາຊົນ ແລະ ຍັງມີສິ່ງທ້າທາຍຕ່າງໆ ທີ່ມາຄຽງຄູ່ກັບການກໍ່ສ້າງ ເຊັ່ນ: ຝຸ່ນ, ຂີ້ເຫຍື້ອ, ຖ່ານຫີນ ແລະ ການຫຼັ່ງໄຫຼເຂົ້າມາຂອງ ກໍາມະກອນ ເຊິ່ງສ່ວນຫຼາຍມາຈາກເຂດນອກຊຸມຊົນ.

ຍັງມີຄວາມເປັນຫ່ວງເປັນໄຍທີ່ໜັກໜ່ວງ ທີ່ສະເພາະເຈາະຈົງກັບການເຮັດກະສິກໍາແບບສັນຍາ, ສວນປູກພືດອຸດສາຫະກໍາ ແລະ ການຜະລິດກະສິກໍາເພື່ອເປັນສິນຄ້າ. ຊາວກະສິກອນເຮັດກະສິກໍາແບບສັນຍາ ບອກຂ້າພະເຈົ້າວ່າ ເຂົາເຈົ້າຕິດຢູ່ໃນວົງຈອນ ຂອງຄວາມທຸກຍາກ. ແມ່ຍິງຄົນໜຶ່ງ ພັນລະນາເຖິງຄວາມອຸກອັ່ງໃຈ ກັບຂໍ້ຕົກລົງຂອງນາຍບ້ານ ກັບບໍລິສັດຫວຽດນາມ ທີ່ສ້າງພັນທະໃຫ້ລາວປູກ ແລະ ຂາຍສາລີໃຫ້ບໍລິສັດ ໃນລາຄາທີ່ລາວເຊື່ອວ່າ ຕໍ່າກວ່າລາຄາທີ່ລາວສາມາດຂາຍໄດ້ໃນຕະຫຼາດທົ່ວໄປ: "ບໍ່ວ່າ ເຮົາຈະເຮັດວຽກໜັກປານໃດກໍ່ຕາມ, ພວກເຮົາກໍ່ບໍ່ສາມາດທີ່ຈະຫາເງິນໄດ້ກຸ້ມກິນ." ການເຮັດກະສິກໍາແບບສັນຍາ ຍັງຕອກຢໍ້າ ຄວາມບໍ່ສະເໝີພາບທາງດ້ານສິດອໍານາດ ແລະ ດ້ານຊັບພະຍາກອນທີ່ມີຢູ່ໃນປັດຈຸບັນ, ໃນເມື່ອວ່ານາຍບ້ານ ແລະ ພະນັກງານ ທ້ອງຖິ່ນເປັນຜູ້ຕົກລົງກັບບັນດາບໍລິສັດ. ຄຽງຄູ່ກັບການຫັນການຜະລິດກະສິກໍາເພື່ອເປັນສິນຄ້າແລ້ວ, ການນໍາໃຊ້ຢາປາບສັດຕູ ພືດ ກໍ່ເພີ່ມຂຶ້ນໄວວາຢ່າງບໍ່ມີຄວາມລະມັດລະວັງ, ນໍາໄປສູ່ຄວາມສ່ຽງຕໍ່ສຸຂະພາບ ຈາກການຖືກສານພິດ. ມີບົດຄວາມຈາກ ສິ່ງພິມໜຶ່ງໃນປີ 2018 ລາຍງານວ່າມີ ການໃຊ້ຢາປາບສັດຕູພືດເພີ່ມຂຶ້ນ 236 ເປີເຊັນ ໃນໄລຍະ 10 ປີ ຜ່ານມາ ອີງຕາມຕົວເລກ ທີ່ເປັນທາງການ ແລະ ໃນການສໍາຫຼວດຊາວກະສິກອນ ແລະ ຜູ້ໃຊ້ຢາປາບສັດຕູພືດ ໃນເຂດໜຶ່ງ, ຫຼາຍກວ່າ 90 ເປີເຊັນ ລາຍງານວ່າ ຢ່າງນ້ອຍກໍ່ມີໜຶ່ງອາການສະແດງອອກ ເຖິງການຖືກສານພິດຢ່າງຊໍ້າເຮື້ອ ຈາກການໃຊ້ຢາປາບສັດຕູພືດ, ລວມທັງ ອາການເຈັບຫົວ, ວິນຫົວ, ເປັນຜື່ນ, ປັ່ນທ້ອງປວດຮາກ, ຮາກ ແລະ ຫາຍໃຈຍາກ.[27]

---

[26]ກໍາມະການສູນກາງ ຂອງ ພັກປະຊາຊົນປະຕິວັດລາວ (Central Committee of the Lao People's Revolutionary Party), "No. 026/CC. 2017.ມະຕິຕົກລົງຂອງ ຄະນະກໍາມະການສູນກາງພັກ ວ່າດ້ວຍການຍົກສູງການຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່," ມີນາ 2018,http://www.laolandinfo.org/wp-content/uploads/2012/03/Party-Resolution-about-Land-in-Laos-English-translation.pdf.

[27]ບົດລາຍງານຂອງLao Upland Rural Advisory Service, "Pesticide Use in Lao PDR: Health and Environmental Impacts," January 2018, p. 10.

**ຄວາມລົ້ມເຫຼວທີ່ຈະເຊື່ອມໂຍງການເຕີບໂຕ ກັບການຫຼຸດຜ່ອນຄວາມທຸກຍາກ**

ເສັ້ນທາງເຊິ່ງບັນດາໂຄງການ ແລະ ຍຸດທະສາດດ້ານການເຕີບໂຕ ຂອງ GDP, ເຊັ່ນ: ເຂື່ອນໄຟຟ້າ, ການສໍາປະທານທີ່ດິນ ແລະ ເຂດເສດຖະກິດພິເສດ, ທີ່ຕ້ອງຊ່ວຍປະຊາຊົນທີ່ຢູ່ໃນຄວາມທຸກຍາກ ຍັງບໍ່ຈະແຈ້ງວ່າ ມີເງື່ອນໄຂທີ່ຈະພາໃຫ້ການເຕີບໂຕ ຂອງ GDP ຈະປ່ຽນເປັນການສະໜັບສະໜູນທີ່ມີຄວາມໝາຍໃຫ້ແກ່ປະຊາຊົນຜູ້ທີ່ຢູ່ໃນຄວາມທຸກຍາກ. ການສ້າງລາຍຮັບຂອງ ລັດຖະບານ ຍັງຫ່າງໄກຫຼາຍຈາກການເປັນຖານເສດຖະກິດທີ່ເຂັ້ມແຂງ. ສິ່ງຈູງໃຈດ້ານການເງິນ ແລະ ການຍົກເວັ້ນທີ່ໃຈໃຫຍ່ ເຊິ່ງ ສ່ວນຫຼາຍສະເໜີ ໃຫ້ເພື່ອສ້າງແຮງຈູງໃຈໃຫ້ແກ່ການລົງທຶນ ຈໍາກັດຈໍານວນລາຍຮັບທີ່ ສປປ ລາວ ເກັບ, ພາໃຫ້ແມ່ນແຕ່ ທະນາຄານໂລກ ແລະ ອົງການ IMF ກໍ່ເລັ່ງໃຫ້ມີການທົບທວນ ແລະ ປະຕິຮູບການຍົກເວັ້ນຕ່າງໆ.[28]ຕົວຢ່າງໜຶ່ງ, ການ ປະກອບສ່ວນເຂົ້າໃນງົບປະມານ ຈາກເຂດເສດຖະກິດພິເສດທັງໝົດແມ່ນປະມານ 20 ລ້ານໂດລາ ໃນປີ 2017 ຫຼື ໜ້ອຍກວ່າ 1 ເປີເຊັນ ຂອງ ລາຍຮັບພາຍໃນ[29]ແລະ ດັ່ງທີ່ລະບຸໄວ້ລຸ່ມນີ້, ໃນປີ 2017, ຂະແໜງໄຟຟ້າພະລັງນໍ້າສ້າງໄດ້ໜ້ອຍກວ່າ 1 ເປີເຊັນຂອງ GDP ໃນຖານະເປັນລາຍຮັບ ຂອງລັດຖະບານ.[30]ລັດຖະບານລົ້ມເຫຼວທີ່ຈະລົງທຶນພຽງພໍໃສ່ລາຍຮັບທີ່ຕົນເອງມີ ໃນການບໍລິການ ຂັ້ນພື້ນຖານຕົວຈິງ ເຊິ່ງຈະ ສະໜັບສະໜູນປະຊາຊົນໃຫ້ອອກຈາກຄວາມທຸກຍາກ, ເຊັ່ນ: ສາທາລະນະສຸກ, ການສຶກສາ ແລະ ການໂອນເງິນສົດ. ດັ່ງທີ່ໃຫ້ ລາຍລະອຽດລຸ່ມນີ້, ເຊັ່ນ: ການໃຊ້ຈ່າຍແມ່ນຕໍ່າຢູ່ແລ້ວ ເມື່ອທຽບກັບມາດຕະຖານຂອງຂົງເຂດພາກ ພື້ນນີ້ ແລະ ຍັງຄົງສືບຕໍ່ ຕໍ່າກວ່າເປົ້າໝາຍຂອງລັດຖະບານ. ໜີ້ສິນຂອງລັດທີ່ສໍາຄັນ ທີ່ຢືມມາໃນໂຄງການການເງິນ, ໃນເງື່ອນໄຂທີ່ ຍິ່ງຄຸມເຄືອ ແລະ ທີ່ບໍ່ໜ້າຍິນຍອມ, ພ້ອມມີພົນທີ່ຕາມມາສໍາລັບຮຸ່ນຄົນຕໍ່ໄປ. ຄວາມບໍ່ແຈ່ມແຈ້ງຂອງແຫຼ່ງລາຍຮັບ ແລະ ລາຍຈ່າຍ ຂອງລັດ ໝາຍເຖິງວ່າ ມີຫຼັກຖານຢັ້ງຢືນໜ້ອຍຫຼາຍ ສໍາລັບກໍລະນີທີ່ວ່າ ການຂະຫຍາຍໂຕທາງດ້ານເສດຖະກິດ ສະໜັບສະໜູນ ການລົງທຶນໃສ່ຜູ້ທຸກຍາກ, ແຕ່ພັດເອື້ອຍປະໂຫຍດໃຫ້ແກ່ຜູ້ຮັ່ງມີແລ້ວ ແລະ ຜູ້ທີ່ມີອໍານາດ ແລະ ສືບຕໍ່ເພີ່ມຄວາມບໍ່ສະເໝີພາບ. ໃນດ້ານ ການສ້າງວຽກເຮັດງານທໍາ, ອີງຕາມກະຊວງແຜນການ ແລະ ການລົງທຶນ, ເຂດເສດຖະກິດພິເສດ 11 ແຫ່ງ ສ້າງວຽກເຮັດ ງານທໍາ ໄດ້ 27,416 ຄົນ ໃນປີ 2018 ແລະ ພຽງແຕ່ 34 ເປີເຊັນຂອງແຮງງານເຫຼົ່ານີ້ ແມ່ນກໍາມະກອນລາວ — ຍັງມີຄວາມຈໍາກັດ ໃນ ການປະຕິບັດນະໂຍບາຍທີ່ຈໍາກັດຈໍານວນພະນັກງານກໍາມະກອນຕ່າງປະເທດ ທີ່ຈ້າງງານໂດຍການລົງທຶນໂດຍກົງຂອງ ຕ່າງປະເທດ ໃຫ້ຢູ່ໃນລະດັບ 10 ເປີເຊັນເທົ່ານັ້ນ.[31]

## 4. ເຂື່ອນເຊປຽນ ເຊນໍ້ານ້ອຍ ແລະ ອານາຄົດຂອງໄຟຟ້າພະລັງນໍ້າ

ໃນເດືອນ ກໍລະກົດ ວັນທີ 23 2018 ຫຼັງຈາກໄລຍະທີ່ມີຝົນຕົກໜັກຜິດປົກກະຕິ ການເພພັງຂອງເຂື່ອນເສີມ ຂອງ ເຂື່ອນໄຟຟ້າ ເຊ ປຽນເຊນໍ້ານ້ອຍ ໄດ້ເປັນສາເຫດໃຫ້ມີນໍ້າຖ້ວມທີ່ຮ້າຍແຮງເຖິງຂັ້ນເອົາຊີວິດຄົນ ແລະ ເຮັດໃຫ້ມີການມ້າງເພທໍາລາຍ ເກີດຂຶ້ນ ໃນ

---

[28]ບົດລາຍງານຂອງອົງການກອງທຶນການເງິນສາກົນ (International Monetary Fund), "Lao People's Democratic Republic : 2017 Article IV Consultation-Press Release; Staff Report; and Statement by the Executive Director for Lao People's Democratic Republic," March 23, 2018, https://www.imf.org/en/Publications/CR/Issues/2018/03/23/Lao-Peoples-Democratic-Republic-2017-Article-IV-Consultation-Press-Release-Staff-Report-and-45750; World Bank, "Lao PDR economic monitor : safeguarding stability - an ongoing agenda: thematic section - how can farmers get more for their rice and consumers pay less?," 2018, http://documents.worldbank.org/curated/en/418261529002464394/Lao-PDR-economic-monitor-safeguarding-stability-an-ongoing-agenda-thematic-section-how-can-farmers-get-more-for-their-rice-and-consumers-pay-less pp. 12, 37.

[29]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR economic monitor : safeguarding stability - an ongoing agenda: thematic section - how can farmers get more for their rice and consumers pay less?," 2018, http://documents.worldbank.org/curated/en/418261529002464394/Lao-PDR-economic-monitor-safeguarding-stability-an-ongoing-agenda-thematic-section-how-can-farmers-get-more-for-their-rice-and-consumers-pay-less p. 11

[30]ບົດລາຍງານຂອງອົງການກອງທຶນການເງິນສາກົນ (International Monetary Fund), "Lao People's Democratic Republic : 2017 Article IV Consultation-Press Release; Staff Report; and Statement by the Executive Director for Lao People's Democratic Republic," March 23, 2018, https://www.imf.org/en/Publications/CR/Issues/2018/03/23/Lao-Peoples-Democratic-Republic-2017-Article-IV-Consultation-Press-Release-Staff-Report-and-45750 p. 38.

[31]ຂໍ້ມູນຕົວເລກທີ່ສະໜອງໂດຍກະຊວງແຜນການແລະການລົງທຶນ, ມີນາ 26, 2018.

ເມືອງສະໜາມໄຊ ຂອງ ແຂວງອັດຕະປື. ນໍ້າຖ້ວມທີ່ຮຸນແຮງ ໄດ້ມ້າງເພທໍາລາຍເຮືອນຊານ, ໂຄ່ນລົ້ມຕົ້ນໄມ້, ພັດພາຫານະ ຈິນປົ້ນ ແລະ ເຮັດໃຫ້ຫຼາຍພັນຄົນຕ້ອງຍົກຍ້າຍອອກຈາກບ້ານທີ່ໄດ້ຮັບຜົນກະທົບຮ້າຍແຮງ. 9 ເດືອນຜ່ານໄປ, ປະມານ 3,750 ຍັງຄົງຕ້ອງ ຄອງຄອຍ ເຊິ່ງໄດ້ອາໄສຢູ່ທີ່ພັກຊົ່ວຄາວເຊິ່ງແອອັດ ແລະ ຮ້ອນ ໂດຍບໍ່ມີຂໍ້ມູນຂ່າວສານກ່ຽວກັບວ່າ ອານາຄົດ ຈະເປັນແນວໃດ ແລະ ມີການສະໜັບສະໜູນທາງການເງິນທີ່ຈໍາກັດຫຼາຍ.

ບັນດາພະນັກງານຍອມຮັບວ່າ ຄົນເຫຼົ່ານີ້ ສ່ວນຫຼາຍສູນເສຍທຸກຢ່າງທີ່ເຂົາເຈົ້າເຄີຍມີ ໄປກັບເຫດການນໍ້າຖ້ວມ ແລະ ຜູ້ລາຍງານ ພິເສດເອງ ຮັບຮູ້ວ່າ ຢ່າງນ້ອຍ ມີທຶນ28.3 ລ້ານໂດລາ ໄດ້ຮັບທັນທີຈາກນອກປະເທດ ເພື່ອການຊ່ວຍເຫຼືອບັນເທົາທຸກ.[32]ແນວໃດ ກໍ່ຕາມ, ໃນດ້ານການສະໜັບສະໜູນໂດຍກົງທີ່ເປັນເງິນສົດ, ປະຊາຊົນໄດ້ຮັບພຽງແຕ່ 5,000 ຕໍ່ມື້ (ປະມານ 0.60 ໂດລາ), ມີ ການຈ່າຍເງິນມູນຄ່າ 100,000 ກີບຕໍ່ເດືອນ (ປະມານ 11.65 ໂດລາ) ແລະ ເຂົ້າ 20 ກິໂລກຣາມ— ເຊິ່ງເປັນຈໍານວນ ທີ່ຮັບປະກັນ ວ່າ ປະຊາຊົນຈະດໍາລົງຊີວິດຢູ່ໃນຄວາມທຸກຍາກແນ່ນອນ. ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າໄດ້ພົບກັບປະຊາຊົນ ຫຼາກຫຼາຍ ຄົນໃນແຄ້ມ ຕ່າງໆ ຜູ້ທີ່ລາຍງານວ່າ ເຂົາເຈົ້າບໍ່ໄດ້ຮັບການສະໜັບສະໜູນດ້ານການເງິນໃດໆເລີຍ ໃນເດືອນ ກຸມພາ ຫຼື ມີນາ.[33]ປະຊາຊົນບອກ ຂ້າພະເຈົ້າວ່າ ເຂົາເຈົ້າບໍ່ໄດ້ມີເງິນຊື້ອາຫານ ຫຼື ນໍ້າດື່ມ, ບໍ່ມີເງິນສົ່ງລູກໄປໂຮງໝໍ ແລະ ໄດ້ກູ້ໜີ້ຢືມສິນ ເພື່ອໃຫ້ ຢູ່ລອດ. ສະຖານະ ການຄືດັ່ງກ່າວ ແມ່ນຫຍຸ້ງຍາກຫຼາຍ ເຊິ່ງໃນສະຖານະການຄືດັ່ງກ່າວ ປະຊາຊົນບາງຈໍານວນກໍ່ຢາກຈະກັບເມືອ ບ້ານຂອງເຂົາເຈົ້າ ຫຼາຍກວ່າ ເພື່ອພະຍຸງຊີວິດໄປໃນຫ້ອງນ້ອຍໆກໍ່ຕາມໃນເຮືອນທີ່ຍັງຄົງເຫຼືອຢູ່ຂອງເຂົາເຈົ້າ, ແທນທີ່ຈະຢູ່ ແຄ້ມຊົ່ວຄາວນີ້, ເຊິ່ງເປັນ ບ່ອນທີ່ມີສະພາບເງື່ອນໄຂທີ່ມີຜູ້ໜຶ່ງພັນລະນາວ່າ "ທໍລະມານ". ເມື່ອໄດ້ຂໍໃຫ້ເຂົາເຈົ້າປະເມີນ ການ ຮັບມືກັບໄພພິບັດ, ພະນັກງານ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ບອກວ່າ ໃນຂະນະທີ່ລັດຖະບານຢູ່ພະຍາຍາມ ເຮັດດີທີ່ສຸດເທົ່າທີ່ຈະເຮັດໄດ້, "ພວກເຮົາກໍ່ບໍ່ສາມາດເວົ້າໄດ້ຢ່າງເປັນທາງການວ່າ ພວກເຮົາພໍໃຈ ຫຼື ບໍ່ກັບການຮັບມືກັບສະພາບ ທີ່ເກີດຂຶ້ນໃນແຂວງອັດຕະປື."

ລັດຖະບານ ກໍາລັງວາງແຜນເພື່ອສ້າງວິທີການແກ້ໄຂທີ່ຍາວນານສໍາລັບປະຊາຊົນ, ແຕ່ກໍ່ຍັງມີຄວາມບໍ່ແນ່ນອນຫຼາຍໃນດ້ານຂອງ ເວລາ ແລະ ຮູບລັກສະນະຂອງແຜນນີ້, ຄວາມບໍ່ແນ່ນອນທີ່ປະຊາຊົນທີ່ຢູ່ແຄ້ມສ່ວນຫຼາຍຮູ້ສຶກ. ຂ້າພະເຈົ້າໄດ້ຮັບການບອກເລົ່າ ຈາກອໍານາດການປົກຄອງຢູ່ຂັ້ນແຂວງ ແລະ ຂັ້ນເມືອງວ່າ ມັນຈະໃຊ້ເວລາ ສອງ ເຖິງ ສາມປີ ເພື່ອສ້າງບ່ອນຍົກຍ້າຍຈັດສັນທີ່ ຖາວອນແລ້ວ ແລະ ປະຊາຊົນລາຍງານວ່າ ເຂົາເຈົ້າໄດ້ຮັບການບອກກ່າວວ່າ ເຂົາເຈົ້າອາດຕ້ອງໄດ້ຖ້າເຖິງຫ້າປີ. ຄວາມອຸກອັ່ງ ຂອງ ເຂົາເຈົ້າ ເຫັນໄດ້ຢ່າງຊັດເຈນ. ແມ່ຍິງຄົນໜຶ່ງອະທິບາຍວ່າ "ຂ້ອຍບໍ່ສາມາດທີ່ຈະອາໄສຄໍາໝັ້ນສັນຍາທີ່ວ່າ ຂ້ອຍຈະໄດ້ເຮືອນ ໃນ 5 ປີ ຕໍ່ໜ້າ ໃນເມື່ອວ່າ ເງິນທີ່ຄວນໄດ້ຮັບແຕ່ລະເດືອນກໍ່ຍັງຈ່າຍຊ້າ." ຜູ້ຊາຍອີກຄົນໜຶ່ງເວົ້າວ່າ "ພວກເຮົາຈະຕາຍກ່ອນ ທີ່ພວກເຮົາ ຈະໄດ້ເຫັນເຮືອນໃໝ່." ແລະເຖິງແມ່ນວ່າພະນັກງານຂັ້ນຄົນໜຶ່ງ ຈະຮັບຮອງກັບຂ້າພະເຈົ້າວ່າໄດ້ມີ "ການປຶກສາຫາ ຫາລືທີ່ແທ້ຈິງ" ກ່ຽວກັບແຜນອານາຄົດເກີດຂຶ້ນແທ້, ແຕ່ຄົນສ່ວນໃຫຍ່ ທີ່ຂ້າພະເຈົ້າໄດ້ລົມນໍາໂດຍບໍ່ມີຕາງໜ້າຝ່າຍລັດ ຫຼື ທີ່ບໍ່ມີນາຍບ້ານເຂົ້າ ຟັງນໍານັ້ນ ບອກວ່າ ເຂົາເຈົ້າໄດ້ຮັບຂໍ້ມູນພຽງເລັກນ້ອຍ ຫຼື ບໍ່ໄດ້ຮັບຂໍ້ມູນເລີຍ ກ່ຽວກັບວ່າມີແຜນສະເພາະ ເຈາະຈົງໃດໆ ແລະ ບັນດາແມ່ຍິງກໍ່ບອກເປັນສຽງດຽວກັນວ່າ ເຂົາເຈົ້າບໍ່ໄດ້ມີການປຶກສາຫາລື ຫຼື ບໍ່ໄດ້ມີການໃຫ້ໂອກາດໃດໆ ໃຫ້ເຂົາເຈົ້າປະກອບຄໍາ ເຫັນ. ເຖິງແມ່ນວ່າ ຂ້າພະເຈົ້າຖາມພະນັກງານລັດຖາມແລ້ວຖາມອີກວ່າ ແມ່ນຫຍັງຈຶ່ງຈະໃຊ້ເວລາເຖິງ ສອງ ຫາ ສາມປີ ໃນເມື່ອ ວ່າມີໜ້ອຍກວ່າ 4,000 ຄົນທີ່ຈໍາເປັນຕ້ອງມີທີ່ພັກ, ຂ້າພະເຈົ້າກໍ່ບໍ່ໄດ້ຮັບຄໍາຕອບທີ່ໜ້າເພິ່ງພໍໃຈ. ຄູ່ສົນທະນາໄດ້ຍົກໃຫ້ຂ້າພະເຈົ້າ

---

[32]ໃນວັນທີ 25 ມີນາ, ທີມງານຂອງຫ້ອງການສະຫະປະຊາຊາດປະຈໍາປະເທດໄດ້ບັນທຶກໄວ້ວ່າມີການປະກອບສ່ວນເປັນເງິນ8.3 ລ້ານໂດລາເຂົ້າໃນແຜນການການຮັບມືກັບໄພພິບັດຂອງທີມ ງານຊ່ວຍເຫຼືອດ້ານມະນຸດສະທໍາປະຈໍາເທດ(ເຊິ່ງລວມທັງບັນດາອົງການINGOs), ເຊິ່ງແຍກຕ່າງຫາກແລະບໍ່ລວມກັບຈໍານວນ10 ລ້ານໂດລາທີ່ປະທານຂອງກຸ່ມບໍລິສັດSK ທ່ານເຈແຕວອນ ຮັບປາວ່າຈະໃຫ້ແລະ10 ລ້ານໂດລາສະຫະລັດທີ່ບໍລິສັດPNPCຈະໃຫ້. ເບິ່ງບົດລາຍງານຂອງChris Humphrey, "Devastating Laos dam collapse leads to deforestation of protected forests," December 28, 2018, https://news.mongabay.com/2018/12/devastating-laos-dam-collapse-leads-to-deforestation-of-protected-forests/; http://www.nationmultimedia.com/detail/opinion/30357045.

[33]ຢູ່ແຂວງອັດຕະປື, ຜູ້ລາຍງານພິເສດ ໄດ້ຢ້ຽມຢາມ ແຄ້ມຊົ່ວຄາວສໍາລັບຜູ້ລອດຊີວິດ ຈາກການເພພັງຂອງເຂື່ອນເສີມ ຂອງ ເຊປຽນ ເຊນໍ້ານ້ອຍ 3 ແຫ່ງ ຄື: ຫາດຍາວ (598 ຄົນ), ຕະເມາະ ຢອດ (ປະມານ 871 ຄົນ) ແລະ ດົງບານ (ປະມານ 1,394 ຄົນ) ເຊັ່ນດຽວກັນກໍ່ໄປອີກບ້ານໜຶ່ງທີ່ຖືກທໍາລາຍໂດຍການເພພັງດັ່ງກ່າວ ຄື: ບ້ານໃໝ່. ຍັງມີອີກ 2 ແຄ້ມ ຄື: ດອນບຸກ (ປະມານ 529 ຄົນ) ແລະ ປິ່ນດົງ (ປະມານ 355 ຄົນ).ຈາກຈໍານວນຄາດຄະເນທັງໝົດ3,747 ທີ່ດໍາລົງຊີວິດຢູ່ 5 ແຄ້ມ, ປະມານ 1,500 ເຖິງ 1,700 ຄົນ ແມ່ນ ເດັກນ້ອຍອາຍຸລຸ່ມ 18 ປີ ແລະ 1,792 ຄົນ ແມ່ນແມ່ຍິງ.

ຟັງເຖິງຄວາມເປັນຈິງທີ່ກົງກັນຂ້າມວ່າ ໃນເຂດເສດຖະກິດພິເສດ (SEZs), ເມືອງທັງເມືອງ ໄດ້ຮັບການກໍ່ສ້າງໃນໄລຍະເວລາພຽງສັ້ນໆ.

ໃນຂະນະທີ່ໄພພິບັດແບບນີ້ ບໍ່ເຄີຍມີປະຫວັດມາກ່ອນໃນ ສປປ ລາວ, ແຕ່ມັນກໍ່ເປັນສິ່ງສະທ້ອນໃຫ້ເຫັນເຖິງ ແນວໂນ້ມໂດຍລວມ. ມັນເປັນບົດທົດສອບທີ່ສຳຄັນຕໍ່ຄວາມກຽມພ້ອມຂອງປະເທດ ຕໍ່ກັບການປ່ຽນແປງດິນຟ້າອາກາດ, ເຊິ່ງແນ່ນອນວ່າຈະນຳມາເຊິ່ງໄພພິບັດດ້ານດິນຟ້າອາກາດທີ່ຍິ່ງຮຸນແຮງຂຶ້ນກວ່າເກົ່າ ແລະ ມີຜົນສະທ້ອນຢ່າງບໍ່ສົມສ່ວນຕໍ່ປະຊາຊົນທີ່ຢູ່ໃນຄວາມທຸກຍາກ, ຜູ້ທີ່ມີຄວາມສາມາດໜ້ອຍທີ່ສຸດໃນການຫຼຸດຜ່ອນຄວາມສ່ຽງ ແລະ ເປັນຜູ້ທີ່ຂ້ອນຂ້າງວ່າດຳລົງຊີວິດຢູ່ໃນເຂດສ່ຽງ. ມັນຍັງກະຕຸ້ນການສົນທະນາທີ່ກຳລັງສືບຕໍ່ມີຢູ່ ກ່ຽວກັບ ຂະແໜງໄຟຟ້າພະລັງນ້ຳ, ກະຕຸ້ນໃຫ້ມີການທົບທວນຍຸດທະສາດຂອງລັດຖະບານ ສຳລັບການບັນລຸການພັດທະນາເສດຖະກິດ ດ້ວຍການສ້າງເຂື່ອນ ແລະ ສົ່ງອອກພະລັງງານໄຟຟ້າໃຫ້ປະເທດໃກ້ຄຽງໃນຂົງເຂດພາກພື້ນນີ້. ຄວາມທະເຍີທະຍານທີ່ຈະກາຍເປັນໝໍ້ໄຟຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ເປົ້າໝາຍຂອງລັດຖະບານ ຢ່າງໜ້ອຍກໍ່ແມ່ນເປົ້າໝາຍຂອງປີ 2017 ໃນການສ້າງເຂື່ອນໃຫ້ໄດ້ຈຳນວນ 100 ແຫ່ງ ຮອດປີ 2020ເບິ່ງຄືວ່າ ຍິ່ງນັບມື້ກັບມີບັນຫາເພີ່ມຂຶ້ນ.

ຜົນກະທົບດ້ານລົບດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ສ່ວນຫຼາຍເປັນຜົນກະທົບທີ່ເຮັດໃຫ້ທຸກຍາກລົງ ທີ່ການສ້າງເຂື່ອນ ແລະການດຳເນີນງານຂອງເຂື່ອນສາມາດນຳມານັ້ນ ມີການບັນທຶກຂໍ້ມູນເປັນລາຍລັກອັກສອນມາເປັນຢ່າງດີແລ້ວ ແລະ ຈະບໍ່ນຳ ມາລື້ມຄືນອີກຢູ່ນີ້.[34]ຢູ່ດ້ານເໜືອຂອງເຂື່ອນເຊປຽນ ເຊນ້ຳນ້ອຍ, ຂ້າພະເຈົ້າໄດ້ພົບກັບປະຊາຊົນຜູ້ທີ່ຖືກຍົກຍ້າຍໄປຢູ່ "ບ້ານ ຍົກຍ້າຍຈັດສັນ" ເພື່ອຫຼີກທາງໃຫ້ແກ່ການສ້າງອ່າງໂຕ່ງນ້ຳຂອງເຂື່ອນ 2 ອ່າງ. ເຂົາເຈົ້າໄດ້ຍົກໃຫ້ຟັງເຖິງຄວາມອັດອັ້ນຕັນໃຈ ທີ່ມາຮອດທຸກມື້ນີ້ທຸກຄົນກໍ່ລື້ງເຄີຍເປັນຢ່າງດີແລ້ວວ່າ ສຳລັບຊຸມຊົນຍົກຍ້າຍຈັດສັນໃນ ສປປ ລາວ ຜູ້ທີ່ຖືກບັງຄັບໃຫ້ ຍ້າຍອອກຈາກທີ່ດິນຂອງເຂົາເຈົ້າ ເພື່ອຫຼີກທາງໃຫ້ແກ່ ການນຳໃຊ້ "ທີ່ມີຜົນກຳໄລ" ຫຼາຍກວ່ານັ້ນ ວ່າ: ມີການຫຼຸດລົງຫຼາຍຂອງ ເນື້ອທີ່ດິນປູກຝັງ, ບໍ່ສາມາດເກັບເຄື່ອງປ່າຂອງດົງທີ່ກິນໄດ້ ແລະ ທີ່ເປັນຢາ ມາຈາກປ່າ, ການຄ້ຳປະກັນທາງດ້ານສະບຽບ ອາຫານ, ໜີ້ສິນ, ຂາດການປຶກສາຫາລືແລະ ການຊົດເຊີຍທີ່ບໍ່ພຽງພໍ.

ໃນໄລຍະນີ້, ມັນບໍ່ເປັນທີ່ຈະແຈ້ງວ່າ ໄຟຟ້າພະລັງນ້ຳ ນຳໄປສູ່ການລຶບລ້າງຄວາມທຸກຍາກທີ່ມີຄວາມໝາຍ. ໃນປີ 2017 ຂະແໜງໄຟຟ້າພະລັງນ້ຳ ສ້າງໄດ້ລາຍຮັບຂອງລັດຖະບານ ກວມເອົາໜ້ອຍກວ່າ 1 ເປີເຊັນຂອງ GDP,[35]ແລະ ບັນດາເຂື່ອນກໍ່ສ້າງວຽກ ເຮັດງານທຳໄດ້ໂດຍກົງຈຳນວນເລັກໜ້ອຍເທົ່ານັ້ນ.[36]ໃນຂະນະທີ່ຄຳຕອບຂອງລັດຖະບານແມ່ນວ່າ ກຳໄລຈຳນວນຫຼາຍນັ້ນ ກໍ່ຈະໄດ້ມາໃນທີ່ສຸດ,ແຕ່ກໍ່ມີຄວາມບໍ່ແນ່ນອນຫຼາຍກ່ຽວກັບຄາດຄະເນລະດັບຄວາມຕ້ອງການພະລັງງານໄຟຟ້າພະລັງນ້ຳ ທີ່ຈະນຳເຂົ້າຈາກ ສປປ ລາວ ເຊິ່ງກໍ່ເຮັດໃຫ້ເປັນສິ່ງທີ່ບໍ່ສະຫຼາດ ທີ່ຈະເອື່ອຍອີງຫຼາຍເກີນໄປໃສ່ການຄາດຄະເນລ່ວງໜ້າຍາວນານ ຄືດັ່ງກ່າວ.[37]ຜົນປະໂຫຍດທີ່ຄາດຄະເນຈະໄດ້ຮັບ ຍັງຈຳເປັນຕ້ອງໄດ້ຊັ່ງຊາທຽບກັບຈຳນວນ ແລະ ປະເພດໜີ້ສິນ ທີ່ປະເທດ ໄດ້ກູ້ຢືມມາ ເພື່ອສະໜອງທຶນໃຫ້ແກ່ບັນດາໂຄງການໄຟຟ້າພະລັງນ້ຳຕ່າງໆ. ທະນາຄານໂລກ ໄດ້ແນະນຳວ່າ ການລົງທຶນຂອງ ລັດ, ໂດຍສະເພາະທີ່ສະໜອງທຶນໂດຍເງິນກູ້, ຕ້ອງໄດ້ຈັດບຸລິມະສິດຢ່າງລະມັດລະວັງ ແລະ ຕັດລົງໃນຂະແໜງພະລັງງານ, ເຊິ່ງໃນນັ້ນ "ສະຖານະການ

---

[34]See, e.g., Baird, Ian & Shoemaker, Bruce & Manorom, Kanokwan, "The People and their River, the World Bank and its Dam: Revisiting the Xe Bang Fai River in Laos," *Development and Change* 46, 2015, 1080-1105.*Dead in the water: global lessons from the World Bank's model hydropower project in Laos*, Shoemaker, B. and Robichaud, W. (Eds), University of Wisconsin Press, 2018.

[35]ບົດລາຍງານຂອງອົງການກອງທຶນການເງິນສາກົນ (International Monetary Fund), "Lao People's Democratic Republic : 2017 Article IV Consultation-Press Release; Staff Report; and Statement by the Executive Director for Lao People's Democratic Republic," March 23, 2018, https://www.imf.org/en/Publications/CR/Issues/2018/03/23/Lao-Peoples-Democratic-Republic-2017-Article-IV-Consultation-Press-Release-Staff-Report-and-45750 p. 38.

[36]ບົດລາຍງານຂອງທະນາຄານໂລກ, "Lao PDR - Systematic Country Diagnostic: Priorities for Ending Poverty and Boosting Shared Prosperity," March 2017, http://documents.worldbank.org/curated/en/983001490107755004/Lao-PDR-Systematic-Country-Diagnostic-Priorities-for-Ending-Poverty-and-Boosting-Shared-Prosperity p. iv.

[37]Cronin, Richard, Eyler, Brian, and Weatherby, Courtney, "Letters from the Mekong: A Call for Strategic Basin Wide Energy Planning in Laos," October 2016,https://www.stimson.org/sites/default/files/file-attachments/Letters-Mekong-Call-Strategic-Basin-Energy-Planning-Laos.pdf p. 14.

ການສະສົມເພີ່ມຂຶ້ນຂອງໜີ້ສິນ ເຮັດໃຫ້ສະຖານະພາບທາງການເງິນຂອງສາທາລະນູປະໂພກຂີ້ຮ້າຍລົງ ເຊິ່ງສາມາດເພີ່ມພາລະຄວາມຮັບຜິດຊອບໃຫ້ແກ່ງົບປະມານເພີ່ມຂຶ້ນອີກຫຼາຍ, ຖ້າຕະຫຼາດທີ່ຈ່າຍເງິນດີຂອງຂະແໜງພະລັງງານ ບໍ່ສາມາດຮັບປະກັນໄດ້."[38]

ແຕ່ວ່າ, ເມື່ອມາເຖິງອານາຄົດຂອງໄຟຟ້າພະລັງນໍ້າ, ການສົນທະນາທີ່ຫຼາກຫຼາຍກັບພະນັກງານລະດັບອາວຸໂສ ກໍ່ບໍ່ໄດ້ໃຫ້ສິ່ງ ບົ່ງບອກເຖິງວ່າມີການຄົ້ນຄິດຄືນໃໝ່ຢ່າງຈິງຈັງໃດໆ ກ່ຽວກັບ ຍຸດທະສາດພື້ນຖານຂອງລັດຖະບານ. ທະນາຄານໂລກ ເຊິ່ງເຄີຍ ສະໜັບສະໜູນການພັດທະນາໄຟຟ້າພະລັງນໍ້າມາແຕ່ຍາວນານ ໃນ ສສປ ລາວ, ກໍ່ສືບຕໍ່ໃຫ້ຄໍາແນະນໍາໃຫ້ແກ່ລັດຖະບານ ກ່ຽວກັບໄຟຟ້າພະລັງນໍ້າ ເຖິງແມ່ນວ່າ ມີການວິຈານກ່ຽວກັບເຂື່ອນຕົວແບບຂອງເຂົາເຈົ້າ, ຄື: ນໍ້າເທີນ 2, ຍັງບໍ່ເວົ້າເຖິງ ການຈັດອັດດັບປະເທດ ເປັນທີ 132 ໃນຈໍານວນ 180 ປະເທດ ອີງໃສ່ທັດສະນະກ່ຽວກັບການສໍ້ລາດບັງຫຼວງ ຕາມດັດຊະນີ ສາກົນ ດ້ານຄວາມໂປ່ງໃສ.[39]

### 5. ບັນດາສິ່ງທ້າທາຍ

#### ບົດບາດຍິງຊາຍ

ແມ່ຍິງປະເຊີນການແບ່ງແຍກຫຼາຍ ໃນ ສປປ ລາວ, ເຊິ່ງມີຜົນສໍາຄັນຕໍ່ການລຶບລ້າງຄວາມທຸກຍາກ. ຄະນະກໍາມະການ ແລະອົງການສ່ວນຫຼາຍ ລວມມີຕາງໜ້າຂອງສະຫະພັນແມ່ຍິງ ແລະ ພະນັກງານລັດກໍ່ຍົກໃຫ້ເຫັນຢ່າງໄວວາ ເຖິງນະໂຍບາຍທີ່ເປັນ ທາງການ ວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ, ແຕ່ວິທີການທີ່ເປັນໜ້າປະທັບໃຈ ແລະ ເປັນພຽງສັນຍາລັກໃນດ້ານຮູບການເຫຼົ່ານີ້ ຕໍ່ກັບວຽກງານດ້ານບົດບາດຍິງຊາຍທີ່ມີສ່ວນຮ່ວມນັ້ນ ກໍ່ເຮັດໄດ້ໜ້ອຍຫຼາຍໃນຮັບປະກັນວ່າ ແມ່ຍິງໄດ້ຖືກຮວມເຂົ້າໃນຂະບວນການຕັດສິນບັນຫາ ແລະ ການຫາວິທີແກ້ໄຂ ຢ່າງມີຄວາມໝາຍ. ມີກໍລະນີຍົກເວັ້ນທີ່ພົ້ນເດັ່ນຈໍານວນໜຶ່ງ, ແຕ່ການປະຊຸມກັບ ພາກລັດ ສ່ວນຫຼວງຫຼາຍກໍ່ນໍາພາໂດຍຜູ້ຊາຍ ແລະ ຂ້າພະເຈົ້າກໍ່ໄດ້ພົບເຫັນກິລິຍາທ່າທາງທີ່ສະແດງອອກເຖິງລັກສະນະທີ່ຖືຜູ້ຊາຍ ເປັນໃຫຍ່ (patriarchal-ບິດາສິດທິລາດ) ໃນບັນດາຜູ້ຊາຍຫຼາຍຄົນທີ່ຂ້າພະເຈົ້າໄດ້ພົບ ຜູ້ທີ່ມີບົດບາດໃນລະດັບການນໍາ. ເມື່ອຖືກຖາມເຖິງວ່າ ຍ້ອນຫຍັງແມ່ຍິງຈຶ່ງບໍ່ມີຫຼາຍກວ່ານີ້ ໃນຕໍາແໜ່ງການນໍາຂອງອໍານາດການປົກຄອງ, ພະນັກງານລະດັບອາວຸໂສຫຼາຍຢູ່ຂັ້ນເມືອງ ທ່ານໜຶ່ງບອກຂ້າພະເຈົ້າວ່າ: "ແມ່ຍິງບໍ່ກ້າຫານພໍ ທີ່ຈະອອກມາຮັບເອົາຕໍາແໜ່ງການນໍາ, ເຂົາເຈົ້າບໍ່ຢາກຮຽນຫຼາຍ ຫຼື ຢູ່ໃນບົດບາດການນໍາຕາມປະເພນີ." ພະນັກງານອີກທ່ານໜຶ່ງຢູ່ຂັ້ນສູນກາງ ອະທິບາຍໃຫ້ຂ້າພະເຈົ້າຟັງວ່າ ລັດຖະບານຢາກສົ່ງເສີມແມ່ຍິງ ແຕ່ການມີສ່ວນຮ່ວມຂອງເຂົາເຈົ້າຂຶ້ນກັບວ່າ ແມ່ຍິງ "ເຂັ້ມແຂງ" ຫຼາຍປານໃດ, ແລະ ຂຶ້ນກັບ "ຄວາມສາມາດຂອງແມ່ຍິງ ທີ່ຈະເຮັດວຽກ, ທີ່ຈະຮັບເອົາຄວາມຮັບຜິດຊອບ."

ເຖິງແມ່ນວ່າ ມີຄວາມແຕກຕ່າງດ້ານຍິງ-ຊາຍ ໃນກໍາລັງແຮງງານ, ແຕ່ໂດຍທົ່ວໄປ ແມ່ຍິງກໍ່ກວມເອົາ ຂັ້ນທີ່ຕໍ່າກວ່າ ໃນຕະຫຼາດແຮງງານ ແລະ ມີໜ້າໜ້ອຍກວ່າໃນຂະແໜງທີ່ເປັນທາງການ (ແລະ ໃນຖັນແຖວທີ່ມີການສະໜອງການປົກປ້ອງທາງສັງຄົມ). ແມ່ຍິງກວມເອົາ 64 ເປີເຊັນຂອງກໍາມະກອນໃນສາຂາອາຊີບ "ລະດັບພື້ນຖານ" ແລະ ກວມເອົາ 63 ເປີເຊັນຂອງສາຂາອາຊີບ ທີ່ຈັດເປັນ ການບໍລິການ, ຮ້ານຂາຍເຄື່ອງ ແລະ ພະນັກງານຂາຍໃນຕະຫຼາດ, ໃນຂະນະທີ່ຜູ້ຊາຍ ກວມເອົາອັດຕາສ່ວນຫຼາຍ ໃນຖັນແຖວລັດຖະກອນ, ວິຊາການ (ພະນັກງານລະດັບມືອາຊີບ) ແລະ ວິຊາການເຕັກນິກຕ່າງໆ.[40]

---

[38]ບົດລາຍງານຂອງທະນາຄານໂລກ, "
Lao PDR economic monitor: safeguarding stability - an ongoing agenda: thematic section - how can farmers get more for their rice and consumers pay less?" June 2018,http://documents.worldbank.org/curated/en/418261529002464394/Lao-PDR-economic-monitor-safeguarding-stability-an-ongoing-agenda-thematic-section-how-can-farmers-get-more-for-their-rice-and-consumers-pay-less p. 4.

[39]ອົງການດ້ານຄວາມໂປ່ງໃສສາກົນ (Transparency International), "Laos," https://www.transparency.org/country/LAO.

[40]UNDP, "Lao PDR: Gender Equality," http://www.la.undp.org/content/lao_pdr/en/home/sustainable-development-goals/goal-5-gender-equality.html.

ພາລະດ້ານເວລາຂອງແມ່ຍິງຊົນນະບົດທີ່ຕ້ອງເຮັດວຽກເຮືອນທີ່ບໍ່ໄດ້ຮັບຄ່າຈ້າງ ຈໍາກັດຄວາມສາມາດຂອງເຂົາເຈົ້າບໍ່ໃຫ້ເຂົ້າເຖິງການຈ້າງງານທີ່ໄດ້ຮັບຄ່າຈ້າງ ແລະ ປະກອບສ່ວນເຂົ້າໃນຜົນໄດ້ຮັບທີ່ມີຄວາມບໍ່ສະເໝີພາບດ້ານການສຶກສາ ເຊິ່ງສິ່ງຜົນໃຫ້ ເປັນການກີດຂວາງເຂົາເຈົ້າບໍ່ໃຫ້ສາມາດແຂ່ງຂັນກັບຜູ້ຊາຍໄດ້ ໃນການຍາດແຍ່ງເອົາວຽກທີ່ໃຊ້ທັກສະ ແລະ ທີ່ໄດ້ຮັບຄ່າຈ້າງ ດີກວ່າ.[41] ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ແມ່ນທຸກຍາກແບບບໍ່ສົມສ່ວນ, ໂດຍມີແມ່ຍິງເຮັດວຽກຫຼາຍຊົ່ວໂມງກວ່າ ແລະ ໄດ້ສ້າງລາຍຮັບໂດຍສະເລ່ຍ ໄດ້ໜ້ອຍກວ່າ ຄົວເຮືອນທີ່ມີຜູ້ຊາຍເປັນຫົວໜ້າຄອບຄົວ.[42]

ແມ່ຍິງມີໜ້າຢູ່ໃນກໍາມະການສູນກາງພັກໜ້ອຍ, ແລະ ທັງຢູ່ໃນຕໍາແໜ່ງລະດັບຕໍ່າກວ່າໃນຖັນແຖວຂອງພັກ.[43]ອີງຕາມ ສະຫະພັນແມ່ຍິງລາວ, ໃນຈໍານວນສະມາຊິກຂອງຄະນະກໍາມະການສູນກາງພັກ ຈໍານວນ 69 ທ່ານນັ້ນ ມີແມ່ຍິງ 7 ທ່ານ, ມີແຕ່ 10 ປາຍເປີເຊັນເທົ່ານັ້ນ.[44]ມີແມ່ຍິງໜ້ອຍກວ່າ 3 ເປີເຊັນທີ່ເປັນນາຍບ້ານ,[45]ແລະ ໃນປີ 2012 ແມ່ຍິງກວມເອົາ ພຽງແຕ່ 5 ເປີເຊັນ ຂອງສະຖາບັນທີ່ຕັດສິນບັນຫາ (ນອກຈາກສະພາແຫ່ງຊາດ, ເຊິ່ງມີອັດຕາສ່ວນແມ່ຍິງທີ່ສູງກວ່າ ຄືກວມເອົາ 27.5 ເປີເຊັນ).[46]ຊ່ອງຫວ່າງແມ່ນມີຫຼາຍສະເພາະ ສໍາລັບແມ່ຍິງໃນເຂດຊົນນະບົດ ແລະ ໃນກຸ່ມຊົນເຜົ່າສ່ວນນ້ອຍ, ຜູ້ທີ່ຍິ່ງຖືກຈໍາກັດ ຫຼາຍກວ່າ ຈາກອຸປະສັກດ້ານວັດທະນາທໍາ-ສັງຄົມຕາມຮີດຄອງປະເພນີເດີມ ເຊິ່ງສາມາດເກືອດຫ້າມແມ່ຍິງບໍ່ໃຫ້ເຂົ້າເຖິງ ການສຶກສາ, ເຂົ້າເຖິງກິດຈະກໍາທາງສັງຄົມ ແລະ ກິດຈະກໍາພົນລະເມືອງຕ່າງໆ ຫຼື ເຂົ້າເຖິງຕໍາແໜ່ງການນໍາຕ່າງໆ.[47]

ຊ່ອງຫວ່າງທາງດ້ານການສຶກສາຍັງຄົງສືບຕໍ່ມີຢູ່, ໂດຍສະເພາະແມ່ນຢູ່ໃນລະດັບການສຶກສາຂັ້ນສູງ, ເຊິ່ງມີເດັກຍິງ 66 ຄົນ ເຂົ້າຮຽນຊັ້ນມັດທະຍົມ ໃນຂະນະທີ່ເດັກຊາຍທຸກໆຄົນໃນຈໍານວນ 100 ຄົນ ໃນກຸ່ມປະຊາກອນ "ຄົວເຮືອນທີ່ທຸກຍາກທີ່ສຸດ"[48]ໄດ້ເຂົ້າຮຽນ ແລະ ຍັງມີຊ່ອງຫວ່າງຄວາມແຕກຕ່າງດ້ານການຮູ້ໜັງສື ລະຫວ່າງ ຍິງ ແລະ ຊາຍ 14 ເປີເຊັນ.[49]ໃນຈໍານວນຄົນຜູ້ທີ່ ບໍ່ເຄີຍເຂົ້າໂຮງຮຽນເລີຍ ສ່ວນຫຼາຍແມ່ນເດັກຍິງ,[50]ແລະ ແມ່ຍິງກໍ່ມີແນວໂນ້ມຫຼາຍກວ່າທີ່ຈະໃຫ້ຢູ່ເຮືອນ ຍ້ອນຄວາມເປັນຫວ່ງ ເປັນໄຍດ້ານຄວາມປອດໄພ (ໂດຍສະເພາະຖ້າຫາກວ່າ ໂຮງຮຽນມັດທະຍົມຫາກຢູ່ໄກ) ຫຼື ເພື່ອເປັນແຮງງານເດັກ ແລະ ຮັບຜິດຊອບເຮັດວຽກເຮືອນ ຫຼື ຍ້ອນມີການແຕ່ງງານແຕ່ຍັງອາຍຸນ້ອຍ.[51]

ແມ່ຍິງທີ່ຂ້າພະເຈົ້າໄດ້ລົມນໍາ ໃນບ້ານ ແລະ ໃນແຄ້ມ ມີແນວໂນ້ມໜ້ອຍຫຼາຍທີ່ຈະໄດ້ຮັບການແຈ້ງຂໍ້ມູນ ຫຼື ໄດ້ຮັບການປຶກສາຫາລືນໍາກ່ຽວກັບການຕັດສິນໃຈທີ່ສໍາຄັນກ່ຽວກັບຊີວິດການເປັນຢູ່, ລວມທັງການຊຸດເຊີຍການຍົກຍ້າຍຈັດສັນ ຫຼື ການຊ່ວຍເຫຼືອບັນເທົາທຸກຈາກໄພພິບັດ. ຄະນະກໍາມະການໄກ່ເກ່ຍຂັ້ນບ້ານ, ເຊິ່ງມີໜ້າທີ່ເປັນກົນໄກເຄິ່ງຕຸລາການ ໃນຫຼາຍໆບ້ານ ປະກົດວ່າ ມີຜູ້ຊາຍກວມອໍານາດສູງກວ່າ ແຕ່ພັດເປັນຄະນະທີ່ຈັດການກັບຄະດີທີ່ອ່ອນໄຫວຕ່າງໆ ລວມທັງ ຄະດີຂົ່ມຂືນທີ່ກໍ່ມີຂຶ້ນເລື້ອຍໆ.

---

[41]ບົດລາຍງານຂອງສະມາຄົມເພື່ອພັດທະນາແມ່ຍິງ ແລະ ການສຶກສາດ້ານກົດໝາຍ (Association for Development of Women and Legal Education), "Capacity Assessment Report: CEDAW Implementation in Lao PDR," June 2016, http://adwlelaos.org/wp-content/uploads/2017/09/SRP001_Cedaw-Assessment_EF-14-07-2016-ENG.pdf.

[42]ບົດຂອງສູນກາງສະຫະພັນແມ່ຍິງລາວ, "Lao PDR Gender Profile," 2018, http://www.directoryofngos.org/ingo2/a/download?id=document2289&field=file&notetype=document&file=TGFvIFBEUiBHZW5kZXIgUHJvZmlsZV9GaW5hbCBWZXJzaW9uIDEyLjYuMjAxOC5wZGY.

[43]Bertelsmann Stiftung, "BTI 2018 | Laos Country Report," bti-project.org/en/reports/country-reports/detail/itc/LAO/.

[44]ການປະຊຸມກັບສູນກາງສະຫະພັນແມ່ຍິງລາວໃນເດືອນມີນາວັນທີ 25, 2019.

[45]US Department of State, "Laos 2017 Human Rights Report," https://www.state.gov/documents/org`anization/277337.pdf.

[46]UNDP, "Lao PDR: Gender Equality," http://www.la.undp.org/content/lao_pdr/en/home/sustainable-development-goals/goal-5-gender-equality.html.

[47]Underrepresented Nations and Peoples Organization, "Alternative Report Submitted to the UN Committee on the Elimination of All Forms of Discrimination Against Women Lao People's Democratic Republic," October 4, 2018, https://unpo.org/article/21143.

[48]UNDP, "Lao PDR: Gender Equality," http://www.la.undp.org/content/lao_pdr/en/home/sustainable-development-goals/goal-5-gender-equality.html.

[49]ບົດລາຍງານຂອງສະມາຄົມເພື່ອການພັດທະນາແມ່ຍິງ ແລະ ການສຶກສາດ້ານກົດໝາຍ (ADWLE), "Capacity Assessment Report – CEDAW Implementation in Lao PDR, June 2016.

[50]ບົດລາຍງານຂອງທະນາຄານໂລກ, "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 46.

[51]UNDP, "Lao PDR: Gender Equality," http://www.la.undp.org/content/lao_pdr/en/home/sustainable-development-goals/goal-5-gender-equality.html.

## ຊົນເຜົ່າສ່ວນໜ້ອຍ ແລະ ກຸ່ມຄົນພື້ນເມືອງ

ສປປ ລາວ ແມ່ນໜຶ່ງໃນບັນດາປະເທດໃນພາກພື້ນອາຊີບຕາເວັນອອກສ້ຽງໃຕ້ ທີ່ມີຄວາມຫຼາກຫຼາຍດ້ານຊົນເຜົ່າ. ລັດຖະທຳມະນູນ ໃຫ້ນິຍາມປະເທດວ່າ ເປັນລັດທີ່ມີຫຼາຍຊົນເຜົ່າ, ໂດຍມີຄວາມສະເໝີພາບກັນຂອງທຸກກຸ່ມຊົນເຜົ່າ. ແຕ່ວ່າ ຄວາມທຸກຍາກຍັງຄົງກະຈຸກຢູ່ໃນກຸ່ມຊົນເຜົ່າສ່ວນໜ້ອຍ (ທີ່ບໍ່ແມ່ນກຸ່ມພາສາ ລາວ-ໄຕ), ຜູ້ທີ່ມີອັດຕາການສຶກສາຕໍ່າກວ່າ, ທີ່ມີພື້ນຖານອາໄສການຜະລິດກະສິກຳ ແລະ ດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກກວ່າ.[52]ລັດຖະບານຮັບຮູ້ຢ່າງເປັນທາງການວ່າ ມີຊົນເຜົ່າ 49ກຸ່ມ, ໃນຂະນະທີ່ການຄາດຄະເນເອກະລາດ ລະບຸຈຳນວນວ່າມີຫຼາຍກວ່າ 200.[53]

ກຸ່ມຊົນເຜົ່າສ່ວນໜ້ອຍ ກວມເອົາ 45 ເປີເຊັນຂອງພົນລະເມືອງ.[54]ເຂົາເຈົ້າປະເຊີນກັບອັດຕາຄວາມທຸກຍາກທີ່ສູງກວ່າ,[55]ສ່ວນຫຼາຍກໍ່ຈະເຮັດການຜະລິດກະສິກຳແບບພໍກຸ້ມກິນ, ແບບເຄິ່ງ-ຄົງທີ່ ຫຼື ເອີ້ນວ່າການເຮັດໄຮ່, ສ່ວນຫຼາຍດຳລົງຊີວິດຢູ່ເຂດ ທີ່ມີການບໍລິການທາງດ້ານສັງຄົມ ແລະ ໂຄງລ່າງພື້ນຖານທີ່ຈຳກັດ ແລະ ອາດບໍ່ເວົ້າພາສາລາວ.[56]ບົດລາຍງານຂອງທະນາຄານ ໂລກ 2017 ຄົ້ນພົບວ່າຊົນເຜົ່າສ່ວນໜ້ອຍ ຕາມຫຼັງເຜົ່າສ່ວນໃຫຍ່ ລາວ-ໄຕ ຢູ່ໃນດ້ານເສດຖະກິດທຸກລະດັບ: ຊົນເຜົ່າສ່ວນໜ້ອຍ ທີ່ທຸກຍາກແມ່ນຢູ່ໃນສະພາບທີ່ຂີ້ຮ້າຍກວ່າເຜົ່າລາວ-ໄຕທີ່ທຸກຍາກ, ແຕ່ກຸ່ມຊົນເຜົ່າສ່ວນໜ້ອຍທີ່ຖືວ່າເປັນຜູ້ຮັ່ງມີແລ້ວ ກໍ່ຍັງທຸກກວ່າເຜົ່າລາວ-ໄຕ ທີ່ຮັ່ງມີ.[57]ເຂົາເຈົ້າມີການເຂົ້າເຖິງການຮັກສາສຸຂະພາບທີ່ຈຳກັດກວ່າ,[58]ມີອັດຕາການສຶກສາທີ່ຕໍ່າກວ່າ ແລະ ມີການເຂົ້າເຖິງນໍ້າສະອາດ ແລະ ສຸຂາພິບານໃນອັດຕາສ່ວນທີ່ໜ້ອຍກວ່າ. ຕົວຢ່າງ: ເປີເຊັນຂອງຊົນເຜົ່າສ່ວນໜ້ອຍ ທີ່ອາໄສ ນໍ້າທີ່ບໍ່ທັນໄດ້ຮັບການປັບປຸງ ຫຼື ນໍ້າອອກບໍ່ (unimproved or surface water) ແມ່ນຢູ່ 20 ຫາ 32.5 ເປີເຊັນ, ທຽບກັບ 8.5 ຂອງກຸ່ມລາວ-ໄຕ. ແລະໃນຂະນະທີ່ມີກຸ່ມລາວ-ໄຕພຽງ 13.9 ເປີເຊັນ ທີ່ບໍ່ໃຊ້ວິດຖ່າຍ ແຕ່ໃນກຸ່ມຊົນເຜົ່າສ່ວນໜ້ອຍ ແມ່ນສູງເຖິງ ລະຫວ່າງ 30.3 ຫາ 46.3 ເປີເຊັນ.[59]

ທີ່ສຳຄັນ, ຊ່ອງຫວ່າງຄວາມແຕກຕ່າງລະຫວ່າງກຸ່ມຊົນເຜົ່າສ່ວນໜ້ອຍ ແລະ ກຸ່ມເຜົ່າສ່ວນໃຫຍ່ ລາວ-ໄຕ ບໍ່ສາມາດທີ່ຈະອະທິບາຍໄດ້ຢ່າງເຕັມສ່ວນວ່າເປັນຍ້ອນຄວາມແຕກຕ່າງທາງດ້ານຄຸນລັກສະນະຕ່າງໆ ເຊັ່ນ: ຂະໜາດຂອງຄົວເຮືອນທີ່ໃຫຍ່ກວ່າ ຫຼື ຍ້ອນການເຂົ້າເຖິງການສຶກສາ ແລະ ໂຄງລ່າງພື້ນຖານທີ່ຈຳກັດກວ່າ; ແຕ່ກໍ່ມີສິ່ງບົ່ງບອກຕົວຈິງແທ້ວ່າ ນະໂຍບາຍຕ່າງໆຂອງລັດຖະບານບໍ່ເອື້ອອຳນວຍຕໍ່ຊົນເຜົ່າສ່ວນໜ້ອຍ.[60]

---

[52]ບົດລາຍງານຂອງທະນາຄານໂລກ, "Lao Poverty Policy Brief: Taxonomy of the Poor and Its Usefulness in Policy Design," December 2017, http://documents.worldbank.org/curated/en/114211505815281554/pdf/119794-WP-taxonomy-PovertyReport-PUBLIC-ENGLISH-and-LAO-ENGLAOfinal.pdf p. 3.

[53]ອົງການສາກົນເພື່ອກຸ່ມສິດທິຂອງຊົນເຜົ່າສ່ວນໜ້ອຍ (Minority Rights Group International), "Laos," https://minorityrights.org/country/laos/.

[54]Ian Baird, Translocal assemblages and the circulation of the concept of "indigenous peoples" in Laos, Political Geography 46 (2015) 54-64; World Population Review, "Laos Population 2019," http://worldpopulationreview.com/countries/laos-population/; Minority Rights Group International, "Laos," https://minorityrights.org/country/laos/; World Population Review, "Laos Population 2019," http://worldpopulationreview.com/countries/laos-population/.

[55]ບົດລາຍງານຂອງທະນາຄານໂລກ "Lao Poverty Policy Brief: Why Are Ethnic Minorities Poor?," 2017, http://documents.worldbank.org/curated/en/501721505813643980/pdf/119793-WP-PovertyReport-PUBLIC-ENGLISH-and-LAO-ENGLAOFinal.pdf p. 4.

[56]Elizabeth King and Dominique van de Walle, "Indigenous Peoples, Poverty and Development, Chapter 7: Laos," March 2010, http://siteresources.worldbank.org/EXTINDPEOPLE/Resources/407801-1271860301656/Chapter_7_Laos.pdf p. 2.

[57]ບົດລາຍງານຂອງທະນາຄານໂລກ "Lao Poverty Policy Brief: Why Are Ethnic Minorities Poor?," 2017, http://documents.worldbank.org/curated/en/501721505813643980/pdf/119793-WP-PovertyReport-PUBLIC-ENGLISH-and-LAO-ENGLAOFinal.pdf p. 4.

[58]ການພັດທະນາແບບເປີດກວ້າງ (Open Development), "Laos: Ethnic Minorities and Indigenous People," October 5, 2018, https://laos.opendevelopmentmekong.net/topics/ethnic-minorities-and-indigenous-people/.

[59]ສູນສະຖິຕິແຫ່ງຊາດລາວ, ການສຳຫຼວດດັດຊະນີໝາຍສັງຄົມລາວII: ບົດລາຍງານສິ່ງທີ່ຄົ້ນພົບຈາກການສຳຫຼວດ," 2017," June 2018, https://www.lsb.gov.la/wp-content/uploads/2018/10/Lao-Social-Inndicator-Survey-Lsis-II-2017_EN.pdf p. 333.

[60]ບົດລາຍງານຂອງທະນາຄານໂລກ, "Poverty Profile in Lao PDR," 2014, http://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf p. 14; World Bank, "Lao PDR Poverty Policy Notes: Drivers of Poverty Reduction in Lao PDR," October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 23.

ຊົນເຜົ່າສ່ວນໜ້ອຍ ມີການເຂົ້າເຖິງໂຮງຮຽນທີ່ຈຳກັດ, ເຊິ່ງມີພຽງແຕ່ 5 ເປີເຊັນ ທີ່ດຳລົງຊີວິດຢູ່ໃນບ້ານທີ່ມີ ໂຮງຮຽນມັດທະຍົມປາຍ, ທຽບກັບ 16 ເປີເຊັນຂອງກຸ່ມລາວ-ໄຕ.[61]ສາມສິບສີ່ເປີເຊັນ ຂອງຊົນລາວ-ໄຕ, ແລະ ມີພຽງ 15 ເປີເຊັນມີການສຶກສາ ລະດັບມັດທະຍົມສົມບູນ ທຽບກັບ ກຸ່ມລາວ-ໄຕ ທີ່ມີເຖິງ 60 ເປີເຊັນ.[62]

ສຳລັບເດັກນ້ອຍ ຈາກຄອບຄົວຊົນເຜົ່າສ່ວນໜ້ອຍ ຜູ້ທີ່ອາດບໍ່ເວົ້າພາສາລາວຢູ່ເຮືອນ, ການຢືນຢັນຂອງລັດຖະບານລາວ ທີ່ເນັ້ນໜັກໃຫ້ ພາສາລາວ ເປັນພາສາດຽວທີ່ໃຊ້ໃນການສິດສອນນັ້ນ ເຮັດໃຫ້ເດັກນ້ອຍຊົນເປົ່າສ່ວນໜ້ອຍ ຢູ່ໃນສະຖານະການ ດ້ອຍໂອກາດ.[63]ໃນຂະນະທີ່ກະຊວງສຶກສາທິການ ແລະ ກິລາ ບອກຂ້າພະເຈົ້າວ່າ ເຂົາເຈົ້າບໍ່ສາມາດທີ່ຈະຄາດຫວັງວ່າຈະ ສະໜອງການສຶກສາເປັນ 50 ພາສາໄດ້, ແຕ່ນັ້ນກໍ່ບໍ່ຄວນຈະສະກັດກັ້ນໂອກາດບໍ່ໃຫ້ຄູອາຈານທີ່ມາຈາກຊຸມຊົນຊົນເຜົ່າ ສ່ວນໜ້ອຍນັ້ນສາມາດນຳໃຊ້ພາສາຂອງຕົນໃນການຮັບປະກັນໃຫ້ເດັກນ້ອຍທີ່ມາຈາກຊຸມຊົນທີ່ດ້ອຍໂອກາດຢູ່ແລ້ວນັ້ນ ບໍ່ໃຫ້ຖືກປະຖິ້ມໄວ້ເບື້ອງຫຼັງ. ກະຊວງບອກວ່າ ມີໂຮງຮຽນສະເພາະ 23 ແຫ່ງ ທີ່ສອນເດັກຈາກກຸ່ມຊົນເຜົ່າສ່ວນໜ້ອຍ ໃຫ້ກາຍເປັນຄູ, ແຕ່ເຂົາເຈົ້າຈະສອນແຕ່ເປັນພາສາລາວເທົ່ານັ້ນ.[64]

ການສໍ້ລາດບັງຫຼວງ ແລະ ການແຈກຢາຍທີ່ດິນ ກໍ່ສົ່ງຜົນກະທົບທີ່ບໍ່ສົມສ່ວນຕໍ່ຊົນເຜົ່າສ່ວນໜ້ອຍ ແລະ ການໃຫ້ສຳປະທານ ທີ່ດິນແກ່ນັກລົງທຶນຕ່າງປະເທດ ໃນອຸດສາຫະກຳໄຟຟ້າພະລັງນໍ້າ, ການຂຸດຄົ້ນແຮ່ທາດ ແລະ ອຸດສາຫະກຳຂຸດຄົ້ນໄມ້ ສົ່ງຜົນກະທົບທີ່ສຳຄັນຕໍ່ກຸ່ມຊົນເຜົ່າສ່ວນໜ້ອຍ ເຊິ່ງເປັນການສົ່ງຜົນກະທົບຜ່ານການຍົກຍ້າຍຈັດສັນ ໂດຍປາສະຈາກ ການປຶກສາຫາລື ຫຼື ການຊົດເຊີຍຢ່າງພຽງພໍ.[65]ຍ້ອນຄວາມແຕກຕ່າງດ້ານພາສາ ແລະ ອັດຕາສ່ວນການມີການສຶກສາ ທີ່ຕໍ່າກວ່າ, ກຸ່ມຊົນເຜົ່າສ່ວນໜ້ອຍ ອາດບໍ່ເຂົ້າໃຈເຕັມສ່ວນເຖິງສິດທິຕໍ່ທີ່ດິນຂອງເຂົາເຈົ້າ ແລະ ເງື່ອນໄຂຂອງສັນຍາທີ່ໄດ້ເຊັນ.[66]

ກຸ່ມຊົນເຜົ່າບາງກຸ່ມ ກໍ່ຮຽກຮ້ອງສະຖານະພາບທີ່ເປັນຊົນເຜົ່າພື້ນເມືອງ. ໃນຂະນະທີ່ບົດລາຍງານນີ້ ບໍ່ແມ່ນສະພາບການທີ່ ເໝາະສົມ ສຳລັບການແກ້ໄຂຂໍ້ຮຽກຮ້ອງນີ້, ສະຖານະພາບແບບນີ້ ຈະປຶກສາຫາລືກ່ຽວກັບສິດທິເພີ່ມເຕີມພາຍໃຕ້ກົດໝາຍ ສາກົນ, ລວມທັງວ່າບໍ່ຈຳເປັນຕ້ອງມີການຍິນຍອມກ່ອນ ແລະ ການຍິນຍອມໂດຍມີຂໍ້ມູນແລ້ວ ສຳລັບນຳໃຊ້ທີ່ດິນ ແລະ ຊັບພະຍາກອນ. ແນວໃດກໍ່ຕາມ, ລັດຖະບານກໍ່ປິດການສົນທະນາດັ່ງກ່າວ, ເຊິ່ງຢືນຢັນວ່າ ບໍ່ມີກຸ່ມຊົນເຜົ່າພື້ນເມືອງ ຫຼື ກຸ່ມ ສ່ວນໜ້ອຍ ໃນ ສປປ ລາວ ແລະ ທຸກກຸ່ມຊົນເຜົ່າແມ່ນເທົ່າທຽມກັນ. ວິທີການຄືດັ່ງກ່າວ ລົ້ມເຫຼວທີ່ຈະຮັບຮູ້ເຖິງຄວາມ ແຕກຕ່າງທີ່ແທ້ຈິງ ລະຫວ່າງບັນດາກຸ່ມຊົນເຜົ່າ ຫຼື ທີ່ຈະແກ້ໄຂບັນຫາທີ່ວ່າ ການປົກປ້ອງທີ່ມີ ພາຍໃຕ້ກົດໝາຍສາກົນ ສຳລັບ ປະຊາຊົນເຜົ່າພື້ນເມືອງ ໃນຕົວຈິງແລ້ວຄວນໄດ້ຮັບການພິຈາລະນານຳໃຊ້.

---

[61]World Bank “Lao Poverty Policy Brief: Why Are Ethnic Minorities Poor?,” 2017, http://documents.worldbank.org/curated/en/501721505813643980/pdf/119793-WP-PovertyReport-PUBLIC-ENGLISH-and-LAO-ENGLAOFinal.pdf p. 10.

[62]ບົດລາຍງານຂອງທະນາຄານໂລກ “Lao Poverty Policy Brief: Why Are Ethnic Minorities Poor?,” 2017, http://documents.worldbank.org/curated/en/501721505813643980/pdf/119793-WP-PovertyReport-PUBLIC-ENGLISH-and-LAO-ENGLAOFinal.pdf p. 9.

[63]Understanding Children's Work, “Understanding Children's Work and Youth Employment Outcomes in Laos,” 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf p. 7.

[64]ການປະຊຸມກັບກະຊວງສຶກສາທິການແລະກິລາ, ເດືອນມີນາ25, 2019.

[65]ການເຄື່ອນໄຫວເພື່ອສິດທິມະນຸດຂອງລາວແລະອົງການສາກົນເພື່ອສິດທິມະນຸດ (Lao Movement for Human Rights and International Federation for Human Rights), “Shadow report to United Nations Human Rights Committee 123rd session,” https://www.fidh.org/IMG/pdf/fidh-lmhr_joint_shadow_report_ccpr_123__lao_pdr_june_2018.pdf p. 16; Christophe Golay, “Identifying and Monitoring Human Rights Violations Associated with Large-Scale Land Acquisitions,” 2015, https://journals.openedition.org/poldev/2050.

[66]ການພັດທະນາແບບເປີດກວ້າງ, “Laos: Ethnic Minorities and Indigenous People,” October 5, 2018, https://laos.opendevelopmentmekong.net/topics/ethnic-minorities-and-indigenous-people/.

ລັດຖະບານໄດ້ຍົກຍ້າຍຖິ່ນຖານປະຊາຊົນ, ລວມທັງຊົນເຜົ່າສ່ວນໜ້ອຍ ເພື່ອເຕົ້າໂຮມບ້ານນ້ອຍເປັນບ້ານໃຫຍ່ ໃນເຂດຫ່າງໄກສອກຫຼີກ. ແຕ່ຍັງມີຫຼັກຖານຢັ້ງຢືນວ່າ ບາດກ້າວເຫຼົ່ານີ້ ເຮັດໃຫ້ສະຫວັດດີການຂອງຄົວເຮືອນທີ່ຖືກຍົກຍ້າຍນັ້ນ ຂີ້ຮ້າຍລົງ ຍ້ອນວ່າດິນໃນເຂດຍົກຍ້າຍໄປນັ້ນບໍ່ເໝາະສົມ ແລະ ຂາດການສະໜັບສະໜູນໃນການດັດປັບໃຫ້ເຂົ້າກັບສະພາບແວດລ້ອມໃໝ່. ບາງຄົນກໍ່ຖືກຖຽງວ່າ ໂຄງການເຫຼົ່ານີ້ ໃນຕົວຈິງແລ້ວກໍ່ເລັ່ງໄປໃສ່ເຮັດໃຫ້ຊົນເຜົ່າສ່ວນໜ້ອຍຄຸ້ນເຄີຍກັບວັດທະນາທຳລາວ-ໄຕ, ຫຼາຍກວ່າທີ່ຈະປັບປຸງເງື່ອນໄຂການດຳລົງຊີວິດ.[67]

### ເດັກນ້ອຍ

ສປປ ລາວ ບໍ່ໄດ້ພະຍາຍາມຢ່າງພຽງພໍເທື່ອ ທີ່ຈະເຮັດໃຫ້ເດັກນ້ອຍສາມາດອອກຈາກວົງຈອນຄວາມທຸກຍາກໄດ້. ເມື່ອປາສະຈາກການເຂົ້າເຖິງການສຶກສາ ແລະ ການສະໜັບສະໜູນທາງສັງຄົມຢ່າງພຽງພໍ, ເດັກນ້ອຍຈຳນວນຫຼວງຫຼາຍ ອອກຈາກໂຮງຮຽນ, ແຕ່ງງານແຕ່ອາຍຸຍັງນ້ອຍ ຫຼື ເຮັດວຽກເພື່ອຊ່ວຍຄອບຄົວຂອງເຂົາເຈົ້າ. ອີງຕາມອົງການ UNICEF ເຊິ່ງເປັນຕົວເລກທີ່ໜ້າຕົກໃຈ ຄື 88 ເປີເຊັນຂອງເດັກນ້ອຍ ໃນ ສປປ ລາວ ເຄີຍປະເຊີນການຂາດແຄນຮູບແບບໃດໜຶ່ງ ເຊິ່ງມີຜົນຕາມມາທີ່ຮ້າຍແຮງ ຕໍ່ຜະລິດຕະພາບ ແລະ ການເຂົ້າຮ່ວມໃນສັງຄົມໃນໄລຍະຍາມຕະຫຼອດຊີວິດ.[68]ລະດັບຂອງຄວາມທຸກຍາກໃນການເຮັດວຽກ ແມ່ນສູງຫຼາຍ ໃນກຸ່ມຊາວໜຸ່ມ ອາຍຸ 15-24 ໂດຍມີ 75 ເປີເຊັນຂອງຊາວໜຸ່ມທີ່ມີວຽກເຮັດງານທຳ ທີ່ຢູ່ໃນຄວາມທຸກຍາກ.[69]

ການແຕ່ງງານແຕ່ອາຍຸຍັງນ້ອຍ ແມ່ນປະກົດມີຫຼາຍ ໃນ ສປປ ລາວ: ໃນກຸ່ມອາຍຸ 20-24 ປີ, ມີ 32.7 ເປີເຊັນຂອງແມ່ຍິງ ແລະ 10.8 ເປີເຊັນ ຂອງ ຜູ້ຊາຍ ແຕ່ງງານຕອນອາຍຸບໍ່ທັນຮອດ 18 ປີ ແລະ 7.1 ເປີເຊັນຂອງແມ່ຍິງ ແລະ 1.8 ເປີເຊັນ ຂອງ ຜູ້ຊາຍ ທີ່ແຕ່ງງານກ່ອນອາຍຸ 15 ປີ.[70]ໃນກຸ່ມທີ່ທຸກຍາກທີ່ສຸດ, 47 ເປີເຊັນຂອງແມ່ຍິງ ອາຍຸ 20-49 ປີ ແຕ່ງງານອາຍຸບໍ່ທັນຮອດ 18 ປີ, ທຽບກັບ 16 ເປີເຊັນໃນກຸ່ມທີ່ຮັ່ງມີທີ່ສຸດ.[71]ການຖືພາແຕ່ອາຍຸຍັງນ້ອຍ ກໍ່ສູງເຊັ່ນກັນ, ເຊິ່ງມີ 18 ເປີເຊັນຂອງແມ່ຍິງ ອາຍຸ 20-24 ປີ ເກີດລູກກ່ອນອາຍຸ 18 ປີ. ການຖືພາແຕ່ອາຍຸຍັງນ້ອຍ ແມ່ນເກີດຂຶ້ນໃນກຸ່ມຜູ້ທຸກຍາກທີ່ສຸດຫຼາຍກວ່າ ຢ່າງນ້ອຍ 9 ເທົ່າ.[72]ຜົນທີ່ຕາມມາຂອງການແຕ່ງງານແຕ່ອາຍຸຍັງນ້ອຍ ອາດຮ້າຍແຮງໄດ້ ແລະ ເປັນຜົນໄລຍະຍາວຕະຫຼອດຊີວິດ: ເດັກຍິງ 3 ຄົນໃນຈຳນວນ 4 ຄົນ ທີ່ແຕ່ງງານແຕ່ອາຍຸຍັງນ້ອຍ ອອກຈາກໂຮງຮຽນ, ບໍ່ຈົບ ຫຼື ຕົກໄປນຳຫຼັງຄົນອື່ນ.[73]

ສປປ ລາວ ຫ້າມໃຊ້ແຮງງານເດັກ ຕໍ່າກວ່າອາຍຸ 14 ປີ ແຕ່ອີງຕາມການສຳຫຼວດແຮງງານເດັກ ແລະ ກຳລັງແຮງງານ ມີເດັກນ້ອຍ 71,000 ຄົນທີ່ອາຍຸ 6-13 ປີ (6.5 ເປີເຊັນ ກຸ່ມອາຍຸນີ້) ເຮັດວຽກ ແລະ ມີເດັກນ້ອຍອີກຈຳນວນ 190,000 ຄົນ ທີ່ອາຍຸ 14-17 ປີ

---

[67]Elizabeth King and Dominique van de Walle, "Indigenous Peoples, Poverty and Development, Chapter 7: Laos," March 2010, http://siteresources.worldbank.org/EXTINDPEOPLE/Resources/407801-1271860301656/Chapter_7_Laos.pdf p. 3.

[68]ບົດລາຍງານຂອງອົງການUNICEF ແລະ ກະຊວງແຜນການ ແລະ ການລົງທຶນ, "SDGs and Children: Measuring Progress on Child Wellbeing in Lao PDR," preliminary report 2018, p. 12.

[69]Understanding Children's Work, "Understanding Children's Work and Youth Employment Outcomes in Laos," 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf p. 9.

[70]ສູນສະຖິຕິແຫ່ງຊາດລາວ, ການສຳຫຼວດດັດຊະນີໝາຍສັງຄົມລາວII: ບົດລາຍງານສິ່ງທີ່ຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 20.

[71]ການສຳຫຼວດດັດຊະນີດ້ານສັງຄົມຂອງລາວຄັ້ງທີII: ບົດລາຍງານສິ່ງທີ່ຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 57.

[72]ສູນສະຖິຕິແຫ່ງຊາດລາວ, ການສຳຫຼວດດັດຊະນີໝາຍສັງຄົມລາວII: ບົດລາຍງານສິ່ງທີ່ຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 24.

[73]ບົດລາຍງານຂອງອົງການUNICEF ແລະ ກະຊວງແຜນການ ແລະ ການລົງທຶນຂອງລາວ, "SDGs and Children: Measuring Progress on Child Wellbeing in Lao PDR," preliminary report 2018, p. 70.

(ປະມານ 35 ເປີເຊັນ ຂອງກຸ່ມອາຍຸນີ້) ເຮັດວຽກ.[74]ອົງການ UNICEF ຄົ້ນພົບໃນປີ 2018 ວ່າ ປະມານ 25 ເປີເຊັນ ຂອງ ເດັກອາຍຸ 5-17 ປີ ຕົກຢູ່ໃນສະພາບການເຮັດວຽກທີ່ອັນຕະລາຍ.[75]ການຂາດການປົກປ້ອງທາງດ້ານສັງຄົມ ແມ່ນປັດໄຈທີ່ສໍາຄັນ ທີ່ພາໃຫ້ມີປະກົດການໃຊ້ແຮງງານເດັກ, ຍ້ອນວ່າ ມັນໝາຍເຖິງວ່າ ບັນດາຄອບຄົວຕ້ອງຫັນໜ້າໄປຫາລູກຂອງເຂົາເຈົ້າ ໃນເວລາທີ່ ມີຄວາມຈໍາເປັນທາງດ້ານການເງິນ ແລະ ໃນກໍລະນີທີ່ມີການຕົກຕໍ່າທາງດ້ານເສດຖະກິດ.

ຜົນກະທົບຂອງແຮງງານເດັກ ແມ່ນມີການບັນທຶກໄວ້ເປັນຢ່າງດີ — ມັນສາມາດນໍາໄປສູ່ຄວາມອ່ອນໄຫວ ແລະ ຄວາມດ້ອຍໂອກາດທາງສັງຄົມ, ຫຼຸດທ່າແຮງຂອງເດັກນ້ອຍລົງ ແລະ ສິ່ງຜົນສະທ້ອນຕໍ່ການຈ້າງງານຂອງເດັກນ້ອຍ ແລະ ຮູບແບບການ ເຮັດວຽກຫາລາຍໄດ້ໄປຕະຫຼອດຊີວິດ. ເດັກນ້ອຍ ຜູ້ທີ່ເຮັດວຽກ ສະແດງໃຫ້ເຫັນວ່າມີອັດຕາການຂາດແຄນ ໃນທຸກຂົງເຂດ ສູງກວ່າ, ລວມທັງໃນຂົງເຂດດ້ານການສຶກສາ. ເດັກນ້ອຍ ທີ່ໃຊ້ແຮງງານເດັກ ມີແນວໂນ້ມທີ່ບໍ່ເຂົ້າຮຽນ, ບໍ່ຮຽນຈົບ ຫຼື ບໍ່ບັນລຸຜົນໃນໂຮງຮຽນ ຫຼາຍກວ່າເຖິງສອງທົບ.[76]
ແຮງງານເດັກ ໃນ ສປປ ລາວ ໂດຍພື້ນຖານແລ້ວແມ່ນຢູ່ເຂດຊົນນະບົດ ແລະ ໃນຂົງເຂດກະສິກໍາ ໂດຍມີການຈ່າຍຄ່າຈ້າງຕໍ່າ ແລະເຮັດວຽກຫຼາຍຊົ່ວໂມງ. ໃນກຸ່ມເດັກອາຍຸ 6-13 ປີ, ມີ 97 ເປີເຊັນ ເຮັດວຽກໃນຂະແໜງກະສິກໍາ ແລະ 88 ເປີເຊັນ ເປັນແຮງງານຂອງຄອບຄົວທີ່ບໍ່ໄດ້ຄ່າຈ້າງ. ເດັກນ້ອຍທີ່ເຮັດວຽກ ທີ່ມີອາຍຸ 6-13 ເປີ ບັນທຶກວ່າເຮັດວຽກຫຼາຍກວ່າ 40 ຊົ່ວໂມງ ຕໍ່ອາທິດ.[77]

### ຄວາມທຸກຍາກໃນຊົນນະບົດ

ປະຊາຊົນຢູ່ເຂດຊົນນະບົດ ມີແນວໂນ້ມທີ່ຈະພົບກັບຜົນກະທົບຈາກຄວາມທຸກຍາກ ຫຼາຍກວ່າ. ໃນຂະນະທີ່ ລັກສະນະຕົວຈິງຂອງປະຊາກອນຊາວຊົນນະບົດ ທີ່ຢູ່ຫ່າງໄກສອກຫຼີກ ແລະ ກະແຈກກະຈາຍ ເປັນສິ່ງທ້າທາຍຕົວຈິງ, ລັດຖະບານບໍ່ສາມາດ ທີ່ຈະຍອມແພ້ ທີ່ຈະຊອກຫາວິທີພະຍາຍາມສະໜອງໃຫ້ຊຸມຊົນຊົນນະບົດ ມີການເຂົ້າເຖິງການບໍລິການ ແລະ ໂຄງລ່າງພື້ນຖານ ທີ່ສະເໝີພາບກັນ ໂດຍການປ່ອຍໃຫ້ເຂົາເຈົ້າມີສະຖານະພາບເປັນຊົນຊັ້ນລະດັບສອງ ຫຼື ຜັກດັນໃຫ້ມີການເຕົ້າໂຮມທີ່ມີບັນຫາ ຫຼື ໃຫ້ມີໂຄງການຍົກຍ້າຍຖິ່ນຖານ. ໃນປີ 2012/2013 ເຂດຊົນນະບົດກວມເອົາ 71 ເປີເຊັນຂອງພົນລະເມືອງ ແລະ ອັດຕາຄວາມທຸກຍາກຂອງຊົນນະບົດ ແມ່ນ 4 ທົບຂອງເຂດຕົວເມືອງ.[78]ຄວາມທຸກຍາກຂອງຊົນນະບົດ ຍັງຫຼຸດລົງຊ້າກວ່າ ໃນເຂດຕົວເມືອງ ໃນຊຸມປີມໍ່ໆມານີ້, ເຊິ່ງຄວາມທຸກຍາກແມ່ນລວມສູນຢູ່ເຂດຊົນນະບົດ. ຜູ້ທຸກຍາກຈໍານວນຫຼວງຫຼາຍ ຄື 88 ເປີເຊັນ ແມ່ນຜູ້ທີ່ຢູ່ເຂດຊົນນະບົດ ໃນປີ 2012/2013, 6 ສູງກວ່າໃນປີ 2007/2008.[79]

ຊັບພະຍາກອນຈາກຊັບສິນຂອງສ່ວນລວມ ກວມເອົາອັດຕາສ່ວນທີ່ສໍາຄັນຂອງການຄໍ້າປະກັນທາງດ້ານສະບຽງອາຫານ ໃນເຂດຊົນນະບົດ, ໂດຍສະເພາະຜູ້ທີ່ໃນຄວາມທຸກຍາກ. ການສໍາປະທານທີ່ດິນສໍາລັບການເຮັດກະສິກໍາ ແລະ ການປູກໄມ້, ການຂຸດຄົ້ນແຮ່ທາດ, ການຜະລິດໄຟຟ້າພະລັງນໍ້າ ແລະ ໂຄງການສ້າງໂຄງລ່າງພື້ນຖານ ໄດ້ເຮັດໃຫ້ສະພາບການຄໍ້າປະກັນສະບຽງອາຫານ ຮ້າຍ

---

[74]Understanding Children's Work, "Understanding Children's Work and Youth Employment Outcomes in Laos," 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf p. 2.

[75]ບົດລາຍງານຂອງອົງການUNICEF ແລະ ກະຊວງແຜນການ ແລະ ການລົງທຶນ, "SDGs and Children: Measuring Progress on Child Wellbeing in Lao PDR," preliminary report 2018, p. 70.

[76]ບົດລາຍງານຂອງອົງການUNICEF ແລະ ກະຊວງແຜນການ ແລະ ການລົງທຶນ, "SDGs and Children: Measuring Progress on Child Wellbeing in Lao PDR," preliminary report 2018, p. 70.

[77]Understanding Children's Work, "Understanding Children's Work and Youth Employment Outcomes in Laos," 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf pp. 3-4.

[78]ບົດລາຍງານຂອງທະນາຄານໂລກ, "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 33.

[79]ບົດລາຍງານຂອງທະນາຄານໂລກ, "Poverty Profile in Lao PDR," 2014, http://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf p. 9.

ແຮງລົງ ໂດຍການຍຶດເອົາທີ່ດິນລວມ ແລະ ທີ່ດິນເອກະຊົນ ເຊິ່ງສ່ວນຫຼາຍບໍ່ມີໃບຕາດິນ ແລະ ຫຼຸດການເຂົ້າເຖິງຊັບສິນ ເຫຼົ່ານັ້ນ. ໃນຂະນະທີ່ໂຄງການເຫຼົ່ານີ້ ສາມາດສ້າງວຽກເຮັດງານທຳ, ແຕ່ສ່ວນຫຼາຍໂຄງການເຫຼົ່ານີ້ກໍ່ສ້າງການຈ້າງງານໄດ້ໜ້ອຍ ໃນດ້ານຈຳນວນ ແລະ ຄ່າແຮງງານ ກໍ່ບໍ່ສູງພໍທີ່ຈະ ທົດແທນຜົນກະທົບຂອງການສູນເສຍທີ່ດິນ. ນະໂຍບາຍການຈັດສັນທີ່ດິນ, ການຍ້າຍບ້ານ ແລະ ການເຕົ້າໂຮມບ້ານ ແລະ ການສຳປະທານທີ່ດິນເພື່ອດ້ານເສດຖະກິດ ໄດ້ພາໃຫ້ມີຄວາມກົດດັນຕໍ່ປ່າຊາຊົນ ແລະ ຄວາມຂາດແຄນຊັບພະຍາກອນທຳມະຊາດ ແລະ ປະກອບສ່ວນໃຫ້ມີຄວາມທຸກຍາກ ແລະ ການຂາດເຂີນອາຫານ ໃນເຂດ ຊົນນະບົດ. ໃນບາງກໍລະນີ, ຊາວກະສິກອນສູນເສຍການເຂົ້າເຖິງທີ່ດິນ ເມື່ອເຂົາເຈົ້ານຳເອົາດິນໄປຂາຍ ຫຼັງຈາກທີ່ຕົກເປັນ ໜີ້ເປັນສິນ.[80]

## ພື້ນຖານໂຄງລ່າງ

ຍັງມີຫຼາຍຊ່ອງຫວ່າງທີ່ຍັງມີຄວາມບົກຜ່ອງໃນການບໍລິການນ້ຳສະອາດແລະສຸຂະອານາໄມໃນສປປລາວແລະຄວາມຄືບໜ້າທາງດ້ານນີ້ແມ່ນຍັງບໍ່ທັນເຂົ້າໄປເຖິງຈຳນວນປະຊາກອນທີ່ທຸກຍາກທີ່ສຸດ. ໂດຍອີງຕາມສະຖິຕິຂອງລັດຖະບານ, ໃນຈຳນວນປະຊາກອນຜູ້ທີ່ທຸກຍາກທີ່ສຸດມີພຽງ 56 ເປີເຊັນທີ່ເຂົ້າເຖິງແຫລ່ງນ້ຳດື່ມທີ່ຜ່ານການປັບປຸງແລ້ວ, ມີພຽງແຕ່ 23 ເປີເຊັນທີ່ເຂົ້າເຖິງສິ່ງອຳນວຍຄວາມສະດວກດ້ານສຸຂາພິບານຂັ້ນພື້ນຖານ, ມີພຽງ 21 ເປີເຊັນທີ່ເຂົ້າເຖິງສິ່ງອຳນວຍຄວາມສະດວກສຳລັບການລ້າງມືຂັ້ນພື້ນຖານແລະ 72 ເປີເຊັນທີ່ຍັງໄປຖ່າຍໜັກແບບບໍ່ມີວິດຖ່າຍ. ໃນທົ່ວປະເທດປະມານ 20 ເປີເຊັນຂອງຄົວເຮືອນຍັງໃຊ້ເວລາເກີນກວ່າ 30 ນາທີໃນແຕ່ລະມື້ໃນການໄປຕັກນ້ຳແລະ 86 ເປີເຊັນຂອງຄົວເຮືອນໃນເວລາກວດຕົວຢ່າງນ້ຳດື່ມນ້ຳໃຊ້ຂອງພວກເຂົາໄດ້ພົບເຫັນເຊື້ອອີໂກລາຍ.[81]

ສິບສີ່ເປີເຊັນຂອງບັນດາບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແລະເຖິງແມ່ນວ່າບັນດາບ້ານທີ່ມີເສັ້ນທາງເຂົ້າເຖິງແລ້ວກໍ່ຕາມແຕ່ອາດບໍ່ສາມາດເດີນທາງເຂົ້າໄປເຖິງໄດ້ໃນໄລຍະລະດູຝົນເຊິ່ງພາໃຫ້ມີຄວາມຈຳກັດຢ່າງຮ້າຍແຮງໃນການເຂົ້າເຖິງການບໍລິການຕ່າງໆຂັ້ນພື້ນຖານແລະການເຂົ້າເຖິງຕະຫຼາດ.[82]ໂດຍອີງຕາມຂໍ້ມູນຈາກອົງການຢູນິເຊັຟມີ 97.5 ເປີເຊັນຂອງເດັກນ້ອຍຢູ່ໃນບັນດາເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງເປັນຜູ້ດ້ອຍໂອກາດໃນບາງດ້ານ[83]ແລະທະນາຄານໂລກໄດ້ພົບເຫັນວ່າມີ 10 ເປີເຊັນຂອງບັນດາບ້ານທີ່ມີເສັ້ນທາງເຂົ້າເຖິງແລ້ວທີ່ມີຄວາມເປັນໄປໄດ້ຫຼາຍທີ່ຈະຫລຸດພົ້ນອອກຈາກຄວາມທຸກຍາກ.[84]ໃນເມືອງທີ່ຂ້າພະເຈົ້າໄດ້ໄປເຮັດວຽກ , ເຈົ້າໜ້າທີ່ໄດ້ກ່າວວ່າ39 ບ້ານຢູ່ເມືອງດັ່ງກ່າວບໍ່ສາມາດເດີນທາງດ້ວຍທາງລົດເຂົ້າໄປເຖິງໄດ້ໃນລະດູຝົນແລະ 22 ບ້ານໃນຈຳນວນບ້ານດັ່ງກ່າວບໍ່ສາມາດເດີນທາງໄປສະຖານທີ່ບໍລິການສາທາລະນະສຸກໃນລະດູຝົນ.

## ລະເບີດບໍ່ທັນແຕກທີ່ຕົກຄ້າງ

ໂດຍອີງຕາມຂໍ້ມູນປະຫວັດສາດຂອງສົງຄາມ, ໄລຍະປີ 1964 ເຖິງປີ 1973, ສະຫະລັດອາເມລິກາໄດ້ຖິ້ມລະເບີດທາງອາກາດໃສ່ສປປລາວຫຼາຍກວ່າ 2 ລ້ານໂຕນໃນຈຳນວນ 580,000 ຄັ້ງຂອງການຖິ້ມລະເບີດ. ຢ່າງໜ້ອຍມີ 270 ລ້ານລະເບີດບອມບີ້ໄດ້ຖືກຖິ້ມລົງ, ເຊິ່ງໃນນັ້ນໃນມີປະມານ 80 ລ້ານໜ່ວຍທີ່ມີຄວາມຜິດພາດບໍ່ທັນແຕກແລະຕົກຄ້າງຢູ່. ມີເຫດຮ້າຍໄດ້ເກີດຂຶ້ນ, ການ

---

[80]Miles Kenney-Lazar, "Linking food and land tenure security in Lao PDR," 2016, https://data.opendevelopmentmekong.net/dataset/2016-6/resource/fbacdd35-9ca3-45de-b4bb-fa47d53852cd?type=library_record p. vii-viii.

[81]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານຂໍ້ມູນທີ່ເກັບກຳໄດ້," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 21.

[82]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານຂໍ້ມູນທີ່ເກັບກຳໄດ້," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 3.

[83]UNICEF and Lao Ministry of Planning and Investment, "SDGs and Children: Measuring Progress on Child Wellbeing in Lao PDR," preliminary report 2018, p. 27.

[84]ບົດລາຍງານຂອງທະນາຄານໂລກ, "Lao PDR Poverty Policy Notes: Drivers of Poverty Reduction in Lao PDR," October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 27.

ສໍາຫຼວດຂໍ້ມູນໃນປີ 2009 ໄດ້ພົບເຫັນວ່າລະເບີດບໍ່ທັນແຕກດັ່ງກ່າວໄດ້ທໍາລາຍຊີວິດຫລືເຮັດໃຫ້ຄົນມີຄວາມພິການແຂນຫລືຂາທີ່ມີຈໍານວນຫຼາຍເຖິງ 50,000 ຄົນໃນສປປລາວນັບແຕ່ປີ 1964 ເປັນຕົ້ນມາ. ຂໍ້ມູນຈາກການສໍາຫຼວດແລະຂໍ້ມູນຈາກການຖິ້ມລະເບີດທາງອາກາດໄດ້ຊີ້ໃຫ້ເຫັນວ່າມີປະມານໜຶ່ງສ່ວນສາມຂອງປະເທດແມ່ນມີລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່.[85]ລະເບີດທີ່ບໍ່ທັນແຕກເປັນສາເຫດທີ່ເຮັດໃຫ້ຊາວກະສິກອນບໍ່ສາມາດນໍາໃຊ້ດິນກະສິກໍາເພື່ອຜະລິດອາຫານມາລ້ຽງຄອບຄົວໄດ້ຫລືຕ້ອງໄດ້ສ່ຽງຊີວິດຕໍ່ຄວາມຕາຍຫລືສ່ຽງຕໍ່ການໄດ້ຮັບບາດເຈັບ. ລະເບີດບໍ່ທັນແຕກສາມາດເປັນສາເຫດພາໃຫ້ພິການເຊິ່ງເຮັດໃຫ້ປະຊາຊົນບໍ່ສາມາດໄປເຮັດວຽກໄດ້ແລະເນື່ອງຈາກວ່າມີຄວາມຈໍາກັດທາງດ້ານການສະໜັບສະໜູນທາງສັງຄົມ - ໃນກໍລະນີມີຜູ້ທີ່ພິການໃນຄອບຄົວກໍ່ອາດຮຽກຮ້ອງໃຫ້ຄອບຄົວຕ້ອງໄດ້ຊ່ວຍເຫລືອເບິ່ງແຍງຢ່າງຫຼວງຫຼາຍທີ່ສຸດເຊິ່ງເຮັດໃຫ້ສະມາຊິກຂອງຄອບຄົວຈໍານວນໜຶ່ງບໍ່ສາມາດໄປເຮັດວຽກໄດ້. ໃນແຂວງຫົວພັນຂ້າພະເຈົ້າໄດ້ພົບກັບແມ່ຍິງຜູ້ໜຶ່ງອາຍຸ 18 ປີເຊິ່ງຜົວຂອງລາວຫາກໍເສຍຊີວິດຍ້ອນອຸບັດເຫດຈາກລະເບີດບໍ່ທັນແຕກແລະປັດຈຸບັນຜູ້ກ່ຽວກໍ່ບໍ່ມີວິທີທາງໃດທີ່ຈະຊ່ວຍເຫລືອລາວເອງແລະລູກຂອງລາວ.

## 6. ແຜນງານປົກປ້ອງທາງສັງຄົມທີ່ສໍາຄັນຕ່າງໆ

ສປປລາວຍັງບໍ່ທັນມີລະບົບປະກັນສັງຄົມຢ່າງຄົບຖ້ວນເທື່ອຫລືຍັງບໍ່ທັນມີເຄືອຄ່າຍປົກປ້ອງທາງສັງຄົມເພື່ອລຶບລ້າງຄວາມທຸກຍາກແລະປະຊາຊົນຍັງອາໄສການຊ່ວຍເຫລືອສ່ວນໜຶ່ງຈາກຄອບຄົວແລະຍາດຕິພີ່ນ້ອງ, ຈາກຊາວບ້ານ, ຈາກຊົນເຜົ່າດຽວກັນແລະຈາກການອຸປະຖໍາຄໍ້າຊູຕ່າງໆ.[86]ສິ່ງທີ່ຊີ້ໃຫ້ເຫັນວິທີການທີ່ເຂັ້ມງວດອັນໜຶ່ງກໍ່ຄືເຈົ້າໜ້າທີ່ຂັ້ນເມືອງທ່ານໜຶ່ງໄດ້ບອກຂ້າພະເຈົ້າວ່າ "ຖ້າຫາກຄອບຄົວໃດທຸກຍາກເຊິ່ງເປັນຍ້ອນພວກເຂົາຂີ້ຄ້ານເອງ, ພວກເຮົາກໍຈະບໍ່ຊ່ວຍເຫລືອພວກເຂົາ."

ໂດຍອີງຕາມກະຊວງແຮງງານແລະສະຫວັດດີການສັງຄົມກອງທຶນປະກັນສັງຄົມແຫ່ງຊາດໄດ້ຈ່າຍເງິນໃຫ້ຜູ້ທີ່ໄດ້ຮັບການປະກັນໃນຈໍານວນ1,217,436,876,505ກີບໃນປີ 2018 (ປະມານ 143 ລ້ານໂດລາສະຫະລັດ(US$))ເຊິ່ງມີ 529,365 ຄົນໄດ້ຮັບເງິນອຸດໜູນຈາກກອງທຶນດັ່ງກ່າວໂດຍສະເລັ່ຍແມ່ນປະມານ 270ໂດລາສະຫະລັດຕໍ່ຄົນ.[87]ກະຊວງດັ່ງກ່າວບໍ່ໄດ້ໃຫ້ຂໍ້ມູນກ່ຽວກັບວ່າຈໍານວນເງິນດັ່ງກ່າວນີ້ວ່າເທົ່າກັບຈັກເປີເຊັນຂອງGDP ຫລືຂອງລາຍຈ່າຍແຫ່ງຊາດ.

ລະບົບການອຸດໜູນທີ່ມີຢູ່ແລ້ວນັ້ນບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນສະເໝີໄປ. ຢູ່ສຸກສາລາແຫ່ງໜຶ່ງທີ່ຂ້າພະເຈົ້າໄດ້ໄປຢ້ຽມຢາມພະນັກງານແພດຜູ້ໜຶ່ງໄດ້ເວົ້າກັບຂ້າພະເຈົ້າວ່າການຊ່ວຍເຫລືອປິ່ນປົວຜູ້ທຸກຍາກໂດຍບໍ່ເສຍຄ່ານັ້ນແມ່ນຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດເທື່ອເພາະວ່າພວກເຂົາຍັງບໍ່ທັນມີບັນຊີລາຍຊື່ຢ່າງຊັດເຈນວ່າແມ່ນໃຜແດ່ຄວນໄດ້ຮັບການອຸດໜູນດັ່ງກ່າວ.

ກ່ຽວກັບປະເດັນນີ້ຂ້າພະເຈົ້າກໍ່ໄດ້ຮັບບົດລາຍງານທີ່ຄ້າຍຄືກັນຈາກຫຼາຍແຫລ່ງທີ່ກ່ຽວຂ້ອງກັບຄ່າລົງທະບຽນສໍາລັບການເຂົ້າຮຽນແລະການເຂົ້າຮັກສາສຸຂະພາບເຊິ່ງຍັງມີຫຼາຍໂຮງຮຽນແລະຫຼາຍໂຮງໝໍທີ່ເກັບຄ່າລົງທະບຽນ. ລະບົບດັ່ງກ່າວອາດພາໃຫ້ປະຊາຊົນຜູ້ທຸກຍາກບໍ່ສາມາດເຂົ້າເຖິງການອຸດໜູນທີ່ສໍາຄັນທີ່ສຸດເພື່ອຫລຸດພົ້ນອອກຈາກຄວາມທຸກຍາກ. ລັດຖະບານຄວນຈັດຕັ້ງປະຕິບັດຢ່າງຮີບດ່ວນເພື່ອແກ້ໄຂບັນຫາການສໍ້ລາດບັງຫຼວງຢູ່ໃນລະບົບການອຸດໜູນທາງສັງຄົມທີ່ສໍາຄັນເຫລົ່ານີ້.

ເຈົ້າໜ້າທີ່ລັດບາງທ່ານໄດ້ເວົ້າວ່າພວກເຂົາໄດ້ຮັບເງິນເດືອນຊ້າເຊິ່ງພາໃຫ້ມີຄວາມຫຍຸ້ງຍາກທາງດ້ານການເງິນສໍາລັບຜູ້ທີ່ບໍ່ໄດ້ຮັບເງິນເດືອນທັນເວລາແລະສິ່ງຜົນກະທົບຕໍ່ການເຮັດວຽກ. ເນື່ອງຈາກວ່າພະນັກງານແລະຜູ້ອອກແຮງງານສ່ວນຫຼາຍແມ່ນຜູ້ທີ່ໄດ້ຮັບເງິນເດືອນຕໍ່າເຊິ່ງມີພຽງແຕ່ 100 ປາຍໂດລາສະຫະລັດ (US$$ຕໍ່ເດືອນເທົ່ານັ້ນຈຶ່ງເຮັດໃຫ້ຫຼາຍຄົນຕ້ອງໄດ້ພະຍາຍາມເຮັດທຸກ

[85]Legacies of War, “Cluster Bomb Fact Sheet,” http://legaciesofwar.org/resources/cluster-bomb-fact-sheet/.
[86]Bertelsmann Stiftung, “BTI 2018 | Laos Country Report,” bti-project.org/en/reports/country-reports/detail/itc/LAO/.
[87]ຂໍ້ມູນຕົວເລກສະໜອງໂດຍກະຊວງແຮງງານແລະສະຫວັດດີການສັງຄົມ, ເດືອນມີນາວັນທີ26, 2019.

ຢ່າງເພື່ອແກ້ໄຂສິ່ງທີ່ຈຳເປັນຂັ້ນພື້ນຖານຕ່າງໆໃນການດຳລົງຊີວິດແລະຕ້ອງໄດ້ຢືມເງິນເພື່ອແກ້ໄຂສະພາບຊີວິດການເປັນຢູ່. ເມື່ອເປັນແນວນັ້ນພະນັກງານລັດບາງຄົນຕ້ອງໄດ້ໃຊ້ເວລານອກໂມງການເພື່ອໄປເຮັດວຽກອື່ນເຊິ່ງພາໃຫ້ການບໍລິການທາງສັງຄົມທີ່ມີຈຳກັດຢູ່ແລ້ວນັ້ນຫລຸດໜ້ອຍລົງ.[88]ຜູ້ອອກແຮງງານບໍ່ສາມາດຈັດຕັ້ງສະຫະພັນໄດ້ນອກຈາກສະຫະພັນກຳມະບານລາວເຊິ່ງແມ່ນສະຫະພັນທີ່ຂຶ້ນກັບລັດຖະບານແລະການນຳພາຂອງພັກ.[89]

**ດ້ານສາທາລະນະສຸກ**

ຂ້າພະເຈົ້າໄດ້ຮັບຫຼາຍບົດລາຍງາຍທີ່ກົງກັນກ່ຽວກັບການເບິ່ງແຍງດູແລສຸຂະພາບທີ່ຍັງມີຄຸນນະພາບຕໍ່າຢູ່, ອັດຕາປົກຄຸມການຮັກສາສຸຂະພາບຍັງຈຳກັດຢູ່ໃນເຂດຊົນນະບົດແລະຄ່າໃຊ້ຈ່າຍໃນການຮັກສາສຸຂະພາບເປັນປັດໄຈໜຶ່ງທີ່ພາໃຫ້ປະຊາຊົນກາຍເປັນຜູ້ທຸກຍາກ. ເຖິງແມ່ນວ່າໄດ້ໃຫ້ຄວາມສຳຄັນກ່ຽວກັບການຮັກສາສຸຂະພາບທີ່ສາມາດເຂົ້າເຖິງໄດ້ເພື່ອແກ້ໄຂບັນຫາຄວາມທຸກຍາກແຕ່ກໍເປັນທີ່ຈະແຈ້ງແລ້ວວ່າລັດຖະບານຍັງບໍ່ທັນມີທຶນຢ່າງພຽງພໍສຳລັບການດູແລຮັກສາສຸຂະພາບຫລືເພື່ອຮັບປະກັນໃຫ້ປະຊາຊົນຜູ້ທີ່ທຸກຍາກສາມາດເຂົ້າເຖິງເພື່ອຮັບການປິ່ນປົວ. ມີປະຊາຊົນທ່ານໜຶ່ງໄດ້ເວົ້າກັບຂ້າພະເຈົ້າວ່າ "ຖ້າບໍ່ມີເງິນກໍຈະບໍ່ມີຊີວິດ."

ລາຍຈ່າຍເຂົ້າໃນວຽກງານສາທາລະນະສຸກ ເມື່ອສົມທຽບເປັນເປີເຊັນໃສ່ GDP ແມ່ນຢູ່ໃນລະດັບດຽວກັນກັບຫຼາຍປະເທດໃນພາກພື້ນທີ່ຢູ່ໃນລະດັບຕ່ຳທີ່ສຸດ, ໂດຍສະເພາະແມ່ນລາຍຈ່າຍທີ່ມາຈາກແຫລ່ງລາຍຮັບພາຍໃນປະເທດ.[90]ອີງຕາມຂໍ້ມູນທີ່ໄດ້ຈາກຜູ້ເຂົ້າຮ່ວມປະຊຸມເຊິ່ງແມ່ນຜູ້ທີ່ມີຄວາມຮູ້ດ້ານນີ້, ໃນປີ 2017 ລາຍຈ່າຍເຂົ້າໃນຂະແໜງສາທາລະນະສຸກ ແມ່ນ 1.7 ເປີເຊັນ ຂອງ GDP (ຄືກັນກັບປີ 2010-2011) ແລະ ເທົ່າກັບ 6.5 ເປີເຊັນຂອງງົບປະມານຂອງລັດຖະບານ (ທຽບໃສ່ 9 ເປີເຊັນທີ່ເປັນເປົ້າໝາຍ).[91]ຜູ້ທີ່ມີພາລະອັນໜັກໜ່ວງຂອງລາຍຈ່າຍໃນການຮັກສາສຸຂະພາບແມ່ນປະຊາກອນທີ່ມີລາຍຮັບຕ່ຳ ແລະ ບັນດາຄົວເຮືອນທີ່ມີເດັກນ້ອຍອາຍຸຕ່ຳກວ່າ 5 ປີ ແລະ ມີຜູ້ອາຍຸສູງຢູ່ໃນຄອບຄົວ.[92]

ການເຂົ້າເຖິງການຮັກສາສຸຂະພາບທີ່ສາມາດຈັບຈ່າຍໄດ້ ແລະ ການປະກັນໄພສຸຂະພາບແມ່ນສິ່ງທີ່ສຳຄັນໃນການຮັບປະກັນບໍ່ໃຫ້ຄ່າໃຊ້ຈ່າຍຮັກສາສຸຂະພາບເປັນປັດໄຈຜັກດັນປະຊາຊົນໃຫ້ກາຍເປັນຜູ້ທຸກຍາກ. ທະນາຄານໂລກ ໄດ້ພົບເຫັນວ່າ ໃນຈຳນວນປະຊາຊົນທີ່ທຸກຍາກ ຫລື ຜູ້ທີ່ເກືອບຈະທຸກຍາກ ມີ 13 ເປີເຊັນ ຂອງປະຊາຊົນເຫລົ່ານີ້ແມ່ນຜູ້ທີ່ຕົກຢູ່ໃນສະພາບດັ່ງກ່າວມາຂ້າງເທິງ ເນື່ອງຈາກການເຈັບປ່ວຍກະທັນຫັນ[93]ແລະ 17 ເປີເຊັນ ຂອງ ຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງຈາກການປະກັນໄພສຸຂະພາບ ຕ້ອງໄດ້ຢືມເງິນເພື່ອໄປເຂົ້າໂຮງໝໍ ເຊິ່ງມີຄວາມເປັນໄປໄດ້ຫຼາຍທີ່ຈະກາຍເປັນຜູ້ທຸກຍາກ.[94]

---

[88]Bertelsmann Stiftung, "BTI 2018 | Laos Country Report," bti-project.org/en/reports/country-reports/detail/itc/LAO/.

[89]Human Rights Watch, "Human Rights Watch Concerns on Laos," November 5, 2015, https://www.hrw.org/news/2015/11/05/human-rights-watch-concerns-laos.

[90]World Health Organization, "Health Financing," wpro.who.int/laos/topics/health_financing/en/.

[91]ບົດລາຍງານຕ່າງໆກ່ຽວກັບລາຍຈ່າຍງົບປະມານຂອງລັດແມ່ນມີຄວາມແຕກຕ່າງກັນ. ບົດລາຍງານຂອງອົງການUN ESCAP ປີ2018 ພົບວ່າສປປລາວໃຊ້ຈ່າຍ 0 ເປີເຊັນຂອງGDPເຂົ້າໃນການປົກປ້ອງທາງສັງຄົມ, ໃຊ້ຈ່າຍ1 ເປີເຊັນຂອງGDP ເຂົ້າໃນດ້ານສາທາລະນະສຸກແລະ3 ເປີເຊັນຂອງGDP ເຂົ້າໃນດ້ານການສຶກສາ, ເຊິ່ງເປັນການໃຊ້ຈ່າຍໃນອັດຕາສ່ວນທີ່ຕ່ຳທີ່ສຸດໃນຂົງເຂດພາກພື້ນ. ບົດລາຍງານຂອງອົງການUN ESCAP, "Social Outlook for Asia and the Pacific Poorly Protected," 2018, https://www.unescap.org/sites/default/files/publications/Social_Outlook.pdf, p. 46.

[92]WHO, "Laos: Health Financing," http://www.wpro.who.int/laos/topics/health_financing/en/.

[93]ບົດລາຍງານຂອງທະນາຄານໂລກ (World Bank), "Lao Poverty Policy Brief: Taxonomy of the Poor and Its Usefulness in Policy Design," December 2017, http://documents.worldbank.org/curated/en/114211505815281554/pdf/119794-WP-taxonomy-PovertyReport-PUBLIC-ENGLISH-and-LAO-ENGLAOfinal.pdf p. 8.

[94]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Poverty Policy Notes: Drivers of Poverty Reduction in Lao PDR," October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 31

ໄດ້ມີຄວາມຄືບໜ້າໃນລະດັບໃດໜຶ່ງແລ້ວໃນການແກ້ໄຂບັນຫາລາຍຈ່າຍເຂົ້າໃນຂະແໜງສາທາລະນະສຸກ. ລາຍຈ່າຍທີ່ປະຊາຊົນຈ່າຍເອງເມື່ອສົມທຽບໃສ່ລາຍຈ່າຍທັງໝົດໃນການຮັກສາສຸຂະພາບໄດ້ຫລຸດລົງຈາກ 60 ເປີເຊັນ ໃນປີ 2000 ມາເປັນ 45 ເປີເຊັນ ໃນປີ 2016, ແຕ່ວ່າ ເງິນທີ່ປະຊາຊົນຈ່າຍເອງຍັງແມ່ນໜຶ່ງໃນແຫລ່ງການເງິນທີ່ໃຫຍ່ທີ່ສຸດໃນການສະໜັບສະໜູນຂະແໜງສາທາລະນະສຸກ ແລະ ມັນແມ່ນອຸປະສັກອັນໜຶ່ງຕໍ່ຄົນທຸກຍາກໃນການເຂົ້າຊົມໃຊ້ການບໍລິການຮັກສາສຸຂະພາບ.[95]ກະຊວງສາທາລະນະສຸກ ໄດ້ເວົ້າວ່າ 94 ເປີເຊັນ ຂອງ ປະຊາຊົນທົ່ວປະເທດແມ່ນໄດ້ເອົາເຂົ້າໃນກອງປະທຶນປະກັນໄພສຸຂະພາບແລ້ວ, ແຕ່ວ່າກະຊວງດັ່ງກ່າວບໍ່ມີຂໍ້ມູນເປັນຕົວເລກເພື່ອຢັ້ງຢືນວ່າ ມີປະຊາຊົນຈຳນວນເທົ່າໃດແທ້ ທີ່ໄດ້ຊົມໃຊ້ການບໍລິການຮັກສາສຸຂະພາບ.[96]ກອງທຶນປະກັນໄພສຸຂະພາບໃຫ້ການບໍລິການໂດຍບໍ່ເສຍຄ່າສຳລັບການເກີດລູກ ແລະ ການປິ່ນປົວສຳລັບເດັກອາຍຸຕໍ່າກວ່າ 5 ປີ.[97]ນອກຈາກນັ້ນ ຍັງມີຊາວບ້ານທີ່ໄດ້ເວົ້າກັບຂ້າພະເຈົ້າວ່າ ພວກເຂົາໄດ້ຈ່າຍເງິນ 5,000 ກີບ ຕໍ່ຄົນ ໃນເວລາເຂົ້າຮັບການບໍລິການຮັກສາສຸຂະພາບຢູ່ສຸກສາລາ.

ການປັບປຸງການບໍລິການຮັກສາສຸຂະພາບໄດ້ຖືກຈັດຕັ້ງປະຕິບັດແບບບໍ່ທົ່ວເຖິງເຊິ່ງມີຄວາມແຕກຕ່າງກັນຫຼາຍໃນແຕ່ລະທ້ອງຖິ່ນສຳລັບການຮັກສາສຸຂະພາບຂັ້ນພື້ນຖານ. ປະຊາຊົນຢູ່ທຸກຍາກ ແລະ ຜູ້ດຳລົງຊີວິດຢູ່ເຂດຊົນນະບົດ ຍັງມີຄວາມຈຳກັດໃນການເຂົ້າເຖິງການບໍລິການຮັກສາສຸຂະພາບທີ່ຈຳເປັນ.[98]ໃນເຂດຊົນນະບົດປະຊາຊົນມັກຈະເຈັບເປັນຍ້ອນພະຍາດທີ່ສາມາດປ້ອງກັນໄດ້ເຊິ່ງລວມທັງພະຍາດໝາກແດງ, ໄຂ້ຍຸງ, ວັນນະໂຣກປອດ ແລະ ພະຍາດຖອກທ້ອງ.[99]ເປັນທີ່ຈະແຈ້ງແລ້ວວ່າ ການເຂົ້າຮັກສາສຸຂະພາບໃນເຂດຊົນນະບົດ ຍັງແມ່ນສິ່ງທ້າທາຍໃຫຍ່ອັນໜຶ່ງຢູ່. ເຖິງແມ່ນວ່າຢູ່ໃນບັນດາບ້ານທີ່ມີສຸກສາລາແລ້ວກໍ່ຕາມ ປະຊາຊົນຫຼາຍຄົນ ໄດ້ເວົ້າແບບດຽວກັນກັບຂ້າພະເຈົ້າວ່າ ພວກເຂົາຕ້ອງໄດ້ໄປໂຮງໝໍເມືອງ ຫລື ໂຮງໝໍແຂວງ ສຳລັບການປິ່ນປົວພະຍາດທີ່ຮ້າຍແຮງ ແລະ ຄ່າເດີນທາງເປັນອຸປະສັກຕໍ່ປະຊາຊົນໃນການໄປຮັບການປິ່ນປົວ. ຢູ່ໃນໜຶ່ງບ້ານທີ່ຂ້າພະເຈົ້າໄດ້ໄປຢ້ຽມຢາມສຸກສາລາມີຢາ ແລະ ອຸປະກອນການແພດໜ້ອຍທີ່ສຸດ - ເຊິ່ງສ່ວນຫຼາຍແມ່ນອຸປະກອນມືສອງທີ່ໃຊ້ງານແລ້ວ ທີ່ໄດ້ມາຈາກໂຮງໝໍແຂວງ. ພະນັກງານແພດຜູ້ໜຶ່ງໄດ້ບອກຂ້າພະເຈົ້າວ່າ ໃນໄລຍະສາມປີຜ່ານມາ ມີປະຊາຊົນຫຼາຍຄົນທີ່ເຈັບປ່ວຍ ແລະ ບໍ່ສາມາດໄປໂຮງໝໍໄດ້ ຍ້ອນບໍ່ມີເງິນ ແລະ ຍ້ອນແນວນັ້ນ ຈຶ່ງມີຜູ້ເສຍຊີວິດສອງຄົນ. ຄ່າໃຊ້ຈ່າຍສຳລັບການໃຊ້ລົດແພດສຸກເສີນໂຮງໝໍເມືອງແມ່ນ 500,000 ກີບ (58 ໂດລາສະຫະລັດ).

ການຮັກສາສຸຂະພາບເດັກແມ່ນສິ່ງສຳຄັນອັນໜຶ່ງໃນການແກ້ໄຂບັນຫາຄວາມທຸກຍາກ ຂອງປະຊາຊົນໃນຫຼາຍກຸ່ມອາຍຸ, ແຕ່ວ່າ ຜົນຂອງການປະຕິບັດທາງດ້ານນີ້ຢູ່ໃນສປປ ລາວ ຍັງຄົງເປັນບັນຫາຢູ່. ໜ້ອຍກວ່າ 50 ເປີເຊັນ ຂອງຈຳນວນເດັກນ້ອຍທັງໝົດທີ່ໄດ້ຮັບການສັກຢາວັກຊົນປ້ອງກັນພະຍາດ,[100]ແລະ ໃນຈຳນວນເດັກນ້ອຍທີ່ມີອາຍຸຕໍ່າກວ່າ 5 ປີ ມີ 21 ເປີເຊັນຂອງພວກເຂົາ ທີ່ເປັນເດັກນ້ອຍນ້ຳໜັກຫລຸດ, 9 ເປີເຊັນ ຂອງພວກເຂົາມີອາການຈ່ອຍຜ່ອມ ແລະ 33 ເປີເຊັນ ມີຄວາມສູງທີ່ບໍ່ໄດ້ມາດຕະຖານ.[101]ສີ່ສິບ

---

[95]ບົດລາຍງານຂອງທະນາຄານໂລກ (World Bank), “Lao PDR Economic Monitor,” January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 43.

[96]ປະຊຸມກັບກະຊວງສາທາລະນະສຸກ, 26 ມີນາ, 2019.

[97]ສະມາຄົມເພື່ອການພັດທະນາແມ່ຍິງແລະການສຶກສາດ້ານກົດໝາຍ (Association for Development of Women and Legal Education), “Capacity Assessment Report: CEDAW Implementation in Lao PDR,” June 2016, http://adwlelaos.org/wp-content/uploads/2017/09/SRP001_Cedaw-Assessment_EF-14-07-2016-ENG.pdf p. 10.

[98]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງທີ່ຄົ້ນພົບຂອງການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 24.

[99]Lao PDR, “National report submitted in accordance with paragraph 5 of the annex to Human Rights Council resolution 16/21,” 2014, https://undocs.org/A/HRC/WG.6/21/LAO/1.

[100]ບົດລາຍງານຂອງທະນາຄານໂລກ (World Bank), “Lao PDR Economic Monitor,” January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 44.

[101]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf pp. 17, 36.

ແປດເປີເຊັນຂອງເດັກນ້ອຍໃນຈຳນວນປະຊາກອນທີ່ທຸກຍາກທີ່ສຸດແມ່ນຜູ້ທີ່ມີຄວາມສູງບໍ່ໄດ້ມາດຕະຖານ, ເຊິ່ງມີຄວາມແຕກຕ່າງຈຳນວນສາມເທົ່າຕົວເມື່ອທຽບໃສ່ເດັກນ້ອຍຂອງຈຳນວນປະຊາກອນທີ່ຮັ່ງມີທີ່ສຸດ.[102]ໂດຍອີງຕາມຂໍ້ມູນຈາກ UNDP ມີພຽງ 5 ເປີເຊັນຂອງເດັກນ້ອຍອາຍຸທີ່ຍັງອ່ອນທີ່ໄດ້ຮັບອາຫານພຽງພໍ ໃນລະດັບທີ່ຍອມຮັບໄດ້ຂັ້ນຕ່ຳສຸດ.[103]ເຖິງແມ່ນວ່າໄດ້ມີຄວາມຄືບໜ້າແລ້ວກໍຕາມ ໃນການຫລຸດຜ່ອນອັດຕາການຕາຍຂອງເດັກ, ຄວາມບໍ່ສະເໝີພາບໃນການບໍລິການຮັກສາສຸຂະພາບຍັງສືບຕໍ່ມີຢູ່. ໃນນັ້ນລວມທັງການດູແລຝາກທ້ອງ, ການດູແລຫລັງເກີດ, ການມີແພດຊຳນານງານຊ່ວຍເກີດ ແລະ ການເກີດລູກຢູ່ໂຮງໝໍ.[104]ໃນປີ 2015 ອັດຕາການຕາຍຂອງແມ່ຕໍ່ການເກີດທີ່ມີຊີວິດແມ່ນ 197 ຄົນ ຕໍ່ 100,000 ເທື່ອເກີດທີ່ມີຊີວິດ ເຊິ່ງມີສາເຫດທີ່ກ່ຽວຂ້ອງກັບການຖືພາຢູ່ໃນສປປ ລາວ ເຊິ່ງແມ່ນອັດຕາທີ່ສູງກວ່າອັດຕາສະເລັ່ຍຂອງພາກພື້ນ ເຖິງແມ່ນວ່າ ອັດຕາດັ່ງກ່າວໄດ້ຫລຸດລົງມາຈາກ 400 ຄົນ ທີ່ເສຍຊີວິດຕໍ່ 100,000 ເທື່ອເກີດ ໃນປີ 2005. ອັດຕາການຕາຍຂອງແມ່ຍັງສູງທີ່ສຸດໃນບັນດາແມ່ຍິງທີ່ທຸກຍາກຢູ່ດຳລົງຊີວິດຢູ່ເຂດຊົນນະບົດ ເຊິ່ງແມ່ນຜູ້ທີ່ໄດ້ຮັບການສຶກສາຕ່ຳ ຫລື ບໍ່ໄດ້ຮັບການສຶກສາເລີຍ ແລະ ແມ່ຍິງຊົນເຜົ່າສ່ວນໜ້ອຍ.[105]

**ການສຶກສາ**

ການເຂົ້າເຖິງການສຶກສາທີ່ມີຄຸນນະພາບຢ່າງມີຄວາມໝາຍຈະແມ່ນສິ່ງທີ່ຈຳເປັນເພື່ອສ້າງເສັ້ນທາງທີ່ແທ້ຈິງໃຫ້ແກ່ການຫລຸດພົ້ນອອກຈາກຄວາມທຸກຍາກສຳລັບເດັກນ້ອຍລາວ. ເຖິງແມ່ນວ່າກະຊວງສຶກສາທິການ ແລະ ກິລາ ໄດ້ປະຕິບັດພັນທະໃນກັບປັບປຸງໂອກາດການສຶກສາ ແລະ ໄດ້ລາຍງານໃຫ້ເຫັນບາງຄວາມຄືບໜ້າແລ້ວໃນການປັບປຸງອັດຕາການເຂົ້າຮຽນ ແລະ ອັດຕາການຫຼອດເຫລືອແລ້ວກໍ່ຕາມ, ແຕ່ກໍຍັງບໍ່ທັນຈະແຈ້ງເທື່ອວ່າ ລັດຖະບານໄດ້ຮັບຮູ້ຄວາມສຳຄັນຂອງການສຶກສາ ຫລື ໄດ້ຈັດສັນຊັບພະຍາກອນທີ່ຈຳເປັນໃຫ້ແກ່ການສຶກສາແລ້ວ ຫລື ບໍ່. ໂດຍອີງຕາມຂໍ້ມູນຈາກຜູ້ເຂົ້າຮ່ວມສົນທະນາໄດ້ເຫັນວ່າການໃຊ້ຈ່າຍເຂົ້າໃນການສຶກສາ ແມ່ນ 3.11 ເປີເຊັນ ຂອງ GDP ແລະ 13.4 ເປີເຊັນຂອງງົບປະມານແຫ່ງຊາດ (ທຽບໃສ່ 17 ເປີເຊັນທີ່ເປັນເປົ້າໝາຍ) ໃນປີ 2017. ເປີເຊັນຂອງງົບປະມານທີ່ໄດ້ໃຊ້ເຂົ້າໃນການສຶກສາ ໃນປີ 2017 ແມ່ນຢູ່ໃນລະດັບຕ່ຳທີ່ສຸດ ໂດຍອີງຕາມຂໍ້ມູນທີ່ໄດ້ຮັບ ເຊິ່ງເປັນການແກ່ຍາວມາແຕ່ສົກປີ 2010/11 ຫາປີ 2017. ການໃຊ້ຈ່າຍເຂົ້າໃນການສຶກສາແມ່ນຍັງຕ່ຳຢູ່ ເມື່ອສົມທຽບໃສ່ບັນດາປະເທດໃກ້ຄຽງ ແລະ ປະເທດອື່ນໆຢູ່ໃນພາກພື້ນ.[106]

ມີຫລັກຖານທີ່ດີທີ່ສະແດງໃຫ້ເຫັນວ່າ ການສຶກສາແມ່ນສິ່ງທີ່ສຳຄັນຫຼາຍໃນການແກ້ໄຂຄວາມທຸກຍາກຢູ່ໃນສປປ ລາວ. ປະຊາຊົນຜູ້ໃດທີ່ມີການສຶກສາຕ່ຳທີ່ສຸດ ຈະມີໂອກາດໜ້ອຍທີ່ສຸດເຊັ່ນກັນ ໃນການຫລຸດພົ້ນອອກຈາກຄວາມທຸກຍາກ ແລະ ກໍແມ່ນຜູ້ທີ່ມີຄວາມເປັນໄປໄດ້ສູງທີ່ສຸດ ທີ່ຈະຕົກຢູ່ໃນມາດຕະຖານທີ່ຢູ່ຕ່ຳກວ່າມາດຕະຖານການຫລຸດພົ້ນຄວາມທຸກຍາກ. ໃນປີ 2012/13 ມີ 47 ເປີເຊັນ ຂອງ ປະຊາຊົນຜູ້ທີ່ບໍ່ໄດ້ຮັບການສຶກສາໃນລະບົບທີ່ດຳລົງຊີວິດຢູ່ຕ່ຳກວ່າມາດຕະຖານຫລຸດພົ້ນຄວາມທຸກຍາກ ເມື່ອສົມທຽບໃສ່ພຽງແຕ່ 4 ເປີເຊັນ ຂອງ ຜູ້ທີ່ຮຽນຈົບມະຫາວິທະຍາໄລ ທີ່ຍັງທຸກຍາກຢູ່[107]ແລະ ອັດຕາຄວາມທຸກຍາກໃນຈຳນວນຜູ້

[102]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf pp. 36-37.

[103]ບົດລາຍງານຂອງອົງການUNDP, "Lao PDR: Zero Hunger," http://www.la.undp.org/content/lao_pdr/en/home/sustainable-development-goals/goal-2-zero-hunger.html.

[104]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 24.

[105]Jonna P. Estudillo, "Government Programs Have Begun to Reduce Maternal Deaths in Lao PDR: Now What Comes Next?," March 30, 2018, https://www.eastwestcenter.org/publications/government-programs-have-begun-reduce-maternal-deaths-in-lao-pdr-now-what-comes-next.

[106]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 47.

[107]World Bank, "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf pp. 34-35.

ທີ່ມີຫົວໜ້າຄອບຄົວທີ່ບໍ່ໄດ້ຮັບການສຶກສາໃນລະບົບ ຫລື ໄດ້ຮັບການສຶກສາ ແຕ່ບໍ່ຈົບຊັ້ນປະຖົມ ເຊິ່ງອັດຕາຄວາມທຸກຍາກດັ່ງກ່າວແມ່ນສູງກວ່າສາມເທົ່າຕົວ ເມື່ອທຽບໃສ່ປະຊາຊົນ ທີ່ມີຫົວໜ້າຄອບຄົວ ທີ່ໄດ້ຮັບການສຶກສາ ຢ່າງໜ້ອຍຈົບຊັ້ນມັດທະຍົມຕົ້ນ.[108]ການໄດ້ຮັບການສຶກສາ ສາມາດເພີ່ມໂອກາດໃຫ້ແກ່ບັນດາຄອບຄົວ ໃນການຜະລິດກະສິກຳ ຫລື ຊ່ວຍໃຫ້ພວກເຂົາຫັນປ່ຽນອອກຈາກອາຊີບກະສິກຳ.[109]ໃນຈຳນວນຊາວໜຸ່ມທີ່ອອກແຮງງານ ໂດຍສະເພາະຜູ້ທີ່ໄດ້ຮັບການສຶກສາຫຼາຍປີຂຶ້ນໄປມີໂອກາດຫຼາຍທີ່ຈະໄດ້ເຮັດວຽກເປັນແຮງງານຮັບຈ້າງທີ່ມີສັນຍາແຮງງານເປັນລາຍລັກອັກສອນ - ມີ 95 ເປີເຊັນ ຂອງຊາວໜຸ່ມທີ່ເຮັດວຽກແຕ່ແມ່ນຊາວໜຸ່ມ ທີ່ບໍ່ໄດ້ຮັບການສຶກສາແມ່ນຜູ້ທີ່ຍັງມີຄວາມທຸກຍາກຢູ່ ເມື່ອສົມທຽບໃສ່ 49 ເປີເຊັນ ຂອງລັກສະນະດຽວກັນນີ້ສຳລັບໄວໜຸ່ມທີ່ໄດ້ຮັບການສຶກສາຈົບຊັ້ນມັດທະຍົມ.[110]

ເຖິງແມ່ນວ່າການສຶກສາ ຈະມີຄວາມສຳຄັນຕໍ່ການຫລຸດພົ້ນຈາກຄວາມທຸກຍາກ, ແຕ່ວ່າ ປະຊາຊົນທີ່ຍັງທຸກຍາກຢູ່ນັ້ນ ກໍຍັງມີໂອກາດໜ້ອຍຫຼາຍໃນການໄດ້ຮັບການສຶກສາ. ມີພຽງ 58 ເປີເຊັນ ຂອງເດັກນ້ອຍຂອງປະຊາກອນທີ່ທຸກຍາກທີ່ສຸດທີ່ຮຽນຈົບຊັ້ນປະຖົມ ເຊິ່ງກົງກັນຂ້າມກັບ 98 ເປີເຊັນ ຂອງ ເດັກນ້ອຍຂອງກຸ່ມປະຊາກອນທີ່ຮັ່ງມີທີ່ສຸດ ແລະ ມີພຽງ 8 ເປີເຊັນ ຂອງເດັກນ້ອຍຂອງປະຊາກອນທີ່ທຸກຍາກທີ່ສຸດ ທີ່ຮຽນຈົບຊັ້ນມັດທະຍົມປາຍ ເມື່ອສົມທຽບໃສ່ 74 ເປີເຊັນ ຂອງເດັກນ້ອຍ ຂອງປະຊາກອນທີ່ຮັ່ງມີທີ່ສຸດ.[111]ຄວາມຄືບໜ້າໃນການປັບປຸງໂອກາດການເຂົ້າເຖິງແມ່ນຍັງຊ້າຢູ່ແລະ ຍັງສຸມໃສ່ການສຶກສາຊັ້ນປະຖົມ.[112]ໂດຍອີງຕາມຂໍ້ມູນຈາກກະຊວງສຶກສາທິການ ແລະ ກິລາ ເຖິງແມ່ນວ່າ ອັດຕາການປະລະການຮຽນໄດ້ຫລຸດລົງສຳລັບນັກຮຽນຊັ້ນປະຖົມຢູ່ໃນຊຸມປີທີ່ຜ່ານມາແລ້ວກໍຕາມ, ອັດຕາການປະລະການຮຽນໄດ້ເພີ່ມຂຶ້ນແຕ່ລະປີ ນັບແຕ່ປີ 2016 ຫາ 2018ສຳລັບນັກຮຽນຊັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ.[113]

ເຖິງແມ່ນວ່າການສຶກສາຈະບໍ່ໄດ້ເສຍຄ່າກໍ່ຕາມແຕ່ວ່າກໍມີຄ່າໃຊ້ຈ່າຍເກີດຂຶ້ນສຳລັບການສຶກສາລວມທັງຊຸດເຄື່ອງແບບ, ອາຫານ ແລະ ຄ່າໃຊ້ຈ່າຍກ່ຽວກັບການເດີນທາງ ເຊິ່ງເຮັດໃຫ້ເດັກໃນຄອບຄົວທຸກຍາກບໍ່ໄດ້ເຂົ້າໂຮງຮຽນ. ສຳລັບຄອບຄົວທຸກຍາກ ຄ່າໃຊ້ຈ່າຍເຂົ້າໃນການສຶກສາ ແລະ ຄວາມຈຳເປັນໃຫ້ລູກເຮັດວຽກ ແລະ ຊ່ວຍເຫລືອຄອບຄົວ ແມ່ນສິ່ງທີ່ພາໃຫ້ເດັກຕ້ອງໄດ້ອອກໂຮງຮຽນ. ຄ່າໃຊ້ຈ່າຍໃນການສົ່ງລູກໄປໂຮງຮຽນແມ່ນເພີ່ມຂຶ້ນ ໂດຍອີງຕາມໄວອາຍຸຂອງເດັກທີ່ສູງຂຶ້ນ.[114]ໃນການສຳຫຼວດອັນໜຶ່ງກ່ຽວກັບເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ເຫັນວ່າ 24 ເປີເຊັນ ຂອງເດັກເຫລົ່ານັ້ນເວົ້າວ່າພວກເຂົາໄດ້ອອກໂຮງຮຽນຍ້ອນວຽກເຮືອນ, ຍ້ອນໄປເຮັດວຽກ, ຍ້ອນໂອກາດການເຂົ້າເຖິງ, ຍ້ອນຄວາມປອດໄພ ຫລື ຍ້ອນຄ່າໃຊ້ຈ່າຍ.[115]ເຈົ້າໜ້າທີ່ກະຊວງສຶກສາທິການ ແລະ

---

[108]ບົດລາຍງານຂອງທະນາຄານໂລກ (World Bank), "Poverty Profile in Lao PDR," 2014, http://documents.worldbank.org/curated/en/868521467998508506/pdf/100120-WP-P146141-PUBLIC-Box393225B-Poverty-Profile-in-Lao-PDR-publication-version-12-19-14.pdf p. 16.

[109]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf pp. 34-35; World Bank, "Lao PDR Poverty Policy Notes: Drivers of Poverty Reduction in Lao PDR, October 2015, http://documents.worldbank.org/curated/en/590861467722637341/pdf/101567-REPLACENENT-PUBLIC-Lao-PDR-Poverty-Policy-Notes-Drivers-of-Poverty-Reduction-in-Lao-PDR.pdf p. 9.

[110]Understanding Children's Work, "Understanding Children's Work and Youth Employment Outcomes in Laos," 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf p. 10.

[111]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 45.

[112]ບົດລາຍງານຂອງທະນາຄານໂລກ (World Bank), "Lao Poverty Policy Brief: Taxonomy of the Poor and Its Usefulness in Policy Design," December 2017, http://documents.worldbank.org/curated/en/114211505815281554/pdf/119794-WP-taxonomy-PovertyReport-PUBLIC-ENGLISH-and-LAO-ENGLAOfinal.pdf p. 12.

[113]ກະຊວງສຶກສາທິການແລະກິລາ, "ບົດລາຍງານຜົນການດຳເນີນງານຂອງຂະແໜງສຶກສາແລະກິລາສົກປີ 2017-2018 ແລະແຜນການພັດທະນາສຳລັບ 2018-2019," ສິງຫາ2018, ໜ້າ 6.

[114]ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 46.

[115]Understanding Children's Work, "Understanding Children's Work and Youth Employment Outcomes in Laos," 2014, http://documents.worldbank.org/curated/en/587261545112094976/pdf/133003-WP-v1-PUBLIC-ADD-SERIES-see-103603-Laos-Summary-child-labour-youth-employment20140109-131624.pdf p. 6-7.

ກິລາ ໄດ້ເວົ້າວ່າ ກະຊວງດັ່ງກ່າວໄດ້ສະໜອງເບ້ຍລ້ຽງໃຫ້ນັກຮຽນທຸກຍາກຈໍານວນ 1,000 ຄົນ ໃນອັດຕາ 850,000 ກີບ (100 ໂດລາສະຫະລັດ (US$)) ໃນແຕ່ລະປີ, ແຕ່ວ່າງົບປະມານທັງໝົດແມ່ນເທົ່າກັບ 100,000 ໂດລາສະຫະລັດ (US$) ໃນການຊ່ວຍເຫລືອເດັກທຸກຍາກ ເຊິ່ງກວມເອົາພຽງແຕ່ 0.0006 ເປີເຊັນຂອງນັກຮຽນ 1.45 ລ້ານຄົນທີ່ເຂົ້າໂຮງຮຽນໃນລະບົບ.[116]

ເຂດຊົນນະບົດຍິ່ງມີໂອກາດຈໍາກັດຫຼາຍໃນການສຶກສາ ແລະ ໃນຂະນະທີ່ບ້ານຈໍານວນຫຼາຍສາມາດເຂົ້າເຖິງໂຮງ ຮຽນປະຖົມແລ້ວກໍຕາມ ແຕ່ໃນເມື່ອເດັກມີອາຍຸສູງຂຶ້ນພວກເຂົາຕ້ອງໄດ້ເດີນທາງໄກຕື່ມອອກຈາກບ້ານເພື່ອ ໄປພັກເຊົາຢູ່ໃນໂຮງຮຽນເລີຍ. ໂດຍອີງຕາມທະນາຄານໂລກ 50 ເປີເຊັນ ຂອງໂຮງຮຽນຊັ້ນປະຖົມທັງໝົດ ແລະ 70 ເປີເຊັນ ຂອງໂຮງຮຽນຊັ້ນປະຖົມທີ່ຢູ່ໃນເມືອງທີ່ທຸກຍາກທີ່ສຸດ ບໍ່ມີ 5 ຊັ້ນຮຽນ ໂດຍມີຫລັກຖານທີ່ຊີ້ໃຫ້ເຫັນວ່າເດັກໄດ້ອອກໂຮງຮຽນຫລັງຈາກໄດ້ຮຽນຈົບຊັ້ນຮຽນສູງສຸດທີ່ໂຮງຮຽນພວກເຂົາມີ.[117] ໃນບ້ານຊົນນະບົດແຫ່ງໜຶ່ງທີ່ຂ້າພະເຈົ້າໄດ້ໄປຢ້ຽມຢາມຄູໄດ້ບອກຂ້າພະເຈົ້າວ່າ ໂຮງຮຽນມັດທະຍົມທີ່ຢູ່ໃກ້ທີ່ສຸດແມ່ນ 17 ກິໂລແມັດ ເຊິ່ງຕ້ອງເດີນທາງດ້ວຍທາງດິນແດງ ແລະ ມີປະມານ 50 ເປີເຊັນ ຂອງເດັກທີ່ຮຽນຈົບຊັ້ນປະຖົມແລ້ວໄດ້ອອກໂຮງຮຽນໃນອັດຕາສ່ວນທີ່ບໍ່ດຸ່ນດ່ຽງກັນ ໂດຍສະເພາະແມ່ນເດັກຍິງ ແລະ ເດັກທີ່ຢູ່ໃນຄອບຄົວທຸກຍາກທີ່ບໍ່ມີລົດຈັກເດີນທາງ. ບັນດາເຈົ້າໜ້າທີ່ຂອງກະຊວງສຶກສາທິການ ແລະ ກິລາ ໄດ້ບອກກັບຂ້າພະເຈົ້າວ່າກະຊວງດັ່ງກ່າວກໍາລັງສ້າງໂຮງຮຽນກິນນອນຫຼາຍແຫ່ງໃຫ້ເດັກຜູ້ທີ່ຢູ່ຫ່າງໄກຈາກເຮືອນຂອງພວກເຂົາ, ແຕ່ກໍບໍ່ມີຂໍ້ມູນຈະແຈ້ງວ່າ ໄດ້ສ້າງໂຮງຮຽນກິນນອນດັ່ງກ່າວແລ້ວຈັກຫລັງ.

ໃນເມື່ອເດັກໄດ້ເຂົ້າໂຮງຮຽນແລ້ວ ແຕ່ຄຸນນະພາບຂອງການສຶກສາ ປາກົດວ່າຍັງຂ້ອນຂ້າງຕໍ່າ. ອີງຕາມທະນາຄານໂລກ, ການສຶກສາ 10.8 ປີ ໃນສປປ ລາວ ແມ່ນເທົ່າກັບພຽງແຕ່ 6.4 ປີ ຖ້າຫາກວ່າຈະໃຫ້ໄດ້ຕາມຄຸນນະພາບຂອງການສຶກສາ. ນີ້ແມ່ນຕໍ່າກວ່າລະດັບສະເລ່ຍຂອງພາກພື້ນ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດຂອງເດັກໃນການພັດທະນາທັກສະ ແລະ ການຫລຸດພົ້ນຈາກຄວາມທຸກຍາກ. ການປະເມີນການຮຽນອ່ານ ໃນຊຸມປີຕອນຕົ້ນຂອງຊັ້ນປະຖົມ ໄດ້ພົບເຫັນວ່າເກືອບໜຶ່ງສ່ວນສາມຂອງນັກຮຽນຊັ້ນ ປ2 ໃນສປປ ລາວ ໄດ້ຄະແນນສູນ ສໍາລັບການອ່ານທີ່ລ່ຽນໄຫຼ ແລະ 57 ເປີເຊັນ ໄດ້ຮັບຄະແນນສູນສໍາລັບການອ່ານທີ່ເຂົ້າໃຈ. ຄວາມຈໍາກັດໃນການໃຊ້ງົບປະມານເຂົ້າໃນການຄຸ້ມຄອງບໍລິຫານໂຮງຮຽນ, ງົບປະມານສໍາລັບອຸປະກອນການຮຽນ-ການສອນ, ອຸປະກອນຕ່າງໆ ແລະ ການຝຶກອົບຮົມຄູເຮັດໃຫ້ມີຄວາມຊັກຊ້າໃນການປັບປຸງຄຸນນະພາບຂອງການສຶກສາ.[118]

ພື້ນຖານໂຄງລ່າງຂອງໂຮງຮຽນທີ່ຍັງບໍ່ທັນເຮັດໄດ້ດີ ຍິ່ງເຮັດໃຫ້ໂອກາດການສຶກສາມີອຸປະສັກຕື່ມ ແລະ ຂ້າພະເຈົ້າໄດ້ເຫັນດ້ວຍໂຕຂ້າພະເຈົ້າເອງ ວ່າມີຫຼາຍໂຮງຮຽນທີ່ບໍ່ມີໄຟຟ້າ ຫລື ບໍ່ມີນໍ້າໃຊ້. ປະມານຈໍານວນເຄິ່ງໜຶ່ງຂອງໂຮງຮຽນ ບໍ່ມີຫລັງຄາທີ່ປ້ອງກັນນໍ້າຝົນຮົ່ວຊຶມໄດ້, ບໍ່ມີນໍ້າໃຊ້ ຫລື ບໍ່ມີຫ້ອງນໍ້າ ແລະ ການຂາດສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມ ມີຜົນກະທົບຢ່າງຮ້າຍແຮງຕໍ່ເດັກຍິງ ໃນການໄປເຂົ້າໂຮງຮຽນ. ມີພຽງ 20 ເປີເຊັນ ຂອງໂຮງຮຽນທັງໝົດທີ່ມີໄຟຟ້າໃຊ້. ການໄປເຂົ້າໂຮງຮຽນຍັງພົບອຸປະສັກຍ້ອນເສັ້ນທາງບໍ່ດີ, ເຊິ່ງໝາຍຄວາມວ່າ ຍັງມີເປີເຊັນຂອງເດັກໃນບັນດາບ້ານທີ່ບໍ່ມີເສັ້ນທາງເຂົ້າເຖິງໃນເຂດຊົນນະບົດໃນອັດຕາສູງຍັງບໍ່ທັນໄດ້ເຂົ້າໂຮງຮຽນເລີຍ.[119]

ໃນຂະນະທີ່ມີຄວາມຊົມເຊີຍຕໍ່ກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ຮັບຮອງເອົາການຮຽນຮ່ວມ ແລະ ໄດ້ເອົາເດັກພິການເຂົ້າໂຮງຮຽນຈໍານວນ 5,075 ຄົນ ໃນໂຮງຮຽນປົກກະຕິທົ່ວໄປ, ແຕ່ຈໍານວນດັ່ງກ່າວແມ່ນຍັງໜ້ອຍຢູ່ ເມື່ອສົມທຽບໃສ່ຜູ້ພິການ

[116] ການປະຊຸມກັບກະຊວງສຶກສາທິການແລະກິລາ, ເດືອນມີນາ, ວັນທີ25, 2019.
[117] ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 47.
[118] ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 45.
[119] ບົດລາຍງານຂອງທະນາຄານໂລກ (World Bank), "Lao PDR Economic Monitor," January 2019, http://documents.worldbank.org/curated/en/818841549314902040/pdf/134324-LEM-Jan-2019-final-for-online.pdf p. 47.

ຈຳນວນ 41,052 ຄົນ ທີ່ມີອາຍຸ 5 - 18 ປີ ໂດຍອີງຕາມຂໍ້ມູນການສຳຫຼວດພົນລະເມືອງປີ 2015[120](ຕົວເລກດັ່ງກ່າວແມ່ນຍັງຕ່ຳຢູ່ເມື່ອສົມທຽບໃສ່ການປະເມີນຂອງອົງການອະນາໄມໂລກ ເຊິ່ງມີ 15 ເປີເຊັນ ຂອງປະຊາກອນໂລກ ທີ່ເປັນຄົນພິການ).[121]

ຂ້າພະເຈົ້າໄດ້ຮັບຂໍ້ມູນຈາກຫຼາຍບົດລາຍງານທີ່ວ່າ ລັດຖະບານບໍ່ສາມາດຈ່າຍເງິນເດືອນໃຫ້ຄູທັນເວລາ ຫລື ຄູ ຕ້ອງໄດ້ເຮັດວຽກສິດສອນທີ່ຍັງບໍ່ທັນໄດ້ຮັບເງິນເດືອນ ເຊິ່ງມີຄວາມຜັກດັນໃຫ້ຄູຕ້ອງຊອກເຮັດວຽກອື່ນເພີ່ມ. ການສຳຫຼວດຂອງລັດຖະບານກ່ຽວກັບຕົວຊີ້ວັດທາງສັງຄົມ ໃນປີ 2017 ໄດ້ພົບເຫັນວ່າ ເກືອບ 20 ເປີເຊັນ ຂອງເດັກອາຍຸ 7-14 ປີ ບໍ່ສາມາດໄປເຂົ້າໂຮງຮຽນເນື່ອງຈາກໂຮງຮຽນພັກ ຫລື ຄູບໍ່ມາສອນ.[122]ຄູບາງຄົນທີ່ຂ້າພະເຈົ້າໄດ້ພົບໄດ້ເວົ້າກັບຂ້າພະເຈົ້າວ່າ ເງິນເດືອນຂອງພວກເຂົາໄດ້ຖືກຫັກໃນຫວ່າງບໍ່ດົນມານີ້ ເພື່ອປະກອບສ່ວນເອົາເຂົ້າໃນກອງທຶນບັນເທົາທຸກແຫ່ງຊາດສຳລັບເຫດການໄພພິບັດທຳມະຊາດ. ໃນສະພາບທີ່ຈຳນວນຄູບໍ່ພຽງພໍ ໂດຍສະເພາະແມ່ນໃນບັນດາບ້ານຊົນນະບົດ ສິ່ງທີ່ໜ້າເປັນຫ່ວງອີກກໍ່ຄືວ່າ ຈຳນວນນັກຮຽນໃນບັນດາວິທະຍາໄລສ້າງຄູໄດ້ຫລຸດລົງ 12 ເປີເຊັນ ໃນສົກສຶກສາ 2017-18 ເມື່ອສົມທຽບໃສ່ສົກສຶກສາກ່ອນນັ້ນ.[123]

## 7. ວຽກພາກປະຊາສັງຄົມ

ລັດຖະບານ ໄດ້ປະຕິບັດວຽກງານຫຼາຍດ້ານທີ່ມີຜົນໃນທາງຕັ້ງໜ້າໃນການເຂົ້າຮ່ວມບັນດາກົນໄກສາກົນກ່ຽວກັບສິດທິມະນຸດ ແລະ ໄດ້ເຊີນຜູ້ລາຍງານພິເສດເຂົ້າມາປະເມີນສະພາບການ ພາຍຫລັງທີ່ບໍ່ໄດ້ຮັບຊ່ວງວຊານເຂົ້າຢ້ຽມຢາມ ແລະ ປະເມີນ ເປັນເວລາຫຼາຍປີແລ້ວ. ຂ້າພະເຈົ້າຮູ້ສຶກດີໃຈ ທີ່ຮູ້ວ່າລັດຖະບານສປປ ລາວ ມີແຜນການທີ່ຈະເຊີນຜູ້ລາຍງານພິເສດເຂົ້າມາປະເມີນທຸກໆປີ ແລະ ໄດ້ຮັບຂໍ້ມູນຈາກລັດຖະມົນຕີທ່ານໜຶ່ງໃນສຳນັກງານນາຍົກລັດຖະມົນຕີວ່າ ສປປ ລາວ ຈະຮັບຮອງສົນທິສັນຍາສາກົນວ່າດ້ວຍການປົກປ້ອງທຸກຄົນຈາກການສູນຫາຍທີ່ຖືກບັງຄັບ ແລະ ສົນທິສັນຍາສາກົນວ່າດ້ວຍການປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍທຸກຄົນ ແລະ ສະມາຊິກຄອບຄົວຂອງພວກເຂົາ. ເຈົ້າໜ້າທີ່ຫຼາຍທ່ານໄດ້ເນັ້ນໜັກວ່າ ລັດຖະບານໄດ້ "ທຸ່ມເທ" ໃສ່ສິດທິມະນຸດ.

ຜູ້ລາຍງານພິເສດ ຍັງມີຄວາມຍິນດີທີ່ຮັບຮູ້ວ່າ ໄດ້ມີການປຶກສາຫາລືແບບເປີດເຜີຍເພີ່ມຂຶ້ນກ່ຽວກັບປະເດັນຕ່າງໆທີ່ເມື່ອກ່ອນໄດ້ພິຈາລະນາວ່າແມ່ນປະເດັນທີ່ຖືກຈຳກັດ ເປັນຕົ້ນແມ່ນປະເດັນການສໍ້ລາດບັງຫຼວງ ແລະ ປະເດັນກ່ຽວກັບທີ່ດິນ ແລະ ປາກົດວ່າສະພາແຫ່ງຊາດໄດ້ມີວິທີການທີ່ກວ້າງຂວາງຫຼາຍກວ່າເກົ່າ ໃນການປະຕິບັດບົດບາດການກວດສອບ. ປະຊາຊົນຈຳນວນຫຼວງຫຼາຍໄດ້ຊົມເຊີຍການສ້າງຕັ້ງໃຫ້ມີໂທລະສັບສາຍດ່ວນຂອງສະພາແຫ່ງຊາດ ເຖິງແມ່ນວ່າສະມາຊິກຂອງສະພາແຫ່ງຊາດ ໄດ້ບອກຂ້າພະເຈົ້າວ່າ ໂທລະສັບສາຍດ່ວນໄດ້ຖືກໃຊ້ພຽງແຕ່ໃນໄລຍະ 8 ອາທິດຕໍ່ປີ ເຊິ່ງແມ່ນໄລຍະເປີດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ. ລະບົບສາຍດ່ວນສາມາດປັບປຸງໃຫ້ເຂັ້ມແຂງກວ່າເກົ່າ ໂດຍໃຫ້ມີເອກະສານເປີດເຜີຍຕໍ່ປະຊາຊົນ ກ່ຽວກັບປະເພດບັນຫາທີ່ໄດ້ສະເໜີ ແລະ ຜົນການແກ້ໄຂ ແລະ ໃຫ້ພາກສ່ວນເອກະລາດ ເປັນຜູ້ຕິດຕາມ ແທນທີ່ຈະໃຫ້ແຕ່ລະກະຊວງເປັນຜູ້ຕິດຕາມ.

ຢ່າງໃດກໍຕາມ ເກືອບວ່າບໍ່ມີໂອກາດສຳລັບອິດສະຫຼະພາບໃນການສະແດງຄຳຄິດເຫັນ, ຄວາມຈຳກັດທີ່ເຂັ້ມງວດຕໍ່ສື່ມວນຊົນ ແລະ ຕໍ່ອົງການຈັດຕັ້ງພາກປະຊາສັງຄົມ ແລະ ມາດຕະການເຂັ້ມງວດທີ່ໄດ້ປະຕິບັດຜ່ານມາ, ການຈັບຕົວ ແລະ ການຫາຍຕົວຂອງ

---

[120]ກະຊວງສຶກສາທິການແລະກິລາ, "ບົດລາຍງານຜົນການດຳເນີນງານຂອງຂະແໜງສຶກສາແລະກິລາສົກປີ 2017-2018 ແລະແຜນການພັດທະນາສຳລັບ 2018-2019," ສິງຫາ2018, ໜ້າ 51.

[121]ບົດລາຍຂອງອົງການອານາໄມໂລກ (World Health Organization), "World Report on Disability," https://www.who.int/disabilities/world_report/2011/report/en/.

[122]ສູນສະຖິຕິແຫ່ງຊາດ, "ການສຳຫຼວດດັດສະນີໝາຍສັງຄົມລາວ II: ບົດລາຍງານສິ່ງຄົ້ນພົບຈາກການສຳຫຼວດ," 2017, https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf p. 46.

[123]ກະຊວງສຶກສາທິການແລະກິລາ, "ບົດລາຍງານຜົນການດຳເນີນງານຂອງຂະແໜງສຶກສາແລະກິລາສົກປີ 2017-2018 ແລະແຜນການພັດທະນາສຳລັບ 2018-2019," ສິງຫາ2018, ໜ້າ 30.

ບຸກຄົນ ໄດ້ປິດໂອກາດສໍາລັບການແລກປ່ຽນແນວຄວາມຄິດ ແລະ ການຊອກຫາວິທີການແກ້ໄຂ ແລະ ເປັນອຸປະສັກຕໍ່ປະຊາຊົນໃນການສະເໜີຮ້ອງຮຽນບັນຫາຕ່າງໆ ແລະ ຊອກຫາຜູ້ມີຄວາມຮັບຜິດຊອບ. ຂ້າພະເຈົ້າໄດ້ຮັບການລາຍງານຈໍານວນຈາກຫຼາຍຄົນ ຢູ່ພາຍໃນະປະເທດ ແລະ ຜູ້ທີ່ໄດ້ອອກຈາກສປປ ລາວ ໄປ ໃນບໍ່ດົນມານີ້ ເຊິ່ງກ່ຽວຂ້ອງກັບປະເດັນທີ່ປະຊາຊົນຮູ້ສຶກວ່າພວກເຂົາບໍ່ສາມາດເວົ້າອອກໄດ້ຢ່າງມີອິດສະຫຼະພາບ ແລະ ຢ້ານກົວຕໍ່ການປະຕິບັດມາດຕະການເຂັ້ມງວດຍ້ອນພວກເຂົາໄດ້ສະແດງຄວາມຄິດເຫັນຕໍານິວິຈານບັນດານະໂຍບາຍຂອງລັດຖະບານ.

ການຈັບຕົວຄັ້ງຕ່າງໆທີ່ສໍາຄັນແລະການຫາຍຕົວໄດ້ພາໃຫ້ເກີດບັນຍາກາດທີ່ເປັນຕາຢ້ານກົວສໍາລັບການປຶກສາຫາລື. ອີງຕາມການລາຍງານຕ່າງໆ ທ່ານ ສົມພອນ ພິມມະສອນ, ທ່ານ ສຸກັນ ໄຈທັດ ແລະ ທ່ານ ລອດຄໍາ ທໍາມະວົງ ໄດ້ຖືກກັກຂັງ ມາແຕ່ຕົ້ນປີ 2016 ແລະ ກໍາລັງຖືກລົງໂທດຈໍາຄຸກເປັນໄລຍະ 20 ປີ ຍ້ອນ “ການທໍລະຍົດ” ຕໍ່ຊາດ, “ການຂົນຂວາຍຕໍ່ຕ້ານ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ,” ແລະ “ການເຕົ້າໂຮມຄົນເພື່ອກໍ່ຄວາມບໍ່ສະຫງົບໃນສັງຄົມ” ຍ້ອນການເຜີຍແຜ່ຂໍ້ມູນທາງ Facebook ທີ່ໄດ້ວິຈານ ກ່ຽວກັບການສໍ້ລາດບັງຫຼວງ, ການຕັດໄມ້ທໍາລາຍປ່າແລະ ການລະເມີດສິດທິມະນຸດ.[124]ໃນປີ 2017 ຕໍາຫຼວດໄດ້ກັກຂັງ ຊາວບ້ານ 14 ຄົນ ຢູ່ບ້ານ ເຢີບ (Yeup) ໃນເມືອງທ່າແຕງ, ແຂວງເຊກອງ ໃນນັ້ນລວມມີ ເດັກຊາຍ ໜຶ່ງຄົນ ແລະ ເດັກຍິງ ໜຶ່ງຄົນ , ທັງສອງ ອາຍຸ 15 ປີ ຍ້ອນວ່າພວກເຂົາໄດ້ຕັດຕົ້ນຢາງພາລາຢູ່ດິນທີ່ໄດ້ຖືກກ່າວຫາວ່າມີການສໍ້ລາດບັງຫຼວງ ແລະ ການໃຫ້ສໍາປະທານດິນແກ່ບໍລິສັດທີ່ຄົນຫວຽດນາມເປັນເຈົ້າຂອງ ຊື່ວ່າ ບໍລິສັດຢາງພາລາມິດຕະພາບລາວ-ຫວຽດນາມ. ໃນຂະນະທີ່ຊາວບ້ານ ສີ່ຄົນໄດ້ຖືກປ່ອຍຕົວຈາກການກັກຂັງ, ໜຶ່ງ ຄົນໄດ້ເສຍຊີວິດໃນສະຖານທີ່ກັກຂັງ ແລະ ຍັງມີ ເກົ້າ ຄົນທີ່ຍັງຢູ່ໃນສະຖານທີ່ກັກຂັງ ໂດຍຍັງບໍ່ທັນມີການດໍາເນີນຄະດີ.[125]ທ່ານບຸນທັນ ທໍາມະວົງ ໄດ້ຖືກກັກຂັງ ມາແຕ່ປີ 2015 ຍ້ອນໄດ້ເອົາຂໍ້ມູນເຜີຍແຜ່ທາງ Facebook ແລະ ມີເນື້ອຄວາມທີ່ຖືກກ່າວຫາວ່າ “ເປັນການຕໍານິວິຈານແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານ.”[126] ໃນປີ 2015 ເຈົ້າໜ້າທີ່ໄດ້ກັກຂັງພະນັກງານທ່ານໜຶ່ງຂອງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງຍ້ອນຜູ້ກ່ຽວໄດ້ເຜີຍແຜ່ຂໍ້ມູນລົງທາງສື່ສັງຄົມອອນລາຍເລື່ອງຄວາມຂັດແຍ່ງກ່ຽວກັບການສໍາປະທານດິນທີ່ອໍານາດການປົກຄອງທ້ອງຖິ່ນໄດ້ໃຫ້ນັກລົງທຶນຈີນສໍາປະທານ.[127]

ອີງຕາມການລາຍງານຕ່າງໆ ໂຊກຊະຕາ ແລະ ທີ່ຢູ່ຂອງຄົນຢ່າງໜ້ອຍ 14 ຄົນທີ່ໄດ້ຫາຍຕົວໄປໃນລະຫ່າງປີ 2007 ຫາ 2018 ນັ້ນແມ່ນຍັງບໍ່ທັນຮູ້. ທ່ານ ສົມບັດ ສົມພອນ, ຜູ້ນໍາທີ່ຫ້າວຫັນຂອງອົງການຈັດຕັ້ງຕ່າງໆ ພາກປະຊາສັງຄົມ, ບໍ່ໄດ້ຖືກພົບເຫັນເປັນເວລາ ຫຼາຍກວ່າຫົກປີແລ້ວ ຫລັງຈາກໄດ້ຫາຍຕົວໄປໃນປ້ອມຕໍາຫຼວດແຫ່ງໜຶ່ງໃນນະຄອນວຽງຈັນໃນປີ 2012.[128] ເກົ້າຄົນໄດ້ຖືກກັກຂັງໃນປີ 2009 ຍ້ອນພວກເຂົາໄດ້ວາງແຜນການປະທ້ວງແບບສັນຕິເພື່ອປະຊາທິປະໄຕ.[129]ທ່ານ ສົມພອນ ຂັນຕິສຸກ ໄດ້ຖືກພາຫາຍຕົວໄປໃນປີ 2007 ໂດຍມີຜູ້ຊາຍນຸ່ງເຄື່ອງແບບຕໍາຫຼວດທີ່ໄດ້ຢຸດລາວໃຫ້ຈອດລົດແຄມທາງ ແລ້ວ ເອົາລາວຂຶ້ນລົດ ແບບ SUV ໄປ.ຄົນໄທ ຫ້າຄົນ ທີ່ແມ່ນຄົນໃນລາດຊະວົງຂອງໄທ ທີ່ດໍາລົງຊີວິດໃນ ສປປ ລາວເຊິ່ງພວກເຂົາເປັນຜູ້ວິຈານ ໄດ້ຫາຍຕົວໄປໃນສະພາບທີ່ເປັນຕາສົງໄສ ແລະ ຕໍ່ມາໄດ້ຮູ້ແນ່ນອນວ່າ ສອງຄົນໃນຈໍານວນນັ້ນໄດ້ເສຍຊີວິດແລ້ວ.[130]

---

[124]A/HRC/WGAD/2017/61. Available at:https://documents-dds-ny.un.org/doc/UNDOC/GEN/G17/287/98/PDF/G1728798.pdf?OpenElement
[125]International Federation for Human Rights (FIDH) and Lao Movement for Human Rights, *Joint Submission prepared for the initial periodic report of Lao PDR, 121st session of the United Nations Human Rights Committee (CCPR) (11-12 July 2018)*, (November 2018), available at: https://tbinternet.ohchr.org/_layouts/treatybodyexternal/Download.aspx?symbolno=INT%2fCCPR%2fICO%2fLAO%2f28330&Lang=en
[126] FIDH - International Federation for Human Rights and Lao Movement for Human Rights (LMHR) “Update for the 9th European Union (EU)-Laos Human Rights Dialogue, March 7, 2019, ohchr.org/Documents/Issues/EPoverty/Lao/FIDH.pdf.
[127] Radio Free Asia, “Lao Whistleblower Detained For Publishing Concession Document Online,” July 6, 2017, https://www.rfa.org/english/news/laos/whistleblower-07062015141229.html.
[128] Sombath Somphone, https://www.sombath.org/en/.
[129] FIDH - International Federation for Human Rights and Lao Movement for Human Rights (LMHR) “Update for the 9th European Union (EU)-Laos Human Rights Dialogue, March 7, 2019, ohchr.org/Documents/Issues/EPoverty/Lao/FIDH.pdf.
[130] FIDH - International Federation for Human Rights and Lao Movement for Human Rights (LMHR) “Update for the 9th European Union (EU)-Laos Human Rights Dialogue, March 7, 2019, ohchr.org/Documents/Issues/EPoverty/Lao/FIDH.pdf.

ຂ້າພະເຈົ້າຍັງເປັນຫ່ວງສະພາບການຂອງຄົນທຸກຍາກຜູ້ທີ່ຖືກຈຳຄຸກ. ຂ້າພະເຈົ້າໄດ້ຮັບລາຍງານວ່າມີການຈ່າຍເງິນບໍ່ເປັນທາງການ ຊຶ່ງແມ່ນ "ຄ່າອອກຄຸກ" ໝາຍຄວາມວ່ານັກໂທດຜູ້ໃດທີ່ບໍ່ສາມາດຈ່າຍເງິນດັ່ງກ່າວແມ່ນຢູ່ຄຸກດົນກວ່າໄລຍະປະຕິບັດໂທດ. ໃນປີ 2011 ອົງການ ສິດທິມະນຸດ (Human Rights Watch) ໄດ້ພົບເຫັນວ່າເຈົ້າໜ້າທີ່ໄດ້ໃຊ້ສູນປິ່ນປົວ ແລະ ຟື້ນຟູຜູ້ຕິດຢາເສບຕິດ ສົມສະຫງ່າ ໃນນະຄອນວຽງຈັນ ເປັນບ່ອນ "ເຕົ້າໂຮມຢູ່" ຂອງຄົນຕິດຢາເສບຕິດ, ຄົນຂໍທານ, ຄົນບໍ່ມີທີ່ຢູ່ອາໄສ, ເດັກຂ້າງຖະໜົນ ແລະ ຄົນພິການທາງມັນສະໝອງ.[131]

ລັດຖະບານຍັງຈຳກັດຢ່າງເຂັ້ມງວດຕໍ່ບັນດາອົງການຈັດຕັ້ງພາກປະຊາສັງຄົມ ແລະ ຍັງໄດ້ຄວບຄຸມການເຮັດວຽກຂອງອົງການຈັດ ເຫລົ່ານີ້. ດຳລັດວ່າດ້ວຍສະມາຄົມ ເລກທີ 236 ທີ່ໄດ້ອອກໃນປີ 2017,ເຊິ່ງປ່ຽນແທນດຳລັດສະບັບກ່ອນທີ່ອອກໃນປີ 2009, ເປັນການເພີ່ມສິດອຳນາດໃຫ້ແກ່ລັດຖະບານໃນການຫ້າມການດຳເນີນກິດຈະກຳຕ່າງໆຂອງບັນດາສະມາຄົມທີ່ບໍ່ຫວັງຜົນກຳໄລ, ການຍຸບສະມາຄົມ ຫລື ການຫ້າມເຄື່ອນໄຫວກິດຈະກຳຂອງບັນດາສະມາຄົມແລະ ການສັ່ງຟ້ອງສະມາຄົມ ຫລື ສະມາຊິກຂອງ ພວກເຂົາ[132]ໃນຄະດີທາງອາຍາ ພາຍໃຕ້ກົດໝາຍແລະ ຂະບວນການອະນຸມັດການຂຶ້ນທະບຽນແມ່ນໃຊ້ເວລາ 165 ວັນຈຶ່ງສຳເລັດ. ມີບຸກຄົນທ່ານໜຶ່ງໄດ້ກ່າວວ່າວິທີການຂອງລັດຖະບານກໍ່ຄື "ພວກເພິ່ນບໍ່ຈຳເປັນຕ້ອງຈັບຕົວເຈົ້າ. ມີແຕ່ວ່າເຈົ້າຈະບໍ່ໄດ້ຮັບອະນຸມັດ ໃຫ້ເຄື່ອນໄຫວ."

ຄົນທຸກຍາກທີ່ເຄີຍໄດ້ຮ້ອງຮຽນບັນຫາຕ່າງໆເປັນຕົ້ນແມ່ນການຍຶດຄອງທີ່ດິນ ຫລື ການຍົກຍ້າຍບ້ານໂດຍບໍ່ໄດ້ຮັບການຊົດເຊີຍ ຢ່າງພຽງພໍ ມີທາງເລືອກໜ້ອຍ ໃນການສະເໜີເພື່ອແກ້ໄຂບັນຫາຂອງພວກເຂົາ. ເຖິງແມ່ນວ່າຈະມີກົດໝາຍປົກປ້ອງສິດທິຂອງ ພວກເຂົາໃນດ້ານຫລັກການແລ້ວກໍ່ຕາມ ແຕ່ວ່າຄວາມບໍ່ເຂັ້ມງວດໃນການປະຕິບັດກົດໝາຍພາໃຫ້ພວກເຂົາບໍ່ໄດ້ຮັບການແກ້ໄຂ. ຂ້າພະເຈົ້າຍັງບໍ່ທັນເຫັນຫລັກຖານທີ່ວ່າປະຊາຊົນສາມາດຍື່ນເລື່ອງເຫລົ່ານີ້ຕໍ່ລະບົບຍຸຕິທຳ.

ຂ້າພະເຈົ້າໄດ້ເຫັນວິທີການຂອງລັດຖະບານດ້ວຍຕົວຂ້າພະເຈົ້າເອງເຊິ່ງເຊິ່ງແມ່ນເວລາທີ່ລັດຖະບານໄດ້ຂັດຂວາງຢ່າງຈິງຈັງຕໍ່ການ ສະເໜີຂອງຂ້າພະເຈົ້າເພື່ອໃຫ້ຂ້າພະເຈົ້າເຄື່ອນໄຫວໄດ້ຢ່າງເປັນອິດສະຫຼະ ໃນເວລາເຂົ້າມາປະເທດເພື່ອວ່າຂ້າພະເຈົ້າຈະໄດ້ໄປ ຢ້ຽມຢາມແຂວງອັດຕະປື. ເຈົ້າໜ້າທີ່ຫຼາຍທ່ານໄດ້ພະຍາຍາມຕິດຕາມການສົນທະນາສ່ວນຕົວຂອງຂ້າພະເຈົ້າຫຼາຍຄັ້ງເຊິ່ງຂັດກັບ ເງື່ອນໄຂຂອງການມາເຮັດວຽກພາຍໃນປະເທດຂອງຜູ້ລາຍງານພິເສດ. ມີຫຼາຍຄັ້ງຂ້າພະເຈົ້າໄດ້ເຫັນວ່າມີພະນັກງານຂອງລັດຫຼາຍ ທ່ານໄດ້ເຂົ້ານັ່ງຢູ່ກອງປະຊຸມແລະຈົດບັນທຶກເນື້ອໃນການສົນທະນາສ່ວນຕົວຂອງຂ້າພະເຈົ້າກັບຊາວບ້ານ. ໃນເວລາປະເຊີນໜ້າ ກັນ ເຈົ້າໜ້າທີ່ຂັ້ນກະຊວງຫຼາຍທ່ານໄດ້ໃຫ້ຄຳອະທິບາຍແບບແປກໆ, ທຳອິດບອກວ່າເປັນການປົກປ້ອງຂ້າພະເຈົ້າ ແລະຈາກນັ້ນມີ ເຈົ້າໜ້າທີ່ຂັ້ນກະຊວງອີກສີ່ທ່ານທີ່ໄດ້ທຳທ່າເວົ້າວ່າ "ມາທ່ຽວຊົມທິວທັດທຳມະຊາດ" ໃນບ້ານຊົນນະບົດແຫ່ງໜຶ່ງເຊິ່ງແມ່ນເວລາ ດຽວທີ່ຂ້າພະເຈົ້າໄປຢ້ຽມຢາມ ແລະ ສຸດທ້າຍກໍ່ໄດ້ເວົ້າວ່າການຕິດຕາມກໍ່ເພື່ອຮັບປະກັນຄວາມຊັດເຈນຂອງການແປພາສາຂອງ ນາຍພາສາຂອງຂ້າພະເຈົ້າ.

ວິທີການປະຕິບັດຂອງລັດຖະບານໄດ້ຮັບຜົນເປັນຢ່າງດີຕໍ່ການຄວາມຄຸບການສະແດງຄວາມຄິດເຫັນ ແລະ ການຄວບຄຸມສະພາບ ການໃນຂະນະທີ່ຫລີກເວັ້ນການຄວາມອັບອາຍໃນວົງກວ້າງໃນລະດັບສາກົນ. ປະຊາຊົນທີ່ຂ້າພະເຈົ້າໄດ້ພົບ, ແມ່ນກະທັ້ງແຕ່ຜູ້ທີ່ ດຳລົງຊີວິດໃນສະພາບຄວາມຫຍຸ້ງຍາກຫຼາຍທີ່ສຸດ ມັກເວົ້າກັບຂ້າພະເຈົ້າວ່າ ພວກເຂົາບໍ່ກ້າຫານໃນການສະເໜີສະພາບການຂອງ ພວກເຂົາຕໍ່ລັດຖະບານ ແລະ ເຖິງວ່າໄດ້ສະເໜີ ກໍ່ບໍ່ຂຶ້ນກາຍຂັ້ນເມືອງ. ແຕ່ວ່າວິທີການນີ້ເຮັດໃຫ້ປະຊາຊົນບໍ່ພໍໃຈ, ເຮັດໃຫ້ປະເທດ

[131]Human Rights Watch, "Somsanga's Secrets: Arbitrary Detention, Physical Abuse, and Suicide inside a Lao Drug Detention Center," October 11, 2011, https://hrw.org/report/2011/10/11/somsangas-secrets/arbitrary-detention-physical-abuse-and-suicide-inside-lao-drug.
[132] Human Rights Watch, "Joint Letter to the Lao Government Re: Decree on Associations," December 17, 2017, https://www.hrw.org/news/2017/12/17/joint-letter-lao-government-re-decree-associations.

ບໍ່ໄດ້ຮັບການປະກອບຄຳເຫັນຂອງປະຊາຊົນ ແລະ ກົດກັ້ນຄົນລາວລຸ້ນໃໝ່ໃນການຊອກຫາວິທີການແກ້ໄຂບັນຫາທີ່ເປັນສິ່ງທ້າທາຍຕ່າງໆທີ່ປະເທດຊາດພວມປະເຊີນຢູ່.

## ๘. ວົງສາຄະນາຍາດສາກົນ

ວົງສາຄະນາຍາດສາກົນໄດ້ມີສ່ວນຮ່ວມຢ່າງເລິກເຊິ່ງໃນການພະຍາຍາມແກ້ໄຂຄວາມທຸກຍາກໃນ ສປປ ລາວ ໂດຍໃຫ້ທຶນສະໜັບສະໜູນຢ່າງຫຼວງຫຼາຍຜ່ານໂຄງການຕ່າງໆທີ່ຈັດຕັ້ງປະຕິບັດໂດຍພາກສ່ວນລັດຖະບານ ແລະ ອົງການພາກປະຊາສັງຄົມ ແລະ ໃຫ້ຄຳແນະນຳແກ່ລັດຖະບານກ່ຽວກັບວິທີການບັນລຸຜົນໃນການພັດທະນາແບບຍືນຍົງ. ດັ່ງນັ້ນ ການພິຈະລະນາເງື່ອນໄຂໃນການໃຫ້ການຊ່ວຍເຫລືອ ກໍ່ກ່ຽວຂ້ອງກັບວຽກງານຂອງວົງສາຄະນາຍາດສາກົນເຊັ່ນກັນ.

ນອກຈາກນັ້ນ ວົງສາຄະນາຍາດສາກົນມີຄວາມຮັບຜິດຊອບສະເພາະໃນທຸກປະເທດເພື່ອສົ່ງເສີມບັນດາມາດຕາຖານ ແລະ ຫລັກການສາກົນ ໂດຍສະພາະແມ່ນເພື່ອປະຕິບັດສິດທິຂອງຜູ້ທຸກຍາກ, ຜູ້ດ້ອຍໂອກາດ ແລະ ຜູ້ທີ່ໄດ້ຮັບຜົນກະທົບທາງລົບຈາກບັນດາໂຄງການພັດທະນາ. ມີຄວາມສ່ຽງທີ່ວ່າບາງຄູ່ຮ່ວມພັດທະນາມີແຕ່ສຸມໃສ່ຜົນໄດ້ຮັບໃນໄລຍະສັ້ນ, ການເຮັດສຳເລັດໂຄງການ, ແລະ ການປະຕິບັດຕາມໂຄຕ້າ ເຖິງແມ່ນວ່າຕ້ອງໄດ້ຍອມຮັບສະພາບທີ່ເຫັນວ່າຍັງມີບັນຫາຢູ່. ສ່ວນຫຼາຍປະກົດວ່າຄູ່ຮ່ວມພັດທະນາໄດ້ເຮັດຕາມຮູບແບບການເຜີຍແຜ່ຂໍ້ມູນພາຍຫລັງທີ່ລັດຖະບານໄດ້ເຫັນດີແລ້ວ, ດັ່ງນັ້ນຈິ່ງເຮັດໃຫ້ປະຊາຊົນລາວບໍ່ມີໂອກາດໄດ້ຮັບຂໍ້ມູນແບບມີຄຸນຄ່າຢ່າງເປັນເອກະລາດ ແລະ ມີຈຸດປະສົງ.

ດັ່ງທີ່ໄດ້ກ່າວມາກ່ອນນີ້ ອົງການ ສປຊເອງ ໄດ້ຖືກສັງເກດຢ່າງກວ້າງຂວາງວ່າອົງການດັ່ງກ່າວປະຕິບັດໜ້າທີ່ຄືດັ່ງໄມ້ມືອັນໜຶ່ງຂອງລັດຖະບານ. ຈາກການໂອ້ລົມກັບຫຼາຍພາກສ່ວນຂ້າພະເຈົ້າໄດ້ຮັບຫຼາຍຕົວຢ່າງ ເຊິ່ງເຊິ່ງໃນນັ້ນລວມມີຄວາມພະຍາຍາມຈຳກັດການເຂົ້າຮ່ວມ ແລະ ການຈຳກັດເນື້ອໃນຂອງ "ພາກປະຊາສັງຄົມ" ໃນການເຄື່ອນໄຫວຕ່າງໆ, ການຫລີບຫລີກຈາກການປຶກສາຫາລືທີ່ຫຍຸ້ງຍາກໃນປະເດັນທີ່ລັດຖະບານຖືວ່າຫລໍ່ແຫຼມແລະ ການມອບໝາຍໜ້າທີ່ເຊິ່ງເປັນທີ່ຈະແຈ້ງວ່າມັນມີຄວາມຜິດແປກເມື່ອສົມທຽບໃສ່ຄວາມຈິງໂດຍທີ່ໄດ້ກ່າວອ້າງວ່າມີຫຼາຍສິ່ງຫຼາຍຢ່າງໄດ້ຖືກປັບປຸງດີຂຶ້ນສຳລັບພາກປະຊາສັງຄົມໃນຊຸມປີບໍ່ດົນຜ່ານມາ. ມີການກະທຳອັນໜຶ່ງທີ່ໜ້າຜິດຫວັງ ເຊິ່ງແມ່ນສັນຍານທີ່ສະແດງອອກໃຫ້ເຫັນໃນປີ 2012 ໂດຍຜູ້ປະສານງານອົງການ ສປຊ ປະຈຳລາວທີ່ເປັນຜູ້ຮ່ວມຂຽນສ່ວນໜຶ່ງຂອງຮ່າງເອກະສານ ທີ່ມີຄຳຄິດເຫັນກ່ຽວກັບການປຶກສາຫາລືແບບມີສ່ວນຮ່ວມໂດຍໄດ້ຮ່ວມຂຽນກັບທ່ານ ສົມບັດ ສົມພອນ. ຫລັງຈາກຮ່າງເອກະສານດັ່ງກ່າວໄດ້ຖືກສົ່ງໃຫ້ພາກສ່ວນຕ່າງໆ ໄດ້ຮູ້ວ່າລັດຖະບານ ສປປ ລາວ ປະຕິເສດ, ເມື່ອເປັນແນວນັ້ນ ຜູ້ປະສານອົງການ ສປຊ ປະຈຳລາວ ຕ້ອງໄດ້ເຮັດສິ່ງທີ່ຜິດປົກກະຕິຫຼາຍທີ່ສຸດໂດຍໄດ້ປະຕິເສດການຮ່ວມຂຽນຄຳຄິດເຫັນດັ່ງຂ້າງເທິງ ແລະ ໄດ້ບອກໃຫ້ບັນດາອົງການພາກປະຊາສັງຄົມຕັດມາດຕາທີ່ກ່ຽວຂ້ອງອອກຈາກເອກະສານສຳລັບເຄືອຄ່າຍການເຮັດວຽກຂອງພວກເຂົາ. ພຽງສອງເດືອນປາຍຕໍ່ຈາກນັ້ນມາ ທ່ານ ສົມບັດ ສົມພອນ ໄດ້ຫາຍຕົວ.

## ๙. ຂໍ້ແນະນຳ

ລັດຖະບານ ສປປ ລາວ ຄວນຈັດບຸລິມະສິດໃຫ້ຫຼາຍກວ່າເກົ່າໃນພາກປະຕິບັດຕົວຈິງແທນທີ່ຈະລາຍງານເປັນທິດສະດີກ່ຽວກັບການລຶບລ້າງຄວາມທຸກຍາກ ທັງນີ້ກໍ່ເພື່ອປົກປ້ອງສິດທິມະນຸດຂອງປະຊາຊົນລາວຈຳນວນຫຼາຍ ແລະ ເພື່ອເປັນສ່ວນໜຶ່ງຂອງຍຸດທະສາດການພັດທະນາແບບຍືນຍົງ ແລະ ມີປະສິດທິຜົນຫຼາຍກວ່າເກົ່າ. ບັນດານະໂຍບາຍທີ່ມີໃນປະຈຸບັນແມ່ນເນັ້ນໜັກໃສ່ໂຄງການໄຟຟ້າພະລັງນ້ຳ, ໂຄງການພັດທະນາພື້ນຖານໂຄງລ່າງ ເຊັ່ນ: ທາງລົດໄຟແລະ ການສຳປະທານທີ່ດິນ ເຊິ່ງລ້ວນແຕ່ມີຄວາມສ່ຽງຫຼາຍ ແລະ ມີຄວາມຈຳເປັນທີ່ຕ້ອງມີນະໂຍບາຍຄຸ້ມຄອງເພື່ອສົ່ງເສີມກະສິກຳແບບຍືນຍົງ, ການຜະລິດ, ການບໍລິການ ແລະ ອຸດສະຫະກຳຕ່າງໆທີ່ນຳໃຊ້ເຕັກໂນໂລຊີ. ການພັດທະນາເຫລົ່ານີ້ຮຽກຮ້ອງໃຫ້ມີກຳລັງແຮງງານທີ່ໄດ້ຮັບການສຶກສາເປັນຢ່າງດີ, ມີສຸຂະ

ພາບດີ ແລະ ມີສີມື ເຊິ່ງຕ້ອງມີການລົງທຶນແບບຍືນຍົງເຂົ້າໃນຂະແໜງສາທາລະນະສຸກ, ການສຶກສາ, ຊີວິດການເປັນຢູ່ທີ່ດີຂອງເດັກ, ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ, ການປົກປ້ອງທາງສັງຄົມ ແລະ ການລົບລ້າງຄວາມທຸກຍຸກຂອງປະຊາຊົນ ແລະ ການວ່າຈ້າງງານຢ່າງມີປະສິດທິຜົນ. ບັນດາຂໍ້ແນະນຳດັ່ງຕໍ່ໄປນີ້ແມ່ນສອດຄ່ອງກັບປະເດັນນີ້.

(i) ຄວນປັບປຸງນະໂຍບາຍດ້ານການເງິນເພື່ອຮັບປະກັນໃຫ້ມີນະໂຍບາຍການເກັບອາກອນທີ່ກ້າວໜ້າກວ່າເກົ່າ ແລະ ເພື່ອແກ້ໄຂຄວາມບໍ່ສະເໝີພາບທີ່ພວມເພີ່ມຂຶ້ນທີ່ເປັນອຸປະສັກຕໍ່ການເຕີບໂຕ. ຄວນເປີດເຜີຍຂໍ້ມູນຕໍ່ສາທາລະນະຊົນທົ່ວໄປກ່ຽວກັບການຍົກເວັ້ນອາກອນ ແລະ ພາສີຢ່າງຫຼວງຫຼາຍ ລວມທັງບັນດາໂຄງການສຳປະທານທີ່ດິນ ແລະ ເຂດເສດຖະກິດພິເສດ ແລະ ຄວນປະເມີນຜົນຄືນເພື່ອຮັບປະກັນວ່າການຍົກເວັ້ນເຫລົ່ານັ້ນມີຄວາມເຂັ້ມງວດທາງດ້ານການເງິນ ແລະ ບໍ່ໃຫ້ມີການຍົກເວັ້ນແບບໃຫ້ຜົນປະໂຫຍດແບບເຊື່ອງຊ້ອນ. ຄວນປັບປຸງການເກັບອາກອນ ແລະ ຄວນຕໍ່ຕ້ານການສໍ້ລາດບັງຫຼວງແບບຍືນຍົງ ແລະ ເພື່ອໃຫ້ໂປ່ງໃສຫຼາຍກວ່າເກົ່າເພື່ອຢຸດຕິການຮົ່ວໄຫຼຢ່າງຫຼວງຫຼາຍຂອງທຶນຮອນຂອງລັດ.

(ii) ການເກັບກຳຂໍ້ມູນຕ້ອງເປັນລັກສະນະເອກະພາບ ແລະ ເຂັ້ມງວດຢ່າງລະອຽດຫຼາຍກວ່າເກົ່າ ແລະ ຕ້ອງເອົາໃຈໃສ່ເພື່ອຮັບປະກັນໃຫ້ມີຂໍ້ມູນທີ່ສາທາລະນະຊົນທົ່ວໄປສາມາດເຂົ້າເຖິງໄດ້ຢ່າງໄວອາ ແລະ ເປັນຂໍ້ມູນທີ່ເຊື່ອຖືໄດ້. ສິ່ງນີ້ແມ່ນກ່ຽວຂ້ອງກັບຄວາມຈຳເປັນທີ່ຕ້ອງມີຄວາມໂປ່ງໃສໃຫ້ຫຼາຍຂຶ້ນໃນພາກສ່ວນລັດຖະບານເພື່ອຊ່ວຍການຕັດສິນບັນຫາທີ່ອີງໃສ່ຫລັກຖານ, ຫລຸດຜ່ອນການສໍ້ລາດບັງຫຼວງ ແລະ ສົ່ງເສີມຄວາມເຊື້ອໝັ້ນຂອງປະຊາຊົນທົ່ວໄປ.

(iii) ຄວາມສະເໝີພາບລະຫວ່າງຍິງ-ຊາຍຈະບໍ່ບັນລຸໄດ້ຖ້າຈະເອົາໃຈໃສ່ຄວາມສະເໝີພາບກັນສະເພາະແຕ່ການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງເທົ່ານັ້ນແທນທີ່ຈະຖືເປັນສິດທິມະນຸດຂອງແມ່ຍິງ. ຍັງມີທັດສະນະຈຳແນກຢ່າງຫຼວງຫຼາຍ ແລະ ຕ້ອງໄດ້ເຮັດການໂຄສະນາທີ່ມີການເຂົ້າຮ່ວມຢ່າງພ້ອມພຽງກັນ ແລະ ມີການຊີ້ນຳດ້ວຍການໃຊ້ຕົວຢ່າງເທົ່ານັ້ນຈຶ່ງຈະພາໃຫ້ມີການປ່ຽນແປງທີ່ສຳຄັນ.

(iv) ດ້ານສິດທິເດັກກໍ່ເຊັ່ນດຽວກັນ ເຊິ່ງເຊິ່ງມັກແຕ່ເບິ່ງວ່າສິດທິເດັກແມ່ນກ່ຽວຂ້ອງກັບການຂູດຮີດທາງເພດ ແລະ ການຄ້າມະນຸດເທົ່ານັ້ນ ແຕ່ວ່າບໍ່ໄດ້ເວົ້າເຖິງຄວາມກ່ຽວຂ້ອງຂອງສິດທິເດັກໃນການພັດທະນາຈິດໃຈ ແລະ ຮ່າງກາຍ ແລະ ການເຕີບໂຕຂຶ້ນດ້ວຍສຸຂະພາບດີ, ໄດ້ຮັບການສຶກສາ ແລະ ສາມາດເຂົ້າຮ່ວມຢ່າງເຕັມສ່ວນໃນຊຸມຊົນ.

(v) ຍ້ອນເຫດຜົນເຫລົ່ານີ້ ລັດຖະບານຄວນຄຳນຶງເຖິງປະເດັນສິດທິມະນຸດ. ເຖິງແມ່ນວ່າໄດ້ມີຄວາມຄືບໜ້າໃນການປະຕິບັດສິດທິມະນຸດດ້ວຍກົນໄກທີ່ເປັນທາງການແລ້ວກໍ່ຕາມ ແຕ່ວ່າໃນປະຈຸບັນ ບັນຫາກໍ່ຄືຍັງມີຄວາມຄິດທີ່ວ່າສິດທິມະນຸດເປັນສິ່ງກົດຂວາງກັບນະໂຍບາຍຂອງລັດຖະບານ. ຫຼາຍຄົນຄິດວ່າການໃຊ້ຄຳສັບນີ້ແມ່ນຖືກຫ້າມ ຍົກເວັ້ນແຕ່ການໃຊ້ຄຳສັບນີ້ໃນການປຶກສາຫາລືກັບລັດຖະບານຈາກປະເທດອື່ນ ຫລື ໃຊ້ໃນເວລາຂຽນບົດລາຍງານເຖິງ ສປຊ. ແຕ່ຢ່າງໃດກໍ່ຕາມ ກໍ່ມີການປະຕິບັດທີ່ດີຫຼາຍດ້ານກ່ຽວກັບສິດທິມະນຸດ. ຕົວຢ່າງ: ກົນໄກການສະເໜີຮ້ອງຮຽນຂອງປະຊາຊົນ ເຊິ່ງເຊິ່ງສະພາແຫ່ງຊາດກຳລັງພັດທະນາຢູ່ ທີ່ຈະພາໃຫ້ມີຄວາມເຊື່ອຖືຫຼາຍຂຶ້ນ ແລະ ມີຜົນກະທົບໃນທາງຕັ້ງໜ້າຖ້າວ່າກົນໄກດັ່ງກ່າວໄດ້ຖືກຕິດຕາມຊີ້ນຳໂດຍອົງກອນຮັບຜິດຊອບການຮ້ອງທຸກ ຫລື ສະຖາບັນແຫ່ງຊາດທີ່ເຮັດວຽກດ້ານສິດທິມະນຸດທີ່ປະຕິບັດຕາມຫລັກການແລະຂັ້ນຕອນຢ່າງເໝາະສົມ.

(vi) ລັດຖະບານຄວນຮັບຮູ້ຄວາມດ້ອຍໂອກາດຂອງປະຊາຊົນທີ່ໄດ້ຮັບຜົນກະທົບໃນທຸກພື້ນທີ່ບ່ອນທີ່ມີບັນດາຊົນເຜົ່າສ່ວນໜ້ອຍອາໄສຢູ່ເປັນສ່ວນຫຼາຍ. ປະເດັນນີ້ບໍ່ພຽງແຕ່ເປັນການລະເມີດສິດທິມະນຸດເທົ່ານັ້ນແຕ່ຍັງເປັນການພັດທະນາແບບບໍ່ທົ່ວເຖິງອີກດ້ວຍ. ຄວນທົບທວນຄືນນະໂຍບາຍສຳລັບການໃຊ້ພາສາລາວເປັນພາສາດຽວໃນການສຶກສາ ໂດຍສະເພາະແມ່ນເພື່ອຊ່ວຍນັກ

ຮຽນຜູ້ທີ່ບໍ່ໃຊ້ພາສາລາວເປັນພາສາເກີດຂອງຕົນ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດຈາກໂອກາດການສຶກສາເພື່ອສາມາດເຂົ້າເຖິງການບໍລິການດ້ານການຮັກສາສຸຂະພາບ ແລະ ສຸຂະພາບຈະເລີນພັນ ແລະ ເພື່ອເຂົ້າເຖິງລະບົບຍຸຕິທຳທີ່ມີຄວາມສຳຄັນ.

(vii) ຄວນເພີ່ມລາຍຈ່າຍຂຶ້ນໃຫ້ຫຼາຍເຂົ້າໃນວຽກງານສາທາລະນະສຸກ, ການສຶກສາ ແລະ ການປົກປ້ອງທາງສັງຄົມ ເພື່ອໃຫ້ໃກ້ຄຽງກັບມາດຕາຖານຂອງພາກພື້ນ ແລະ ເພື່ອຮັບປະກັນໃຫ້ມີການສຶກສາ ແລະ ການບໍລິການຮັກສາສຸຂະພາບທີ່ມີຄຸນນະພາບແທນທີ່ຈະສຸມໃສ່ຂະຫຍາຍອັດຕາປົກຄຸມທີ່ເປັນທາງການເທົ່ານັ້ນ.

(viii) ລັດຖະບານຄວນຮັບຮູ້ຫຼາຍຮູບການທີ່ອົງການຈັດຕັ້ງພາກປະຊາສັງຄົມສາມາດປະກອບສ່ວນສຳຄັນໄດ້ເພື່ອເຮັດໃຫ້ການກຳນົດນະໂຍບາຍໃຫ້ສອດຄ່ອງກັບຂໍ້ມູນທີ່ເປັນຈິງ, ເພື່ອປຸກລະດົມການຊ່ວຍເຫລືອ ແລະ ເພື່ອໃຫ້ຄວາມຮູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ປະຊາຊົນ ແລະ ບໍ່ພຽງແຕ່ຈະປະຕິບັດຕາມນະໂຍບາຍຂອງລັດຖະບານພຽງຢ່າງດຽວ. ຄວນທົບທວນຄືນບັນດານະໂຍບາຍທີ່ເຂັ້ມງວດຫຼາຍທີ່ມີຢູ່ໃນປະຈຸບັນໂດຍປຶກສາຫາລືກັບກັບທຸກພາກສ່ວນທີ່ກ່ຽວຂ້ອງ. ເພື່ອສະແດງໃຫ້ເຫັນເຈຕະນາດີ ແລະ ເພື່ອແກ້ໄຂບັນຫາຄວາມບໍ່ໄວ້ວາງໃຈ, ລັດຖະບານຄວນປ່ອຍຈຳນວນປະຊາຊົນທີ່ໄດ້ຖືກກັກຂັງຢູ່ແຂວງເຊກອງຍ້ອນພວກເຂົາໄດ້ໃຊ້ຄວາມພະຍາຍາມເປັນເວລາທີ່ແກ່ຍາວກ່ຽວກັບການນຳໃຊ້ທີ່ດິນ ແລະ ອຳນວຍຄວາມສະດວກໃຫ້ມີການສືບສວນຢ່າງເປັນເອກະລາດສຳລັບສູນຫາຍຂອງ ທ່ານ ສົມບັດ ສົມພອນ, ໂດຍການປຶກສາຫາລືກັບສະມາຊິກຄອບຄົວຂອງລາວ ແລະ ການຮັບປະກັນການຈັດສັນໃຫ້ມີຊັບພະຍາກອນພຽງພໍສຳລັບການສືບສວນນີ້.

(ix) ສິດທິມະນຸດຂອງປະຊາຊົນທີ່ຖືກຜົນກະທົບໂດຍກົງຈາກການສ້າງ ແລະ ການດຳເນີນງານຂອງເຂື່ອນໄຟຟ້າພະລັງນ້ຳ ຄວນໄດ້ຮັບຄວາມເອົາໃຈໃສ່ຢ່າງເຕັມສ່ວນເຊິ່ງໃຫ້ເປັນສ່ວນໜຶ່ງຂອງການທົບທວນຄືນນະໂຍບາຍທີ່ກຳລັງດຳເນີນຢູ່ຫລັງຈາກເຂື່ອນແຕກຢູ່ແຂວງອັດຕະປື. ຄວນຊອກຫາວິທີການເພື່ອໃຫ້ພາກເອກະຊົນທີ່ໄດ້ເຂົ້າຮ່ວມການໃນຂະແໜງພະລັງງານໄຟຟ້າພະລັງນ້ຳໃຫ້ມີຄວາມຮັບຜິດຊອບຢ່າງເຕັມສ່ວນຕໍ່ຜົນກະທົບບໍ່ດີທີ່ເກີດຂຶ້ນກັບປະຊາຊົນຜູ້ທີ່ໄດ້ຮັບເຄາະຮ້າຍ. ໂດຍສະເພາະ, ຄວນມີການທົບທວນໂດຍຜູ້ທົບທວນທີ່ມີອິດສະລະເພື່ອທົບທວນຄືນສະພາບຂອງທຸກຄົນທີ່ໄດ້ຖືກຍົກຍ້າຍຫລັງຈາກເຫດການອັດຕະປື ແລະ ຜູ້ທີ່ກຳລັງດຳລົງຊີວິດຢູ່ໃນສະພາບທີ່ທຸກຍາກລຳບາກຫຼາຍທີ່ສຸດ ແລະ ກຳລັງມີຄວາມບໍ່ແນ່ນອນຢ່າງຫຼວງຫຼາຍທີ່ເກີດມາຈາກການປຶກສາຫາລືທີ່ບໍ່ທົ່ວເຖິງ, ການຊົດເຊີຍຄວາມເສຍຫາຍທີ່ຊັກຊ້າ ແລະ ໂອກາດບໍ່ພຽງພໍໃນການດຳລົງຊີວິດ. ຄວນໃຫ້ຄຳປຶກສາ, ໂດຍສະເພາະແມ່ນໃຫ້ຄຳປຶກສາແກ່ແມ່ຍິງທີ່ຊີວິດຂອງພວກເຂົາໄດ້ຖືກຫັນປ່ຽນ ແລະ ຜູ້ທີ່ໄດ້ຮັບເຄາະຮ້າຍຈາກຄວາມບໍ່ໝັ້ນຄົງຢ່າງຫຼວງຫຼາຍຢູ່ໃນສູນພັກເຊົາຊົ່ວຄາວທີ່ພວກເຂົາໄດ້ຖືກຍົກຍ້າຍເຂົ້າໄປຢູ່.

(x) ການປັບປຸງກົດໝາຍວ່າດ້ວຍທີ່ດິນທີ່ກຳລັງດຳເນີນຢູ່ໃນປະຈຸບັນຄວນເອົາໃຈໃສ່ຄວາມສຳຄັນໃນການຮັບຮູ້ສິດນຳໃຊ້ທີ່ດິນລວມໝູ່. ການເຄົາລົບສິດນຳໃຊ້ທີ່ດິນຂອງປະຊາຊົນທີ່ດຳລົງຊີວິດໃນເຂດທີ່ຖືກຈັດສັນເປັນ ເຂດ "ປ່າໄມ້" ແລະຊອກຫາວິທີການແກ້ໄຂສິ່ງທ້າທາຍກ່ຽວກັບການຖາງປ່າເຮັດໄຮ່ທີ່ຮັບຮູ້ສິດໃນການດຳລົງຊີວິດຂອງປະຊາຊົນທີ່ມີອາຊີບເຮັດໄຮ່. ລັດຖະບານຄວນອຳນວຍຄວາມສະດວກເພື່ອທົບທວນຄືນຮູບແບບກະສິກຳແບບມີສັນຍາເພື່ອຊອກຫາປະເດັນຕ່າງໆ ເປັນຕົ້ນແມ່ນຜົນກະທົບຕໍ່ຜົນເກັບກ່ຽວຕະຫຼອດໄລຍະສັນຍາ, ຜົນກະທົບທີ່ເກີດຈາກການຕໍ່ລອງທີ່ມີການສໍ້ລາດບັງຫຼວງ, ຄວາມເປັນເອກະພາບ ແລະ ການຈັດແຈງໃນການວາງລາຄາ.